ບົວແກ້ວ ຈະເລີນລັງສີ

# ການປະຕິວັດລາວ
# ແລະ
# ວັນນະຄະດີປະຕິວັດ

ບົວແກ້ວ ຈະເລີນລັງສີ

ບຸນສົ່ງ ແກ້ວບົວສາຍ
ສ. ສາຍບຸນມີ

# ການປະຕິວັດລາວ
# ແລະ
# ວັນນະຄະດີປະຕິວັດ

22 MAR 2010

ພິມເທື່ອທີ 2

---

ສຳນັກແລະຈຳໜ່າຍປຶ້ມແຫ່ງລັດ ສ.ປ.ປ.ລາວ

ວຽງຈັນ 1993

ຄະນະຈັດທຳເທື່ອທີ 2 ໑

ບຸນຊູ ພັນທະວີໄຊ

ພິມດີດ ນາງ ວິລາວັນ

ດັດແກ້ມາແກັດແລະຈັດໜ້າ ບຸນນອງ

ແຕ້ມໜ້າປົກ ໂດຍ: ຄຳຜັດ

ອ.ພ. .026 ./ ສ.ພ.ປ

ທ.ບ. .526. ./ ກ.ພ.ປ

ພິມທີ່ໂຮງພິມສຶກສາ

ຈຳນວນ 2000 ຫົວ

ຂະໜາດ 13×19 ຊ.ມ

ບຸນລົ່ງ ແກ້ວບົວລາຍ
ສ. ສາຍບຸນມີ

# ຄຳເຫັນຜູ້ຮຽບຮຽງ

ຊາວກວ່າປີທີ່ຜ່ານມາ, ປະເທດລາວອັນແສນຮັກແລະສວຍງາມຂອງພວກເຮົາຖືກຫລົ້ມຈົມໃນແປວໄຟຂອງສົງຄາມໂດຍແມ່ນພວກຈັກກະພັດຣຸກຮານ ແລະ ພວກຫຸ່ນຂາຍຊາດກໍ່ຂຶ້ນ ແລະ ໃນຊາວ ກວ່າປີທີ່ຜ່ານມາກໍ່ເປັນເວລາຍາວພໍຄວນ, ປະຊາຊົນລາວ ພາຍໃຕ້ ການນຳພາ ຂອງແນວລາວຮັກຊາດແຕ່ກ່ອນແມ່ນແນວລາວອິດສະຫລະ ໄດ້ດຳເນີນການຕໍ່ສູ້ກູ້ຊາດ, ຕ້ານການຣຸກຮານຂອງຈັກກະພັດອາເມລິກາ ແລະ ພວກຫຸ່ນຂາຍຊາດຢ່າງອົງອາດກ້າຫານ ແລະ ກຳລັງຍາດໄດ້ໄຊຊະນະຢ່າງລຽນຕິດ, ໃຫຍ່ຫລວງຢູ່ທຸກສະໜາມຮົບແລະທຸກໜ້າທີ່ວຽກງານ.

ບົນພື້ນຖານແນວ ທາງເສີມຂະຫຍາຍສິລະປະວັນນະຄະດີອັນ ຖືກຕ້ອງສອດຄ່ອງຂອງສູນກາງແນວລາວຮັກຊາດ; ໃນໄລຍະຊາວ ກວ່າປີທີ່ຜ່ານມາ, ວັນນະຄະດີປະຕິວັດລາວ ໄດ້ກຳເນີດແລະ ເຕີບໃຫຍ່ຢ່າງໄວວາ–ວັນນະຄະດີປະຕິວັດລາວຫາກໍ່ເກີດຂຶ້ນໃໝ່, ເພາະສະນັ້ນມັນໜຸ່ມນ້ອຍທີ່ສຸດ, ອຸດົມສົມບູນເຕັມໄປດ້ວຍລັກສະນະສູ້ຮົບ, ລັກສະ ນະຊາດ ແລະ ກ້າວໜ້າຊຶ່ງປະກອບດ້ວຍວັນນະຄະດີຫລາຍປະເພດ ທີ່ໄດ້ສ່ອງແສງ ເຖິງການປະຕິວັດຊາດ, ປະຊາທິປະໄຕຂອງລາວເຮົາດ້ວຍຮູບປະພັນ ວັນນະຄະດີ, ບັນດານັກປະພັນລາວ ໄດ້ສ່ອງແສງຢ່າງມີຊີວິດຊີວາ ແລະ ຖືກຕາມຕົວຈິງຂອງການຕໍ່ສູ້ອັນທຸກຍາກລຳ ບາກແຕ່ພິລະອາດຫານເຕັມໄປດ້ວຍຄວາມເຊື່ອໝັ້ນຂອງປະຊາຊົນ ລາວຕໍ່ໄຊຊະນະໃນຂັ້ນສຸດທ້າຍຂອງການປະຕິວັດ.

ຄົ້ນຄວ້າວັນນະຄະດີປະຕິວັດລາວ, ພວກເຮົາອາດເຂົ້າໃຈໄດ້ ສະພາບການທາງດ້ານການເມືອງທີ່ສັບສົນແລະຫຍຸ້ງຍາກຢູ່ລາວ ເຮົາພວກເຮົາຈະເຫັນແຈ້ງກຳລັງອັນແຮງຂອງປະຊາຊົນລາວຊຶ່ງ ເປັນຊາດໜຶ່ງທີ່ຮັກຫອມສັນຕິພາບ, ເປັນຊາດໜຶ່ງຄືດັ່ງນັກປະພັນຜະ ລັ່ງຄົນໜຶ່ງໄດ້ເວົ້າວ່າ: "ຊາດລາວເປັນຊາດໜຶ່ງທີ່ສຸພາບເຄົາລົບ ນັບຖືແຂກແລະຮັກຊີວິດ" ເປັນຊາດໜຶ່ງທີ່ມັກຮ້ອງລຳທຳເພງ, ມັກຊີ ວິດອັນສົດຊື່ນແລະແບບຟ້ອນລຳລ້ຽງທີ່ນິ່ມນວນເບີກບານແຕ່ໃນເມື່ອ ເວົ້າເຖິງປະເທດຊາດ, ເອກະລາດ, ປະຊາທິປະໄຕ, ອິດສະຫລະ ພາບແມ່ນເຂົາຮູ້ຈັກໜູນໃຊ້ກຳລັງ ແຮງກ້າຂອງສິນທຳ ປະຕິວັດ ເພື່ອຕ້ານປືນກັບເຫລັກກ້າ ແລະ ຄວາມໂຫດຮ້າຍສາມານ, ໄຊຊົນ ທຳຂອງການຮຸກຮານດ້ວຍການກະທຳຕົວຈິງ, ປະຊາຊົນລາວເຮົາໄດ້ອະທິບາຍໃຫ້ຊາວໂລກເຫັນແຈ້ງຄວາມເກັ່ງກ້າຂອງຕົນ ແລະ ໄດ້ຢືນຢັນແນ່ວແນ່ວ່າ: ບໍ່ມີກຳລັງອັນແຮງກ້າອັນໃດຂອງພວກລ່າເມືອງຂຶ້ນ ຜະລັ່ງໃນສະໄໝກ່ອນ ແລະ ຄວາມຮຸນແຮງຂອງພວກຮຸກຮານທີ່ ຮ້າຍກາດກ່ວາໝູ່ໃນປະຫວັດສາດຂອງມະນຸດຄືພວກຈັກກະພັດອາເມລິກາໃນເວລານັ້ນຈະເອົາຊະນະໄດ້ ຊາດລາວເຮົາທີ່ເປັນຊາດໜຶ່ງມີພົນລະເມືອງໜ້ອຍແລະບໍ່ມີອາວຸດທັນສະໄໝ.

ຄົ້ນຄວ້າວັນນະຄະດີຂອງຊາດມີບົດບາດອັນສຳຄັນເພື່ອຊຸກຍູ້ໃຫ້ວັນນະຄະດີຂອງຊາດນັ້ນເຕີບໃຫ່ຍ ອຸດົມສົມບູນ ແລະ ຈະເລີນ ກ້າວໜ້າ. ແຕ່ຄົ້ນຄວ້າວັນນະຄະດີຂອງຊາດໜຶ່ງ ໃນໄລຍະໜຶ່ງ ເປັນວຽກງານທີ່ໃຫ່ຍຫລວງໜັກໜ່ວງແລະຫຍຸ້ງຍາກ, ຮຽກຮ້ອງໃຫ້ ຈຳຕ້ອງມີເວລາຍາວພໍສົມຄວນແລະຈະຕ້ອງມີພະນັກງານທີ່ຄົ້ນຄວ້າທີ່ ມີ

ລະດັບຫລາຍພໍສົມຄວນຈຶ່ງສາມາດຄົ້ນຄ້ວາໄດ້ຢ່າງລະອຽດ.

ຍ້ອນເຫັນແຈ້ງຕໍ່ບົດບາດອັນສຳຄັນໃນການຄົ້ນຄ້ວາ ແລະ ຕີ ລາຄາຄືນກ່ຽວກັບວັນນະຄະດີຂອງຊາດ, ອີກດ້ານໜຶ່ງກໍເພື່ອຫວັງ ປະກອບສ່ວນຊຸກຍູ້ໃຫ້ວັນນະຄະດີຂອງຊາດເຕີບໃຫຍ່ແລະແຜ່ຂະ ຫຍາຍ ສະນັ້ນພວກເຮົາໄດ້ຄົ້ນຄ້ວາ ແລະຮຽບຮຽງປຶ້ມເຫລັ້ມນີ້ຂຶ້ນ.

ແຕ່ຍ້ອນລະດັບຄວາມສາມາດແລະເວລາຄົ້ນຄ້ວາຈຳກັດ, ສະ ນັ້ນ ໃນປຶ້ມເຫລັ້ມນີ້ພວກເຮົາບໍ່ສາມາດລົງເລິກເພື່ອຄົ້ນຄ້ວາທຸກດ້ານ, ທຸກ ບັນຫາໃນວັນນະຄະດີປະຕິວັດລາວໄດ້ຢ່າງລະອຽດ ແລະ ເລິກເຊິ່ງ ໃນປຶ້ມເຫລັ້ມນີ້ພວກເຮົາມີພຽງແຕ່ໝູນໃຊ້ທິດສະດີເບື້ອງຕົ້ນເພື່ອຄົ້ນ ຄ້ວາວັນນະຄະດີປະຕິວັດລາວໂດຍຜ່ານບົດເລື່ອງສັ້ນ, ບົດບັນທຶກແລະ ນາວະນິຍາຍຈຳນວນໜຶ່ງ.

ໃນປຶ້ມເຫລັ້ມນີ້ພວກເຮົາໄດ້ແບ່ງເປັນສອງພາກໃຫຍ່ຄື:

ກ. ກ່າວສັງເຂບກ່ຽວກັບປະເທດລາວ.

ຂ. ວັນນະຄະດີປະຕິວັດລາວມີເນື້ອໃນສ່ອງແສງຄວາມເປັນ ຈິງ ຢູ່ລາວ.

ຍ້ອນສະພາບຂອງປະເທດເຮົາກຳລັງຕົກຢູ່ໃນແປວໄຟສົງຄາມຮຸກ ຮານຂອງຈັກກະພັດອາເມລິກາແລະພວກທຸ່ນຊາຍຊາດກໍ່ຂຶ້ນ ແລະອີກ ດ້ານໜຶ່ງຍ້ອນປຶ້ມເຫລັ້ມນີ້ເປັນປຶ້ມເຫລັ້ມທຳອິດທີ່ໃຊ້ທິດສະດີ ເພື່ອ ຄົ້ນຄ້ວາວັນນະຄະດີ, ດັ່ງນັ້ນໃນເວລາຄົ້ນຄ້ວາແລະສັບຊ້ອນເອກ ກະ ສານ, ພວກເຮົາພົບຂໍ້ຫຍຸ້ງຍາກແລະອຸປະສັກຫລາຍຢ່າງ, ຈຸດ ໜັກ ແມ່ນເອກະສານໃຊ້ຄົ້ນຄ້ວາຍັງບໍ່ທັນພຽງພໍພວກເຮົາເຊື່ອ ແນ່ ວ່າ ຄວາມຂາດ ຕົກບົກພ່ອງຄົງຈະມີຫລາຍ; ດັ່ງນັ້ນພວກເຮົາຂໍເຊີນຊວນ

ອ້າຍເອື້ອຍນ້ອງແລະບັນດາສະຫາຍທຸກຄົນທີ່ອ່ານປຶ້ມເຫລັ້ມນີ້ຈົ່ງພ້ອມ ກັນຄົ້ນຄວ້າແລະຊ່ວຍປະກອບຄຳຄິດຄຳເຫັນ, ເພື່ອພ້ອມກັນຄົ້ນ ຄວ້າ ແລະຊຸກຍູ້ໃຫ້ວັນນະຄະດີຂອງຊາດນັບມື້ນັບເຕີບໃຫຍ່, ກ້າວຫນ້າແລະ ອຸດົມສົມບູນກ່ວາເກົ່າ.

ພວກເຮົາຂໍຂອບໃຈ ຕໍ່ຫ້ອງໂຄສະນາອົບຮົມຂອງສູນກາງຕໍ່ ທ່ານ ສີຊະນະ ສີສານ, ທ່ານມະຫາຄຳພັນ ວິລະຈິດ, ທ່ານຄຳມາ ພົມກອງ ທ່ານພະນອນ ທ່ານສົມສີ ເດຊາ ທີ່ໄດ້ຊ່ວຍເຫລືອຄຳຄິດຄຳ ເຫັນ ໃຫ້ຄວາມສະດວກແກ່ພວກເຮົາໃນເວລາທີ່ພວກເຮົາດຳເນີນ ວຽກ ງານ.

ຂໍສະແດງຄວາມຂອບໃຈລ່ວງຫນ້າ, ຄວາມສາມັກຄີແລະຄວາມຮັກ ແພງຕໍ່ບັນດາເພື່ອນນັກອ່ານຢ່າງສູງ.

ຊຳເຫນືອ 12 ຕຸລາ 1972

# ພາກ I

## ກ່າວສັງເຂບກ່ຽວກັບປະເທດລາວ

ກ) ບາງຈຸດກ່ຽວກັບພູມີສາດ:

ປະເທດລາວຕັ້ງຢູ່ທິດຕາເວັນຕົກ ຂອງແຫລມອິນດູຈີນ, ຊຶ່ງ ທັງສີ່ ທິດ ຕິດກັບຫ້າປະເທດ ທີ່ມີລະບອບການເມືອງ ແລະ ລະບອບ ສັງຄົມແຕກຕ່າງກັນ, ທາງທິດຕາເວັນອອກຕິດກັບປະເທດສາທາລະ ນະລັດສັງຄົມນິຍົມຫວຽດນາມ, ທິດເໜືອຕິດກັບປະເທດສາທາລະນະລັດປະຊາຊົນຈີນ, ທິດໃຕ້ຕິດກັບປະເທດ ກຳພູຊາແລະໄທ, ທິດຕາ ເວັນຕົກຕິດກັບປະເທດໄທ ແລະ ພະມ້າ. ທຳມະຊາດ, ພູມີປະເທດ ໄດ້ເຮັດໃຫ້ປະເທດລາວເຮົາມີບົດບາດອັນສຳຄັນ ທາງດ້ານຍຸດທະສາດການທະຫານ.

ທີ່ຕັ້ງຍຸດທະສາດ ອັນສຳຄັນ ແລະຄວາມຮັ່ງມີຂອງປະເທດ ລາວເຮົາໄດ້ເຮັດໃຫ້ ພວກລ່າເມືອງຂຶ້ນຝະລັ່ງ, ພວກຟາດສິດຍີ່ປຸ່ນ ຄາວກ່ອນ ແລະ ພວກຈັກກະພັດອາເມລິກາ ເວລານັ້ນມີຄວາມພໍໃຈຢາກຢຶດເອົາ ເປັນທີ່ຕັ້ງ ຖານທັບເພື່ອຄອບຄຸມບັນດາປະເທດ ທີ່ເປັນຫົວເມືອງຂຶ້ນ ຂອງພວກມັນໃນພາກພື້ນອາຊີອາຄະເນ ແລະກໍ່ເພື່ອຕ້ານກັບຄ້າຍສັງຄົມນິຍົມ, ເປັນຕົ້ນແມ່ນປະເທດສາທາລະນະລັດສັງຄົມ ນິຍົມຫວຽດນາມແລະປະເທດສາທາລະນະລັດປະຊາຊົນຈີນ, ບັກຟ.ດາແລດ ລັດຖະມົນຕີ ກະຊວງຕ່າງປະເທດ ຂອງອາເມລິກາ ໄດ້ສົມມຸດປະເທດລາວ "ເປັນຂໍກະແຈ ທີ່ຕັ້ງຍຸດທະສາດທົ່ວໂລກ" ຂອງອາເມ

ລິກາໃນພາກພື້ນອາຊີອາຄະເນ. ພວກມັນຢາກຢຶດເອົາລາວເປັນແປ້ນຢືນ ເພື່ອປະຕິບັດອັນທີ່ພວກມັນເອີ້ນວ່າ "ສະກັດກັ້ນການແຊກ ແຊງຂອງຄອມມູຍນິດ" ເພື່ອບຸກໂຈມຕີປະເທດສາທາລະນະລັດປະຊາທິປະໄຕຫວຽດນາມແລະປະເທດສາທາລະນະລັດປະຊາຊົນຈີນ. ທັບ ມ້າງຂະບວນ ການປະຕິວັດຢູ່ພາກໃຕ້ຫວຽດນາມ, ປະເທດກຳພູຊາ, ປະເທດໄທ; ປາບປາມຂະບວນການຕໍ່ສູ້ປົດປ່ອຍຊາດຂອງບັນດາປະເທດຢູ່ພາກພື້ນອາຊີອາຄະເນສະນັ້ນສວຍໂອກາດ ທີ່ພວກລ່າເມືອງຂຶ້ນຝະລັ່ງຖືກປະລາໄຊຢູ່ອິນດູຈີນ ແລະ ອ່ອນໂຊສຸດໂຊມລົງ, ຈັກກະພັດອາເມລິກາໄດ້ໂດດເຂົ້າມາແຊກແຊງ ແລະຮຸກຮານປະເທດລາວ ແລະບັນດາປະເທດຢູ່ແຫລມອິນດູຈີນ.

ປະເທດລາວເຮົາ ເປັນປະເທດທີ່ມີພູຜາປ່າດົງ ຕຶບຫນາ ແລະ ກ້ວາງໃຫຍ່ຮູບພູມີປະເທດສັບສົນ. ອາດສາມາດແບ່ງອອກເປັນ ສາມພາກຕ່າງກັນຄື :

ທາງພາກເຫນືອລາວ, ສ່ວນຫລາຍແມ່ນພູຜາປ່າດົງ. ຢູ່ລະ ຫວ່າງກາງຂອງພາກເຫນືອມີຮ່ອມພູນ້ອຍ, ພູພຽງຕົວພັນແລະຊຽງ ຂວາງ (ສູງປະມານ 1.00ແມັດ). ອາກາດອຸ່ນເຢັນດີ. ມີທົ່ງຫຍ້າ ກ້ວາງຂວາງ, ຂຽວງາມ, ສຳລັບໃນການລ້ຽງສັດໄດ້ສະດວກດີ, ທາງ ພາກກາງມີສາຍພູຫລວງ ຊຶ່ງເປັນຊາຍແດນທຳມະຊາດລະຫວ່າງປະເທດລາວ ກັບປະເທດຫວຽດນາມ. ລຽບຕາມແຄມແມ່ນ້ຳຂອງມີທົ່ງ ພຽງກ້ວາງຂວາງ ແລະ ອຸດົມສົມບູນ. ທາງພາກໃຕ້ມີພູພຽງເຊະ ໂອຍແລະບໍລະເວນ, ທີ່ມີຄຸນຄ່າໃນການປູກຝັງແລະລ້ຽງສັດ.

ແມ່ນ້ຳລຳເຊຢູ່ປະເທດລາວເຮົາສະຫລັບສັບຊ້ອນແລະແບອອກ ຄື

ກັນກັບວີ ແມ່ນ້ຳຂອງເປັນແມ່ນ້ຳທີ່ໃຫ່ຍກ່ວາໝູ່ໄຫລແຕ່ເໜືອ ຕະຫລອດໃຕ້, ປຽບ ເໝືອນສາຍເລືອດອັນ ສຳຄັນຂອງປະເທດ ລາວເຮົາ. ສ່ວນສາຍນ້ຳລຳເຊລ້ວນແລ້ວ ໄຫລແຕ່ທາງພາກຕາເວັນ ອອກສ່ຽງເໜືອລົງ ທາງພາກຕາເວັນຕົກສ່ຽງໃຕ້. ປ່ອງໃສ່ແມ່ນ້ຳ ຂອງ ຍ້ອນຮູບພູມີປະເທດສ່ວນຫລາຍແມ່ນພູຜາປ່າດົງ, ເພາະສະນັ້ນ ຕາມແມ່ນ້ຳລຳເຊມີແກ້ງແລະຕາດຫລາຍແຫ່ງທີ່ມີຄຸນຄ່າໃນການສ້າງ ສາໂຮງຈັກໄຟຟ້ານ້ຳຕົກ. ແມ່ນ້ຳຂອງ, ນ້ຳຂຽວ, ສົດໃສ, ເໝືອນ ດັ່ງນາງສາວລາວທີ່ນຸ້ມນວນ ແລະໃຈດີ, ແມ່ນ້ຳຂອງຍັງເປັນບ່ອນທີ່ ໃຫ້ການດຳເນີນແລະແຜ່ຂະຫຍາຍສິລະປະວັນນະກຳແຫ່ງຊາດ, ຄືເມືອງໃຫ່ຍຫລາຍເມືອງຄື: ຫລວງພະບາງ, ວຽງຈັນ, ທ່າແຂກ, ສະຫວັນນະເຂດ, ປາກເຊ.... ລ້ວນແລ້ວແຕ່ຕັ້ງລຽບແຄມຂອງ.

ດິນຟ້າອາກາດຢູ່ປະເທດລາວອາດແບ່ງເປັນສອງລະດູຢ່າງ ຈະແຈ້ງຄື: ລະດູຝົນ ແຕ່ເດືອນຫ້າເຖິງເດືອນສິບເອັດຊຶ່ງເປັນລະດູເຮັດນາຂອງປະຊາຊົນລາວເຮົາ. ແມ່ນ້ຳລຳເຊແລະທົ່ງນາເຕັມໄປ ດ້ວຍນ້ຳ. ແຕ່ແລ້ວພັດຖືກຕາກແຫ້ງແຕ່ເດືອນສິບເອັດເຖິງເດືອນສີ່, ຊຶ່ງເປັນລະດູແລ້ງ, ລະດູເກັບກ່ຽວຂອງປະຊາຊົນ, ພິເສດແມ່ນພູ ພຽງຊຽງຂວາງແລະພູພຽງບໍລະເວນ, ຊຶ່ງຄົນທັງຫລາຍເຄີຍຍ້ອງວ່າອາກາດເຢືອກເຢັນ, ສົດໃສຕະຫລອດປີ, ປ່າໄມ້ລາວມີຕົ້ນໄມ້ຫລາຍ ຊະນິດທີ່ມີຄຸນຄ່າສູງຄື: ໄມ້ສັກ, ໄມ້ຍູງ, ໄມ້ຍາງ, ໄມ້ດູ່, ໄມ້ແກ່ນລົມ, ໄມ້ແປກ ແລະອື່ນໆ... ມີຕົ້ນໄມ້ເຮັດຮາກຢາພື້ນເມືອງຫລາຍຊະນິດ ພິເສດແມ່ນຂີ້ຄັ້ງ, ມີປະມານ 70% ປະລິມານການຜະລິດຂີ້ຄັ້ງຢູ່ ທົ່ວໂລກ. ປະຊາຊົນລາວຍັງໄດ້ປູກຕົ້ນໄມ້ອຸດສາຫະກຳຫລາຍຊະນິດ ຄື:

ຕົ້ນຢາຝິ່ນ, ແຕ່ລະປີສາມາດຜະລິດໄດ້ຫລາຍສິບໂຕນ, ຕົ້ນ ຢາສູບ, ຝ້າຍ, ກາເຟ, ໝາກພິກໄທ, ຕົ້ນມອນ ແລະອື່ນໆ...ການລ້ຽງ ສັດ ກໍ່ໄດ້ແຜ່ຂະຫຍາຍພໍສົມຄວນ.

ປະເທດລາວເຮົາມີບໍ່ໂລຫະທາດຢ່າງຫລວງຫລາຍທີ່ຕ້ອງການໃນ ການສ້າງສາປະເທດຊາດ. ເປັນຕົ້ນແມ່ນທາງດ້ານອຸດສາຫະກຳ. ບໍ່ ໂລຫະທາດຕ່າງໆຄື: ບໍ່ຖ່ານຫີນ (ຢູ່ຜົ້ງສາລີ, ຊຽງຂວາງ, ຊຳເໜືອ ວຽງຈັນ); ບໍ່ກົ່ວບໍ່ຊືນ (ມີຢູ່ຊຽງຂວາງ, ຄຳມ່ວນ); ບໍ່ຄຳ (ມີຢູ່ ຫລວງ ພະບາງ, ຊຽງຂວາງ, ວຽງຈັນ, ຄຳມ່ວນ, ອັດຕະປື), ແລະອື່ນໆ... ບໍ່ໂລຫະທາດຕ່າງໆເຫລົ່ານີ້, ສ່ວນຫລວງຫລາຍແມ່ນຍັງບໍ່ທັນໄດ້ ຂຸດ ຄົ້ນ, ເບິ່ງມາແລ້ວ ປະເທດລາວເຮົາແມ່ນຮັ່ງມີທີ່ສຸດແລະມີຄວາມສາ ມາດສ້າງສາເສດຖະກິດໄດ້ຢ່າງເຂັ້ມແຂງ, ແຕ່ຍ້ອນຕົກຢູ່ໃນການປົກ ຄອງພວກຈັກກະພັດພາຍນອກ, ດັ່ງນັ້ນເສດຖະກິດຂອງລາວເຮົາບໍ່ໄດ້ ສ້າງສາ, ປະຊາຊົນລາວເຮົາມີເຖິງ ໙໙% ແມ່ນຊາວໄຮ່ນາ.

ພົນລະເມືອງລາວມີຢູ່ປະມານ ສາມລ້ານຄົນ ແລະແບ່ງ ເປັນ ຫລາຍຊົນເຜົ່າ, ໃນນັ້ນມີສາມຊົນຊາດເປັນຕົ້ນກໍຄື: ລາວລຸ່ມ, ລາວສູງ ແລະລາວເທິງ ປະຊາຊົນລາວສ່ວນຫລາຍແມ່ນຖືສາສະໜາພຸດ ສາ ສະໜາພຸດໄດ້ກາຍເປັນສາສະໜາປະຈຳຊາດແລະມີບົດບາດອັນສຳ ຄັນ ໃນຊີວິດແຫ່ງຈິດແລະແນວຄິດຂອງປະຊາຊົນທົ່ວປະເທດ. ບ່ອນໃດກໍ່ມີ ວັດວາອາຮາມແລະທາດຕ່າງໆ ຈຶ່ງເປັນບ່ອນຍອດສີໄມ້ລາຍມື ສິລະ ປະກໍ່ສ້າງລວມສູນ, ໂດຍແມ່ນປະຊາຊົນລາວຜູ້ອອກແຮງງານເປັນ ຜູ້ ປະດິດຄິດສ້າງຂຶ້ນ, ບັນດາຮ່ອງຮອຍວັດຖຸບູຮານທີ່ລືຊື່ມີຄື: ໄຫຫີນ ( ຢູ່ ທົ່ງໄຫຫີນ-ຊຽງຂວາງ), ວັດພູ ຈຳປາສັກ, ທາດຈອມສີ (ຫລວງ ພະ

ບາງ) ທາດຫລວງວຽງຈັນ, ທາດອິງຮັງ (ຢູ່ສະຫວັນນະເຂດ) ແລະບັນ
ດາວັດຄື: ວັດສີສະເກດ, ວັດອົງຕື້, ວັດພະແກ້ວແລະອື່ນໆ...ບັນ ດາ
ທາດ ແລະວັດວາອາຣາມໄດ້ກາຍເປັນໃຈກາງຂອງວັດທະນະ ທຳ
ລາວ. ເປັນບ່ອນທີ່ປະຊາຊົນລາວ ຈັດຕັ້ງວັນບຸນນະໂຫລານຕ່າງໆແຕ່
ຄາວກ່ອນກໍ່ຄືໃນປັດຈຸບັນ, ວັດຍັງເປັນໂຮງຮຽນສອນວັດທະນະທຳ.

ຂ. ປະຫວັດສາດການຕໍ່ສູ້ຂອງປະຊາຊົນລາວ:

ປະເທດລາວ ໄດ້ສ້າງຂຶ້ນແຕ່ບູຮານນະການ, ມາເຖິງໃນສັດຕະວັດ
ທີ x/(/, ເຈົ້າຟ້າງູ່ມ ໄດ້ເຕົ້າຮວມປະເທດລາວ, ໂດຍໃສ່ຊື່ວ່າ ປະ
ເທດລ້ານຊ້າງ, ແຕ່ນັ້ນມາເຖິງ ປະຈຸບັນ, ປະເທດລາວ ໄດ້ຕົກ ຢູ່ໃນ
ຫລາຍຍຸກສະໄຫມ ທີ່ເຂັ້ມແຂງ ແລະ ຊຸດໂຊມຕ່າງກັນ. ຈຸດພິ ເສດ
ຂອງປະເທດລາວເຮົາໃນຫົກຮ້ອຍກ່ວາປີທີ່ຜ່ານມາ, ປະເທດ ລາວ
ເຮົາຖືກຕົກຢູ່ໃຕ້ການປົກຄອງຂອງສັກດີນາແລະຈັກກະພັດຣຸກ ຮານ
ໃນຫົກຮ້ອຍກ່ວາປີຜ່ານມາກໍ່ແມ່ນຫົກຮ້ອຍກ່ວາປີທີ່ປະຊາຊົນລາວ ໄດ້
ລຸກຂຶ້ນຕໍ່ສູ້ຢ່າງບໍ່ຢຸດຢັ້ງ. ຕ້ານການຮຸກຮານຂອງຕ່າງປະເທດເພື່ອປົກ
ປັກຮັກສາປະເທດຊາດບ້ານເມືອງ. ໃນຂະບວນການຕໍ່ສູ້ຂອງປະ ຊາ
ຊົນລາວພວກເຮົາອາດຈະແບ່ງອອກເປັນສາມໄລຍະຕົ້ນຕໍຄື:

ແຕ່ສັດຕະວັດທີ x/(/ ເຖິງສັດຕະວັດທີ x(// ປະຊາຊົນລາວ
ພາຍໃຕ້ການນຳພາຂອງຊົນຊັ້ນສັກດີນາພາຍໃນປະເທດ ໄດ້ດຳ ເນີນ
ການຕໍ່ສູ້ຕ້ານການແຊກແຊງຂອງພວກສັກດີນາພາຍນອກ. ຕົ້ນຕໍ ແມ່ນ
ສັກດີນາ ໄທ.

ແຕ່ວັດຕະວັດທີ x/x ຈົນເຖິງປີ 1945, ພວກລ່າເມືອງຂຶ້ນ ຝະ
ລັ່ງ ໄດ້ແຊກແຊງ, ຮຸກຮານລາວ ແລະ ພວກສັກດີນາລາວກຳລັງ ຖືກ

ຂູດໂຂນແລະຍອມຈຳນົນ ໃຫ້ແກ່ພວກລ່າເມືອງຂຶ້ນຝະລັ່ງ ປະຊາ ຊົນລາວພາຍໃຕ້ການນຳພາຂອງບັນດາເຈົ້າກົກເຈົ້າເຫລົ່າ, ວິລະບູລຸດທີ່ຮັກຊາດ ໄດ້ລຸກຂຶ້ນຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝະລັ່ງ. ເປັນຕົ້ນຢູ່ ພາກໃຕ້ແມ່ນຂະບວນການຕໍ່ສູ້ພາຍໃຕ້ການນຳພາຂອງພໍ່ກະດວດ, ອົງແກ້ວ ອົງກົມມະດຳແລະຢູ່ພາກເໜືອນຳໂດຍເຈົ້າຟ້າປັດໃຈ, ບັນດາ ຂະບວນການຕໍ່ສູ້ເຫລົ່ານີ້ເປັນການຕໍ່ສູ້ທີ່ບໍ່ມີການນຳອັນຖືກຕ້ອງແລະມີແຕ່ເກີດຂຶ້ນຢູ່ທ້ອງຖິ່ນໃດທ້ອງຖິ່ນໜຶ່ງເທົ່ານັ້ນ.

ໃນລະຫວ່າງປີ 1929 ເຖິງ 1933, ເມື່ອເສດຖະກິດຖືກ ເສດຖະໄພທົ່ວໂລກ, ພວກລ່າເມືອງຂຶ້ນຝະລັ່ງ ໄດ້ເພີ່ມເຕີມການກົດຂີ່ ຂູດຮີດປະຊາຊົນຂອງບັນດາປະເທດທີ່ເປັນຫົວເມືອງຂຶ້ນ, ຂະບວນ ການຕໍ່ສູ້ພາຍໃນປະເທດ ແລະຕ່າງປະເທດນັບມື້ນັບຂຶ້ນສູງ, ເປັນຕົ້ນແມ່ນ ພັກຄອມມູນິດ ອິນດູຈີນກຳເນີດປີ 1930, ໄດ້ເຮັດໃຫ້ຂະບວນການຕໍ່ສູ້ປະຕິວັດຢູ່ອິນດູຈີນກ້າວເຂົ້າສູ່ລະດັບໃໝ່, ຂະບວນການຕໍ່ສູ້ ຂອງປະຊາຊົນລາວເຮົາ ໄດ້ເປີດກວ້າງແລະມີການຈັດຕັ້ງຢ່າງຄັກ ແນ່. ເຖິງວ່າຈະຖືກພວກລ່າເມືອງຂຶ້ນຝະລັ່ງປາບປາມຢ່າງຮ້າຍແຮງປານໃດກໍ່ຕາມ. ແຕ່ຂະບວນການຕໍ່ສູ້ປະຕິວັດຂອງປະຊາຊົນລາວກໍ່ຍັງ ຂຶ້ນສູ່ລະດັບສູງ. ໃນລະຫວ່າງທ້າຍສົງຄາມໂລກຄັ້ງທີສອງ, ຂະບວນການຕໍ່ສູ້ປະຕິວັດຂອງປະຊາຊົນລາວຍິ່ງຂຶ້ນສູ່ລະດັບສູງ, ອົງການຈັດ ຕັ້ງ "ລາວອິດສະຫລະ" ໄດ້ສ້າງຕັ້ງຂຶ້ນ. ຂ້າລາຊະການລາວຈຳພວກໜຶ່ງກໍ່ໄດ້ຈັດຕັ້ງກຸ່ມ "ລາວເປັນລາວ" ຂຶ້ນ. ບັນດາອົງການຈັດຕັ້ງເຫລົ່າ ນີ້ໄດ້ເລີ່ມຕົ້ນກໍ່ສ້າງກຳລັງປະກອບອາວຸດຢ່າງປິດລັບເພື່ອກະກຽມການລຸກຮືຂຶ້ນຍາດສິດອຳນາດການປົກຄອງ.

ວັນທີ 13 ເດືອນ 8 ປີ 1945, ຟາດສິດຍີ່ປຸ່ນ ໄດ້ຍອມຈຳນົນກຸ່ມສຳພັນທະມິດ; ປະຊາຊົນລາວຢູ່ລຽບແຄມແມ່ນ້ຳຂອງ ໄດ້ຈັບອາວຸດລຸກຮືຂຶ້ນຕໍ່ສູ້ແລະຢຶດສິດອຳນາດການປົກຄອງວັນທີ 12 ຕຸລາປີ1945ລັດຖະບານປະສົມຊົ່ວຄາວຢູ່ລາວ ໄດ້ສ້າງຕັ້ງຂຶ້ນໂດຍແມ່ນສະເດັດ ເຈົ້າເພັດຊະລາດເປັນປະມຸກແຫ່ງຊາດ ແລະ ສະເດັດເຈົ້າສຸພານຸ ວົງເປັນລັດຖະມົນຕີກະຊວງປ້ອງກັນຊາດພ້ອມກັນນັ້ນລັດຖະບານປະ ສົມຊົ່ວຄາວແຫ່ງຊາດ ໄດ້ປະກາດຖະແຫລງການເອກະລາດແຫ່ງຊາດວັນທີ 10 ເດືອນ 11 ປີ 1945, ເຈົ້າຊີວິດສີສະຫວ່າງວົງຈຳຕ້ອງປະກາດລາຊະສົມບັດ.

ພາຍຫລັງຫົກສິບກ່ວາປີທີ່ຖືກພວກລ່າເມືອງຂຶ້ນຝະລັ່ງປົກຄອງແລະໃນຫົກສິບກ່ວາປີທີ່ຜ່ານມາກໍ່ເປັນໄລຍະຊຶ່ງປະຊາຊົນລາວ ໄດ້ພ້ອມກັນກັບປະຊາຊົນຫວຽດນາມ, ປະຊາຊົນກຳພູຊາອ້າຍນ້ອງສາມັກຄີຕໍ່ ສູ້ເພື່ອຍາດເອົາເອກະລາດແລະສ້າງສາຊີວິດໃຫ່ມ ວັນທີ12ຕຸລາ ປີ1945 ເປັນວັນປະຫວັດສາດແຫ່ງການຕໍ່ສູ້ຂອງປະຊາຊົນລາວ.

ໄລຍະທີສາມ ນັບແຕ່ປີ 1945 ມາເຖິງປັດຈຸບັນເປັນໄລຍະ ຕໍ່ສູ້ເພື່ອປົກປັກຮັກສາຄວາມເປັນເອກະລາດແຫ່ງຊາດ

ພາຍຫລັງທີ່ປະເທດລາວຍາດ ໄດ້ເອກະລາດບໍ່ດົນປານໃດ, ພວກລ່າເມືອງຂຶ້ນຝະລັ່ງ ຊຶ່ງ ໄດ້ຮັບຄວາມຊ່ວຍເຫລືອຈາກພວກຈັກກະພັດອັງກິດ; ຝະລັ່ງ ໄດ້ກັບຄືນມາຮຸກຮານປະເທດລາວເປັນຄັ້ງທີສອງອີກ, ກອງທະຫານລາວໃຕ້ການນຳພາຂອງລັດຖະບານປະສົມຊົ່ວຄາວໄດ້ສູ້ຮົບຢ່າງພິລະອາດຫານ, ປົກປັກຮັກສາບັນດາຕົວເມືອງຕ່າງໆ .
ແຕ່ຍ້ອນກຳລັງຂອງພວກຝະລັ່ງແຮງກ່ວາ, ດັ່ງນັ້ນ ໄດ້ເຮັດໃຫ້ປະ ຊາ

ຈີນລາວເສຍຫາຍຢ່າງຫລວງຫລາຍ. ເປັນຕົ້ນແມ່ນບັ້ນຮົບທ່າແຂກໃນ ວັນທີ 21 ມີນາ ປີ 1946 ເດືອນ 4 ປີ 1946, ພວກລ່າ ເມືອງ ຂຶ້ນຝະລັ່ງ ໄດ້ຍຶດຄອງທົ່ວປະເທດລາວ; ລັດຖະບານປະສົມຈີວລາວຈຳ ຕ້ອງຍົກຍ້າຍໄປຢູ່ປະເທດໄທ ແລະ ຫລັງຈາກນັ້ນນາຍົກລັດຖະມົນ ຕີ, ລັດຖະມົນຕີກະຊວງຕ່າງໆ ໄດ້ຄ່ອຍກັບຄືນມາຍອມຈຳນົນພວກ ລ່າ ເມືອງຂຶ້ນຝະລັ່ງ, ຍັງແຕ່ສະເດັດເຈົ້າສຸພານຸວົງ ແລະ ບັນດາເພື່ອນ ສະຫາຍຂອງສະເດັດ ໄດ້ນຳພາໜ່ວຍອິດສະຫລະ ເດັດດ່ຽວສືບຕໍ່ການ ຕໍ່ສູ້. ມາເຖິງເດືອນ 3 ປີ 1947 ສຽງປືນຕໍ່ຕ້ານຂອງປະຊາ ຈີນ ລາວຊຳພັດກ້ອງສະໜັ່ນຫວັ່ນໄຫວຂຶ້ນ-ຄະນະກຳມະການຕໍ່ຕ້ານ ໄດ້ ຈັດຕັ້ງຂຶ້ນ. ຕໍ່ຈາກນັ້ນອຳນາດການປົກຄອງຕໍ່ຕ້ານເຂດ, ແຂວງ ຕ່າງ ຕ່າງກໍ່ ໄດ້ສ້າງຕັ້ງຂຶ້ນ; ກຳລັງຕໍ່ຕ້ານ ໄດ້ປັບປຸງແລະແຜ່ຂະ ຫຍາຍ ເດືອນ 8 ປີ 1950, ກອງປະຊຸມໃຫຍ່ທົ່ວປະເທດຄັ້ງທີໜຶ່ງ ໄດ້ ໄຂ ຂຶ້ນ, ທີ່ກອງປະຊຸມ ໄດ້ລົງມະຕິຈັດຕັ້ງລັດຖະບານຕໍ່ຕ້ານ, ສະເດັດເຈົ້າ ສຸພານຸວົງ ໄດ້ຮັບຕຳແໜ່ງເປັນນາຍົກລັດຖະມົນຕີແລະ ໄດ້ສ້າງ ຕັ້ງ ແນວໂຮມອິດສະຫລະຂຶ້ນໂດຍແມ່ນສະເດັດເຈົ້າສຸພານຸວົງເປັນ ປະ ທານແນວໂຮມ, ກອງປະຊຸມໃຫຍ່ທົ່ວປະເທດປີ 1950 ເປັນ ເຫດ ການໜຶ່ງທີ່ສຳຄັນຂອງຂະບວນການຕໍ່ຕ້ານປະຕິວັດຢູ່ລາວ. ມັນ ໄດ້ສະ ແດງເຖິງຄວາມເຕີບໃຫຍ່ແລະບາດກ້າວໃໝ່ຂອງການປະຕິວັດລາວ ເຖິງປີ 1954, ສົມທົບກັບກອງອາສາສະໝັກຂອງຫວຽດນາມ, ກອງ ທັບປະເທດລາວ ໄດ້ເປີດບັ້ນຮົບໃຫຍ່ຂຶ້ນຫລາຍແຫ່ງ, ປົດປ່ອຍ ໄດ້ເຄິ່ງ ໜຶ່ງຂອງດິນແດນທົ່ວປະເທດແລະ 1/3 ຂອງພົນລະເມືອງ, ບັ້ນຮົບ ດຽນບຽນຟູຊຶ່ງເປັນປະຫວັດສາດອັນຍິ່ງໃຫຍ່ ໄດ້ນຳ ໄຊຊະນະມາ ສູ່

ກອງທັບແລະປະຊາຊົນຫວຽດນາມ. ກຳລັງຕໍ່ຕ້ານຂອງລາວພ້ອມ ກັບ ກຳລັງຕໍ່ຕ້ານຂອງຫວຽດນາມແລະກຳພູຊາ ໄດ້ກ້າວຂຶ້ນເຮັດໃຫ້ ພວກລ່າເມືອງຂຶ້ນຝະລັ່ງຈຳຕ້ອງຢຸດຕິການຣຸກຮານ ແລະຮັບຮູ້ຄວາມເປັນເອກະລາດ, ສິດປະຊາທິປະໄຕຂອງປະຊາຊົນສາມຊາດຢູ່ອິນດູຈີນ ທີ່ກອງປະຊຸມເຊີແນວປີ 1954 ເຫດການເຊັນສັນຍາເຊີແນວປີ1954 ໄດ້ເຮັດໃຫ້ທົ່ວໂລກຮັບຮູ້ຕໍ່ຂະບວນການຕໍ່ສູ້ປົດປ່ອຍຊາດແລະນ້ຳໃຈຕໍ່ສູ້ຢ່າງພິລະອາດຫານຂອງປະຊາຊົນສາມຊາດໃນອິນດູຈີນ. ມັນ ບໍ່ພຽງແຕ່ສະແດງເຖິງການປະລາໄຊຢ່າງຮາບຄາບກ່ຽວກັບລັດທິ ລ່າເມືອງຂຶ້ນແບບເກົ່າຂອງຝະລັ່ງຢູ່ອິນດູຈີນເທົ່ານັ້ນ, ມັນຍັງສະແດງໃຫ້ເຫັນຄວາມປະລາໄຊໃນເບື້ອງຕົ້ນຂອງການແຊກແຊງແລະຣຸກ ຮານຂອງຈັກກະພັດອາເມລິກາຢູ່ໃນຂົງເຂດນອກ.

ສັນຕິພາບ ໄດ້ກັບມາສູ່ອິນດູຈີນ: ການປະຕິວັດລາວ ໄດ້ກ້າວເຂົ້າ ສູ່ລະດັບໃໝ່, ມັນເປັນໄລຍະຕໍ່ສູ້ເພື່ອປົກປັກຮັກສາສັນຕິພາບ ເປັນກາງ ລະບອບປົກຄອງ ຂອງພວກລ່າເມືອງຂຶ້ນຝະລັ່ງຫາກໍ່ຖືກໂຄ່ນລົ້ມ. ແຕ່ປະຊາຊົນລາວຍັງຈະຕ້ອງຕໍ່ສູ້ກັບສັດຕູໂຕຮ້າຍກາດ. ໂຫດຫ້ຽມ ນັ້ນແມ່ນຈັກກະພັດອາເມລິກາ, ຄວາມຈິງແລ້ວບໍ່ແມ່ນມາຮອດປີ1954 , ຈັກກະພັດອາເມລິກາຈຶ່ງເຂົ້າມາແຊກແຊງປະເທດລາວ ພວກ ເຮົາຍັງຄືງຈື່ຈຳໄດ້ວ່າໃນເວລາສົງຄາມໂລກຄັ້ງທີສອງໃກ້ຈະສິ້ນສຸດ ລົງຈັກກະພັດອາເມລິກາ ໄດ້ມີແຜນການຣຸກຮານອິນດູຈີນ, ນັບແຕ່ນັ້ນ ມາດ້ານໜຶ່ງຈັກກະພັດອາເມລິກາ ໄດ້ຊ່ວຍເຫລືອພວກລ່າເມືອງຂຶ້ນ ຝະລັ່ງເຂົ້າຣຸກຮານອິນດູຈີນເປັນຄັ້ງທີສອງ, ອີກດ້ານໜຶ່ງ ຈັກກະພັດອາເມລິກາ ໄດ້ຊອກຫາທຸກວິທີເພື່ອປັດເຂ່ຍພວກລ່າເມືອງຂຶ້ນຝະລັ່ງອອກ

ຈາກອິນດູຈີນ, ພາຍຫລັງມີການເຊັນສັນຍາທີ່ກອງປະຊຸມເຊີແນວພວກ ລ່າເມືອງຂຶ້ນຝະລັ່ງຈຳຕ້ອງ ໄດ້ປົບຫນີອອກຈາກອິນດູຈີນ, ແຕ່ພວກຈັກກະພັດອາເມລິກາຊ້ຳພັດເຂົ້າມາແຊກແຊງ ແລະຮຸກຮານໂດຍ ກົງ ເພື່ອທຳຮ້າຍພາລະກິດປະຕິວັດຢູ່ອິນດູຈີນ.

ຕໍ່ກັບຝ່າຍປະເທດລາວ, ໂດຍປະຕິບັດຕາມສັນຍາເຊີແນວກອງອາສາສະຫມັກຂອງຫວຽດນາມ ໄດ້ຖອຍກັບຄືນປະເທດແລະກຳລັງ ຂອງຝ່າຍປະເທດລາວ ໄດ້ຂຶ້ນເຕົ້າໂຮມຢູ່ສອງແຂວງຜົ້ງສາລີ ແລະ ຊຳເຫນືອ ເພື່ອລໍ້ຖ້າການ ເຈລະຈາລະຫວ່າງກຳລັງຝ່າຍປະເທດລາວກັບລັດຖະບານລາຊະອານາຈັກ. ສັນຕິພາບຫາກໍກັບຄືນສູ່ອິນດູຈີນບໍ່ ພໍເທົ່າໃດຢູ່ລາວຈັກກະພັດອາເມລິກາ ໄດ້ໂຄ່ນລົ້ມລັດຖະບານສະ ເດັດເຈົ້າສຸວັນນະພົມມາ ເອົາກະຕ່າຍຂຶ້ນ ກຳລັງອຳນາດການປົກຄອງທຳຮ້າຍພື້ນຖານການປະຕິວັດ, ປາບປາມປະຊາຊົນຢູ່ສິບແຂວງ ແລະພ້ອມກັນນັ້ນພວກມັນ ໄດ້ສົ່ງກອງທະຫານຫລາຍສິບກອງພັນຂຶ້ນບຸກໂຈມ ຕີສອງແຂວງເຕົ້າໂຮມຂອງຝ່າຍປະເທດລາວແຕ່ພວກມັນຖືກກຳລັງປະກອບອາວຸດຂອງຝ່າຍປະເທດລາວແລະປະຊາຊົນຢູ່ສອງແຂວງຜົ້ງສາລີຊຳເຫນືອຕ້ານຝັ້ນຄືນຢ່າງແຮງກ້າ; ກະແສຟອງຕໍ່ສູ້ເພື່ອສັນຕິ ພາບເປັນກາງຕ້ານການຮຸກຮານຂອງຈັກກະພັດອາເມລິກາ, ໂດຍ ແມ່ນແນວລາວຮັກຊາດວາງອອກ ໄດ້ແຜ່ຂະຫຍາຍຢ່າງຮຸນແຮງໃນຫມູ່ປະຊາຊົນ ຈົນກະທັ້ງເຖິງພະສົງ, ພວກເຈົ້ານາຍຂ້າລາຊະການ, ນາຍແລະພົນທະຫານ ຜູ້ແທນລາຊະດອນຝ່າຍອານາຈັກກໍ່ໄດ້ເຫັນດີ, ສະຫນັບສະຫນູນ, ແຜນການ ບຸກໂຈມຕີສອງແຂວງເຕົ້າໂຮມຊຳ ເຫນືອແລະຜົ້ງສາລີຂອງຈັກກະພັດອາເມລິກາແລະພວກປະຕິການຖືກປະລາ

ໄຊລົງ ແລະ ໄດ້ເຮັດໃຫ້ລັດຖະບານກະຕ່າຍຖືກລົ້ມທະລາຍລົງ.

ສະເດັດເຈົ້າສຸວັນນະພູມາພັດຂຶ້ນເປັນນາຍົກລັດຖະມົນຕີ, ການເຈລະຈາລະຫວ່າງລັດຖະບານອານາຈັກກັບຝ່າຍປະເທດລາວ ໄດ້ສືບຕໍ່ແລະ ໄດ້ເຊັນສັນຍາວຽງຈັນ, ທົ່ງ ໄຫຫິນ, ລັດຖະບານປະສົມ ໄດ້ສ້າງຕັ້ງຂຶ້ນ, ຕໍ່ໜ້າ ໄຊຊະນະອັນໃຫຍ່ຫລວງທີ່ປະຊາຊົນລາວຍາດມາ ໄດ້ນັ້ນ; ພວກຈັກກະພັດອາເມລິກາແລະລູກມືພັດຊອກຫາທຸກວິທີການເພື່ອທຳລ້າຍ; ພວກມັນຕັ້ງໃຈໂຄ່ນລົ້ມລັດຖະບານປະສົມ ແລະຊອກຫາທຸກວິທີການເພື່ອທຳລ້າຍກຳລັງປະຕິວັດເພື່ອປະຕິບັດເລ້ກົນເຫລົ່າ ນັ້ນ ຈັກກະພັດອາເມລິກາ ໄດ້ໃຊ້ເສດຖະກິດ ເພື່ອຮັດໜີບເຮັດໃຫ້ ເງິນກີບຖືກເສຍຄຸນຄ່າ, ຈັກກະພັດອາເມລິກາຂົ່ມຂູ່ວ່າຈະຕັດການ ຊ່ວຍເຫລືອເສດຖະກິດໃຫ້ແກ່ອານາຈັກລາວ, ຜົນສຸດທ້າຍພວກມັນ ໄດ້ໂຄ່ນລົ້ມລັດຖະບານ ສະເດັດເຈົ້າສຸວັນນະພູມາ ແລະເອົາຜຸຍຊະນະ ນິກອນ, ຕີນມືບໍລິສຸດຂອງອາເມລິກາຂຶ້ນກຳອຳນາດການປົກຄອງ.

ລັດຖະບານຜຸຍຊະນະນິກອນ ໄດ້ປະຕິບັດຕາມເລ້ກົນຂອງຈັກກະພັດອາເມລິກາຢ່າງບໍລິສຸດ, ພວກມັນ ໄດ້ມ້າງເພສັນຍາເຊີແນວ, ສັນ ຍາວຽງຈັນແລະສັນຍາທົ່ງ ໄຫຫິນ, ທຳລາຍແນວທາງສັນຕິພາບເປັນກາງແລະຄວາມປອງດອງແຫ່ງຊາດ. ດຳເນີນການປາບປາມຄົນແນວລາວຮັກຊາດ ແລະຄົນທີ່ ໄປຕໍ່ຕ້ານແຕ່ຄາວກ່ອນ, ປ່ຽນແປງລັດຖະທຳ ມະນູນແລະຫລັກການເລືອກຕັ້ງຜູ້ແທນລາຊະດອນ; ເພື່ອປັດເຂ່ຍ ແນວລາວຮັກຊາດອອກຈາກສະພາຜູ້ແທນລາຊະດອນ.

ແຕ່ໃນເມື່ອກອງກຳລັງປະກອບອາວຸດຂອງປະເທດລາວຍັງຢືນຢົງຄົງຕົວຢູ່ ແລະ ສະເດັດເຈົ້າສຸພານຸວົງພ້ອມດ້ວຍບັນດາທ່ານຜູ້ ແທນ

ແນວລາວຮັກຊາດຍັງຢູ່ໃນຕົວເມືອງວຽງຈັນແລ້ວ, ມັນເປັນການ ຂັດຂວາງໃນການທີ່ພວກມັນຢາກປະຕິບັດເລ້ກົນອຸບາຍອັນໂຫດຫ້ຽມຂອງພວກມັນ, ເພາະສະນັ້ນມາເຖິງເດືອນ 5 ປີ 1959, ພຸຍໄດ້ໃຊ້ ເລ່ກົນເພື່ອຢຶດອາວຸດແລະ ໄປເຖິງບ່ອນດັບສູນ ສອງກອງພັນຂອງກຳລັງຝ່າຍປະເທດລາວ. ກອງພັນທີສອງຂອງຝ່າຍປະເທດລາວຕັ້ງຢູ່ທົ່ງໄຫຫີນ ໄດ້ທັບມ້າງເລ້ກົນພຸຍຊະນະນິກອນ, ທັງມ້າງວົງປິດລ້ອມຂອງ ທະຫານລາຊະອານາຈັກຫລາຍກອງພັນແລະ ໄດ້ຖອນກັບຄືນສູ່ເຂດ ທີໝັ້ນດ້ວຍຄວາມປອດໄພຢ່າງໜ້າອັດສະຈັນທີ່ສຸດ.

ຮອດວັນທີ 27 ເດືອນ 7 ປີ 1959, ຈັກກະພັດອາເມລິກາ ໄດ້ໃຫ້ພຸຍ ຊະນະນິກອນ ແລະ ພວກປະຕິການຂວາຈັດໃນພັກ"ກຳ ນະການປ້ອງກັນປະໂຫຍດຂອງຊາດ" ໄດ້ສັ່ງ ໄພຍ່າງເປີດແປນຈັບແລະກັກຂັງສະເດັດເຈົ້າສຸພານຸວົງພ້ອມກັບບັນດາຜູ້ນຳອື່ນໆຈຳນວນ ໜຶ່ງຂອງແນວລາວຮັກຊາດ, ລວມທັງໝົດສິບທົກທ່ານ ໄປກັກຂັງ. ເປີດສົງຄາມພາຍໃນປະເທດ ແລະ ປະກາດຈະໃຊ້ກຳລັງອາວຸດເພື່ອດັບ ສູນກຳລັງຂອງຝ່າຍປະເທດລາວ. ພວກນາຍທະຫານອາເມລິກາ ຫລາຍພັນຄົນ ໄດ້ປອມຕົວນຸ່ງເພື່ອງ"ພົນລະເຮືອນ"ຫລັ່ງໄຫລເຂົ້າມາ ດິນລາວ. ແປວໄຟແຫ່ງສົງຄາມພາຍໃນປະເທດໂດຍແມ່ນພວກ ພຸຍ ຊະນະນິກອນກໍ່ຂຶ້ນ ໄດ້ຖືກ ໄຫມລາມ ໄປທົ່ວປະເທດ. ສະເດັດເຈົ້າສຸພາ ນຸວົງ ແລະບັນດາທ່ານຜູ້ນຳຂອງແນວລາວຮັກຊາດ ໄດ້ໂຕນອອກ ຈາກຄຸກກັບຄືນມາຫາເຂດທີ່ໝັ້ນ ນຳພາປະຊາຊົນທົ່ວປະເທດຕໍ່ສູ້ກູ້ ຊາດຂະບວນການຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາ ຣຸກຮານແລະພວກປະຕິການຂາຍຊາດ ໄດ້ສືບຕໍ່ແຜ່ຂະຫຍາຍໄປທົ່ວປະເທດຢ່າງໄວ ວາ

ເຫມືອນດັ່ງນ້ຳມາກລົ້ນຝັ່ງໃນລະດູຝົນ.

ແນວທາງນະໂຍບາຍສັນຕິພາບ ເປັນກາງແລະຄວາມ ປອງດອງຊາດຂອງແນວລາວຮັກຊາດນັບມື້ນັບເຊືອມຊຶມເຂົ້າໃນຫມູ່ມະຫາ ຊົນ ນັບທັງພວກຂ້າລາຊະການ, ຜູ້ແທນລາຊະດອນ, ນາຍແລະພົນທະຫານ ນັກຣຽນຮູ້, ນັກສຶກສາ, ພະສົງອົງຄະເຈົ້າແລະໃນວົງເຊື້ອເຈົ້າ ອີກ ກົງກັນຂ້າມໃບຫນ້າຂາຍຊາດຂອງພວກລູກມືອາເມລິການັບມື້ນັບ ຖືກ ເຜີຍແຜອອກ, ເບື່ອຫນ່າຍຕໍ່ຊີວິດເປັນທະຫານຮັບຈ້າງໃຫ້ແກ່ອາ ເມ ລິກາ ເພື່ອໄປຂ້າຟັນລັນແທງປະຊາຊົນ, ວັນທີ9 ເດືອນ8 ປີ1960ນາຍ ແລະພົນທະຫານໃນກອງທັບລາຊະອານາຈັກຈຳພວກຫນຶ່ງ ໄດ້ເຮັດລັດ ຖະປະຫານຂຶ້ນທີ່ນະຄອນຫລວງວຽງຈັນ, ໂຄ່ນລົ້ມລັດຖະບານພູມີເຈົ້າ ສົມສະນິດ, ສ້າງຕັ້ງລັດຖະບານຊົ່ວຄາວໃຫ່ມຂຶ້ນໂດຍແມ່ນສະ ເດັດ ເຈົ້າສຸວັນນະພູມາເປັນນາຍົກໃນເວລາດຽວກັນນັ້ນ ຢູ່ສະຫວັນ ນະ ເຂດ; ຈັກກະພັດອາເມລິກາຟ້າວປັ້ນແຕ່ງລັດຖະບານຂະບົດຊາດພູ ມີ ບຸນອຸ້ມຂຶ້ນ; ແກ່ດຶງເອົາບັນດາປະເທດບໍລິວານຄື: ໄທ, ຫວຽດນາມໃຕ້ ຟີລິບປິນ... ເຕົ້າໂຮມກຳລັງຢ່າງຫລວງຫລາຍແລະປະກອບອາ ວຸດ ທີ່ທັນສະໄຫມ, ສວຍໃຊ້ດິນໄທເພື່ອບຸກໂຈມຕີບຽດຢຶດເອົານະ ຄອນ ຫລວງວຽງຈັນ. ສ່ວນກຳລັງຮັກຊາດທີ່ເຂົ້າຮັກສາລັດຖະບານຊົ່ວຄາວ ທີ່ຖືກຕ້ອງຕາມກົດຫມາຍຢູ່ວຽງຈັນຈຳຕ້ອງ ໄດ້ຖອນອອກຈາກນະຄອນ ຫລວງວຽງຈັນ, ເພື່ອຮັກສາກຳລັງສືບຕໍ່ການຕໍ່ຕ້ານຍາວນານແລະໄດ້ ກ້າວຂຶ້ນມາປົດປ່ອຍທົ່ງໄຫຫີນຊຽງຂວາງ.

ເຖິງເດືອນ 6 ປີ 1962, ຍ້ອນຖືກປະລາໄຊຢ່າງຫນັກທີ່ "ບັ້ນຮົບ ພາກເຫນືອ", "ບັ້ນຮົບລະດູແລ້ງ" ແລະເປັນຕົ້ນຖືກປະລາໄຊຢູ່ບັ້ນຮົບ

ຫລວງນ້ຳທາ; ຈັກກະພັດອາເມລິກາ ແລະ ພວກປະຕິການຂາຍຊາດ ຈຳຕ້ອງຍອມເຊັນສັນຍາເຈນີວເປັນເທື່ອທີ່ສອງ. ບົນພື້ນຖານສັນຍາ ຊູຍລິກສັນຍາ ທົ່ງໄຫຫີນ ແລະ ສັນຍາວຽງຈັນ, ລັດຖະບານປະ ສົມສາມຝ່າຍໄດ້ຈັດຕັ້ງຂຶ້ນ. ແຕ່ວ່າຮອຍນ້ຳເມິກເຊັນສັນຍາຍັງບໍ່ທັນແຫ້ງ ເຖິງເດືອນ 5 ປີ 1964 ຈັກກະພັດອາເມລິກາໄດ້ໃຊ້ພວກຂຸນເສິກ ຂວາຈັດເຮັດລັດຖະປະຫານໂຄ່ນລົ້ມລັດຖະບານປະສົມສາມຝ່າຍແລະ ຫມູນໃຊ້ກົນອຸບາຍ" ແກ້ວເກົ່າຫລ້າໃຫມ່ "; ຈັກກະພັດອາເມລິ ກາ ໄດ້ຈັດຕັ້ງລັດຖະບານຫຸ່ນວຽງຈັນຂຶ້ນ ແລະ ຫລັງຈາກນັ້ນຫນຶ່ງເດືອນ ຈັກກະພັດອາເມລິກາໄດ້ຂັງອາດ, ຈອງຫອງໃຊ້ກອງທັບອາກາດ ອາ ເມລິກາເຂົ້າມາຍິງທຳລາຍເຂດປົດປ່ອຍ, ຊຸກຍູ້" ສົງຄາມພິເສດ" ຢູ່ ລາວຂຶ້ນສູ່ລະດັບສູງ.

ຕໍ່ຫນ້າສະພາບການທີ່ຈັກກະພັດອາເມລິກາພັບພັບຮຸກຮານ ແຮງ ເຂົ້າລາວແລະໃບຫນ້າຂາຍຊາດຂອງພວກປະຕິການຂາຍຊາດນັບ ມື້ ນັບຖືກເປີດເຜີຍແປນ. ໃຕ້ການນຳພາຂອງສູນກາງແນວລາວຮັກຊາດ ປະ ຊາຊົນລາວຍອມຕາຍດີກວ່າຍອມເປັນຂ້ອຍຂ້າຂອງຊາດອື່ນ, ດັ່ງ ນັ້ນ ເຂົາເຈົ້າໄດ້ພ້ອມກັນລຸກຮືຂຶ້ນຕໍ່ສູ້ຢ່າງບໍ່ຢຸດຢັ້ງ, ເດັດດ່ຽວຕີເອົາ ຊະ ນະຈັກກະພັດອາເມລິກາຜູ້ຮຸກຮານ ແລະ ພວກປະຕິການຂາຍ ຊາດ ເພື່ອເຮັດ ໃຫ້ປະເທດລາວ ມີສັນຕິພາບ, ເອກະລາດ, ປະຊາທິ ປະ ໄຕ, ເປັນກາງ, ເອກະພາບ ແລະ ວັດທະນາຖາວອນ.

ທວນຄືນ ປະຫວັດການຕໍ່ສູ້ກູ້ຊາດ ຂອງປະຊາຊົນລາວເຮົາ ຕ້ານ ການຮຸກຮານຂອງຈັກກະພັດອາເມລິກາໃນຊາວກວ່າປີທີ່ຜ່ານ ມາ ພວກເຮົາເຫັນໄດ້ວ່າການຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາ ຮຸກ

ຮານຂອງປະຊາຊົນລາວເຮົາໃນປະຈຸບັນແມ່ນສືບຕໍ່ແລະທັງສືບ ທອດພາລະກິດຕໍ່ສູ້ກູ້ຊາດ, ຕ້ານການແຊກແຊງແລະຮຸກຮານຂອງສັດຕູພາຍນອກຂອງປະຊາຊົນລາວເຮົາໃນຫລາຍຮ້ອຍປີຜ່ານມາ. ໃນໄລຍະຕໍ່ສູ້ນັ້ນໄດ້ແບ່ງອອກເປັນຫລາຍໄລຍະ; ແຕ່ລະ ໄລຍະປະຊາຊົນລາວເຮົາໄດ້ຫມູນໃຊ້ຍຸດທະວິທີການຕໍ່ສູ້ແຕກຕ່າງກັນ. ບາງເທື່ອຕໍ່ສູ້ຢ່າງ ເປີດເຜີຍບາງເທື່ອຕໍ່ສູ້ແບບປິດລັບ, ຕໍ່ສູ້ດ້ວຍອາວຸດ, ຕໍ່ສູ້ດ້ວຍການ ເມືອງແລະຕໍ່ສູ້ຕ່າງປະເທດ. ບາງເທື່ອຕໍ່ສູ້ແບບຖືກກົດຫມາຍ ບາງເທື່ອຕໍ່ສູ້ແບບຜິດກົດຫມາຍ ຜ່ານພົ້ນ ເສັ້ນທາງຕໍ່ສູ້ຢ່າງລຳບາກ, ຍາວ ແລະສັບສົນ, ດຸເດືອດ; ປະຊາຊົນລາວເຮົາໄດ້ຖອດຖອນບົດຮຽນຕໍ່ສູ້ທີ່ມີຄຸນຄ່າຢ່າງອຸດົມສົມບູນ ບົດຮຽນຕໍ່ສູ້ອັນມີຄຸນຄ່າຂອງປະຊາຊົນລາວຖອດຖອນໄດ້ມານັ້ນໄດ້ປະກອບສ່ວນອັນສຳຄັນເຂົ້າສາງທິດສະດີຕໍ່ສູ້ ຂອງບັນດາຊາດທີ່ຖືກກົດຂີ່ແລະປະຊາຊົນທີ່ຮັກຫອມສັນຕິພາບທົ່ວໂລກ.

ຄ) ກ່າວໂດຍສັງເຂບກ່ຽວກັບປະຫວັດວັນນະຄະດີລາວ:

ປະຊາຊົນລາວແຕ່ໃດມາ ໄດ້ມີພາສາຄຳເວົ້າແລະຫນັງສືແຫ່ງຊາດວັນນະຄະດີລາວແຕ່ລະໄຫມເດີມແມ່ນຈະເລີນ, ສີວິໄລກ້າວຫນ້າ. ສິລະປະ ປະຊາສາມັນຂອງລາວເຮົາໄດ້ສະແດງອອກໃນກອນ ລຳກອນຂັບ, ເຕີ້ຍຮ້ອງແລະແບບຟ້ອນຕ່າງໆ ເຊັ່ນ: ຟ້ອນລຳວົງ, ຟ້ອນລາຍ ວິເກ ເຊີ້ງບັ້ງໄຟ ແລະອື່ນໆ... ຊາດລາວ ເປັນຊາດ ຫນຶ່ງທີ່ມັກມ່ວນຊື່ນ, ມັກຮ້ອງລຳທຳເພງ, ມັກຟ້ອນ ແລະ ໄດ້ປະດິດຄິດແຕ່ງເຄື່ອງເສບຫລາຍຊະນິດເຊັ່ນ: ແຄນ, ສີຊໍ, ກອງ, ລະນາດ, ຂຸ່ຍຫມາກກະຈັບປີ່ ແລະອື່ນໆ... ຄຽງຄູ່ກັບການປະດິດຄິດແຕ່ງບົດ ວັນນະຄະດີປະຊາສາມັນເລົ່າປາກຕໍ່ປາກ, ປະຊາຊົນລາວເຮົາຍັງໄດ້ຄິດ

ແຕ່ງແລະບັນທຶກບົດເລື່ອງປະຫວັດສາດຫລາຍບົດຄື:ກາບກອນ,ໜັງສືພູກ,ນິທານບູຮານຕ່າງໆບໍ່ວ່າຢູ່ເຂດໃດ,ແຂວງໃດ.ແຕ່ພາກເໜືອລົງຈົນເຖິງພາກໃຕ້,ແຕ່ເຂດທົ່ງພຽງຂຶ້ນຫາເຂດພູດອຍ,ແຕ່ ຕົວເມືອງເຖິງບ້ານນອກຊົນນະບົດ,ແມ່ນ້ຳລຳເຊ,ພູຜາປ່າດົງຫລື ຖ້ຳເຫວ,ແຕ່ລະໜ່ວຍທາດຫລືວັດວາອາຮາມຕ່າງໆລ້ວນແລ້ວມີ ທານສະເພາະຂອງມັນ-ໃນບັນດາຊົນຊາດ ແລະ ເຜົ່າຊົນຕ່າງໆກໍ່ ລ້ວນແລ້ວມີນິທານສະເພາະ ຂອງແຕ່ລະຊົນຊາດ,ເຜົ່າຊົນ,ຢູ່ປະ ເທດລາວເຮົາໃນປັດຈຸບັນຍັງມີໝໍລຳຕ່າງໆຫລາຍ,ພວກເຂົາເຈົ້າເປັນຄົນຫົວກວັນນະຄະດີ,ເຂົາສາມາດເລົ່າເລື່ອງນິທານປະຊາສາມັນຫລືຂັບລຳຈົນຕະຫລອດວັນແລະຄືນກໍບໍ່ສິ້ນສຸດໄດ້.ໃນວັນບຸນຕ່າງໆເຊັ່ນ ບຸນພະເວດ,ບຸນເຂົ້າຈີ່,ບຸນເຂົ້າກຳ,ບຸນເຂົ້າພັນສາ,ບຸນເຂົ້າສະຫລາກບຸນເຂົ້າປະດັບດິນແລະອື່ນໆ...ພວກເຮົາເຄີຍເຫັນແລະໄດ້ຍິນສຽງເທດ,ສຽງຂັບ,ສຽງລຳແລະປະຊາຊົນທີ່ໄປຫລິ້ນບຸນຕ່າງໆກໍໄດ້ພ້ອມກັນເຂົ້າໄປໃນວັດ,ໃນສິມຟັງຄູບາເທດ ຫລືຟັງໝໍລຳ ເພີ່ນລຳເພີ່ນເລົ່າເລື່ອງນິທານແລະຢູ່ໃນປາງບຸນເຫລົ່ານັ້ນ,ບໍ່ມີປາງບຸນ ໃດວ່າຈະບໍ່ໄດ້ຍິນສຽງແຄນ,ສຽງຮ້ອງ,ສຽງລຳແລະລຳວົງ-ອາດ ຈະເວົ້າໄດ້ວ່າປະຊາຊົນລາວເຮົານັບຕັ້ງແຕ່ພວກເດັກນ້ອຍອາຍຸຫົກເຈັດປີຈົນເຖິງພວກພໍ່ເຖົ້າ,ແມ່ເຖົ້າອາຍຸຫົກສິບ,ເຈັດສິບປີ,ບໍ່ມີຜູ້ໃດຈະບໍ່ຮູ້ລຳ ແລະຮູ້ຟ້ອນລຳວົງ.

ກ່ຽວກັບສິລະປະ ການກໍ່ສ້າງ ແລະ ຄວັດລາຍ,ຢູ່ປະເທດ ລາວເຮົາຈຸດໜັກ ແມ່ນມີຢູ່ຕາມວັດວາອາຮາມ ແລະ ທາດຕ່າງໆ. ມີບາງວັດຄືວັດພູຈຳປາສັກ ໄດ້ສ້າງຕັ້ງຂຶ້ນກ່ອນມຕັ້ງເປັນພັນກ່ວາ ປີ

ໄຫຫີນຢູ່ທົ່ງ ໄຫຫີນມີຕັ້ງແຕ່ສະ ໄໝຫີນໃໝ່, ຕາມນັກຄົ້ນຄວ້າບູ ຮານວັດຖຸຄົນໜຶ່ງ ໄດ້ຢັ້ງຢືນວ່າ : ແຕ່ຄາວກ່ອນຢູ່ທົ່ງ ໄຫຫີນ ໄດ້ມີ ສັງຄົມໜຶ່ງມີລະດັບວັດທະນະທຳສູງພໍສົມຄວນ. ນອກນັ້ນຍັງມີວັດວາອາຮາມຕ່າງໆຄື: ວັດຊຽງທອງ, ວັດວິຊຸນ, ວັດມະໂນລົມ ຢູ່ຫລວງພະ ບາງ ວັດເມືອງເກົ່າຢູ່ບໍລິຄັນ; ທາດຫລວງ, ວັດສີສະເກດ, ວັດອົງຕື້, ວັດພະແກ້ວແລະອື່ນໆ... ຢູ່ວຽງຈັນ, ທາດອິງຮັງຢູ່ສະຫວັນນະເຂດ, ທາດດຳຢູ່ຊຽງຂວາງ, ວັດພະອົງຕື້, ວັດພະອົງແສນຢູ່ແຂວງຫົວພັນ ແລະອື່ນໆ... ລ້ວນແລ້ວແຕ່ໄດ້ກໍ່ຂຶ້ນກ່ອນນີ້ຫລາຍຮ້ອຍປີ. ທຸກການກໍ່ ສ້າງທີ່ເປັນຮ່ອງຮອຍວັດຖຸບູຮານແລະສິລະປະວັນນະຄະດີປະຊາສາ ມັນເຫລົ່ານັ້ນລ້ວນແລ້ວແມ່ນສີ ໄມ້ລາຍມືແລະຫົວຄິດປະດິດສ້າງຂອງ ປະຊາຊົນລາວຜູ້ອອກແຮງງານ. ສິລະປະການກໍ່ສ້າງແລະວັນນະຄະດີປະຊາສາມັນເຫລົ່ານັ້ນ ໄດ້ສ່ອງແສງເຖິງຊີວິດການເປັນຢູ່ແລະການເພີ່ມພູນຜະລິດຜົນຂອງປະຊາຊົນລາວເຮົາ ໃນແຕ່ລະດ້ານຄຽງຄູ່ກັນ ນັ້ນຍັງ ໄດ້ຢັ້ງຢືນໃຫ້ພວກເຮົາເຫັນວ່າສິລະປະວັນນະຄະດີປະຊາສາ ມັນຂອງລາວເຮົາມີປະຫວັດອັນເກົ່າແກ່ ແລະສີວິ ໄລ ບໍ່ຕ່ຳກ່ວາສິລະປະວັນນະຄະດີຂອງປະເທດຕ່າງໆໃນພາກພື້ນອາຊີອາຄະເນ.

ຄືພວກເຮົາ ໄດ້ເວົ້າມາຂ້າງເທິງ, ປະເທດຊາດຂອງພວກ ເຮົາຜ່ານພົ້ນຫລາຍ ໄລຍະທີ່ສີວິ ໄລ ແລະຊຸດໂຊມຕ່າງກັນ; ເວົ້າເຖິງ ວັດທະນະທຳຫລືເວົ້າສະເພາະວັນນະຄະດີຂອງລາວເຮົາ ໄດ້ພັນແປ ໄປຕາມປະຫວັດຂອງຊາດ. ຖ້າພວກເຮົາເບິ່ງຄືນປະຫວັດສາດຫົກ ຮ້ອຍກ່ວາປີທີ່ຜ່ານມາ. ພວກເຮົາຈະເຫັນວ່າປະເທດລາວເຮົາເວລາ ໃດກໍ່ຕົກຢູ່ໃຕ້ການປົກຄອງ ຂອງສັກດີນາລາວ, ສັກດີນາຕ່າງປະ ເທດ

ແລະພວກຈັກກະພັດຣຸກຮານຕະຫລອດ ໄລຍະນັ້ນ, ວັນນະຄະດີແຫ່ງຊາດ ຖືກຕົກຢູ່ໃນກຳມືຂອງຈີນຊັ້ນປົກຄອງ, ຈີນຊັ້ນປົກຄອງ ໄດ້ກຳແໜ້ນອາວຸດຄ້ານແນວຄິດ ແລະ ໃຊ້ອາວຸດຄ້ານແນວຄິດນັ້ນມາປັບປຸງອຳ ນາດການປົກຄອງ, ປັບປຸງຮີດຄອງປະເພນີ ແລະ ລະບອບວິໄນສັງ ຄົມຂອງພວກເຂົາ, ນັບຕັ້ງແຕ່ສະໄໝຊາດລາວຍັງບໍ່ທັນມີໂຕໜັງສືແຫ່ງຊາດ, ຍັງໃຊ້ໂຕທຳ, ໂຕບາລີ, ຍັງບໍ່ທັນມີເຈັ້ຍຂຽນ, ຍັງໃຊ້ໃບ ລານຂຽນ. ເວລານັ້ນຈີນຊັ້ນປົກຄອງກໍ່ໄດ້ພະຍາຍາມເຜີຍແຜ່ບັນດາບົດ. ນິພົນວັນນະຄະດີຂອງພວກເຂົາທົ່ວທຸກແຫ່ງ. ບັນດາບົດກອນລຳ, ບົດເລື່ອງນິທານຕ່າງໆ ເຫລົ່ານັ້ນລ້ວນແລ້ວແຕ່ຄັດອອກມາຈາກບົດພາ ວະນາ, ໜັງສືຜູກຂອງສາສະໜາພຸດ, ສາສະໜາພາມ, ໃນບັນດາ ບົດນິພົນຂອງອິນເດຍແລະອື່ນໆ...ພວກເຂົາໝູນໃຊ້ບົດເລື່ອງ ເຫລົ່ານັ້ນເພື່ອຫວັງຕັກເຕືອນ ແລະ ໂຄສະນາຄວາມສິນທຳຂອງສາ ສະໜາ, ແນະນຳໃຫ້ປະຊາຊົນເຮັດໃຫ້ຖືກຕາມກົດໝາຍແລະຂະນົບທຳນຽມຂອງອຳນາດການປົກຄອງສັກດີນາ. ບັນຫາທີ່ເດັ່ນກວ່າໝູ່ໃນວັນນະຄະດີຂອງສັກດີນາມີລັກສະນະສາສະໜາ; ຕົວລະຄອນເອກໃນບົດເລື່ອງ, ບົດກອນລຳ, ກາບກອນເຫລົ່ານັ້ນສ່ວນຫລາຍແມ່ນພະ ສົງເຈົ້າຊີວິດ, ລາຊະກຸມານ, ລາຊະທິດາ, ບັນດາທ້າວຂຸນມູນນາຍໃນວັງລາຊະວັງຂອງສັກດີນາ ພວກເຂົາ (ໝາຍເຖິງຕົວລະຄອນ, ປະ ກົດອອກໃນບົດນິພົນວັນນະຄະດີເຫລົ່ານັ້ນເປັນຄົນທີ່ດີເດັ່ນແລະເປັນ ຕົວແທນໃຫ້ແກ່ສິນທຳ, ເປັນຄົນແບບຢ່າງຂອງສັງຄົມ. ກົງກັນຂ້າມ ກັບຕົວລະຄອນເອກນັ້ນແມ່ນຕົວລະຄອນຍັກທີ່ມີຮູບຊົງຕ່າງປະຫລາດ, ຕ່ຳຕ້ອຍ: ນັ້ນແມ່ນພວກຜີຍັກ, ຜີສາງມານຮ້າຍຊຶ່ງເປັນຕົວແທນໃຫ້ແກ່ຈຳ

ພວກຄົນທີ່ຊົ່ວຊ້າ, ໂຫດຮ້າຍສາມານໃນສັງຄົມ, ເພາະສະນັ້ນໃນ ວັນນະຄະດີຂອງສັກດີນາ ໄດ້ແບ່ງຕົວລະຄອນອອກເປັນສອງຈຳພວກຢ່າງຈະແຈ້ງ; ຈຳພວກຕົວລະຄອນເອກຕາງໜ້າໃຫ້ແກ່ຄວາມເປັນ ທຳ ເມື່ອທຳອິດເຖິງວ່າເຂົາເຈົ້າຖືກພົບພໍ້ຄວາມຫຍຸ້ງຍາກອຸປະສັກຫລາຍສິ່ງຫລາຍຢ່າງ. ແຕ່ໃນທີ່ສຸດ, ເວລາໃດເຂົາກໍ່ໄດ້ຮັບໄຊຊະນະ, ສຳເລັດຜົນແລະສົມສຸດລົງຢ່າງດີງາມ, ສ່ວນຈຳພວກຄົນທີ່ໂຫດຮ້າຍ ສາມານ, ເຖິງຈະສູ້ກົງຄັດລ້ຽວ ເຖິງປານໃດຫລືວ່າໃນເບື້ອງຕົ້ນຈະໄດ້ຮັບໄຊ, ແຕ່ສຸດທ້າຍຈະຕ້ອງຖືກປະລາໄຊ, ຖືກປາບປາມແລະຖືກ ລົງໂທດຢ່າງສົມນ້ຳໜ້າ.

ຄຳຖາມໜຶ່ງ ອາດຈະເຮັດໃຫ້ພວກເຮົາ ໝົດທຸກຄົນສົນໃຈຍ້ອນເຫດການອັນໃດ. ຊົນຊັ້ນສັກດີນາຈຶ່ງມີຄວາມສາມາດເຜີຍແຜ່ບົດນິພົນວັນນະຄະດີແຫ່ງຊາດຕ່າງໆດີ: ເລື່ອງສິນໄຊ, ກາລະເກດ, ຈຳປາ ສີຕົ້ນ, ນາງແຕງອ່ອນ, ຈັນທະຄາດ, ທ້າວເຈືອງ, ພະເຫວດ, ລົມ ທອງສຸລິວົງ, ໄກ່ແກ້ວນິຍາຍງົວນ້ອຍແລະອື່ນໆ...ລົງສູ່ມະຫາຊົນໄດ້ຢ່າງເລິກເຊິ່ງ. ເພື່ອຕອບຄຳຖາມນີ້, ກ່ອນອື່ນໝົດພວກເຮົາຂໍເວົ້າ ເຖິງທິດສະດີຂອງທ່ານເລນິນທີ່ເວົ້າເຖິງສອງກະແສຂອງວັນນະຄະດີແຫ່ງຊາດ. ທ່ານ ເລນິນ ໄດ້ຊີ້ໃຫ້ຮູ້ວ່າ "ໃນວັດທະນະທຳຂອງຊາດໜຶ່ງລວມມີສອງກະແສວັດທະນະທຳແຫ່ງຊາດ" ປະເພດໜຶ່ງແມ່ນວັນ ນະຄະດີຂອງພວກຂຸນພໍ່ລັດເຊຍແລະຂອງພວກຊົນຊັ້ນນາຍທຶນ. ອີກ ປະເພດໜຶ່ງແມ່ນຂອງຝ່າຍປະຊາທິປະໄຕແລະສັງຄົມນິຍົມ. ຫມູນໃຊ້ທິດສະດີຂອງທ່ານເລນິນເຂົ້າມາສ່ອງແສງວັນນະຄະດີລາວເຮົາ, ພວກເຮົາເຫັນວ່າບັນດາບົດນິພົນທີ່ໄດ້ແຕ່ງຂຶ້ນ ໃນສະໄໝນັ້ນ, ສ່ວນ

ຫລາຍແມ່ນເລື່ອງທີ່ມີລັກສະນະສັກດີນາແລະເພື່ອຫວັງໂຄສະນາ ໃຫ້ແກ່ສິນທຳແບບຊົນຊັ້ນສັກດີນາ, ຕໍ່ກັບປະຊາຊົນລາວເຮົາໃນຄາວ ນັ້ນຍັງຕົກຢູ່ໃນສັງຄົມສັກດີນາ, ຖືກແນວຄິດຂອງສັກດີນາຄອບຄອງ; ດັ່ງນັ້ນຍັງບໍ່ທັນເຫັນແຈ້ງໄດ້ບາງບັນຫາທີ່ຈຳກັດແລະບໍ່ຖືກຕ້ອງໃນບົດ ນິພົນເຫລົ່ານັ້ນ, ອີກດ້ານໜຶ່ງໃນສະໄໝນັ້ນ, ຊົນຊັ້ນສັກດີນາຍັງຮັບພາລະໜ້າທີ່ ປະຫວັດສາດຂອງຕົນຕໍ່ຊາດ, ຄວາມຂັດແຍ້ງລະ ຫວ່າງຊົນຊັ້ນສັກດີນາກັບປະຊາຊົນຜູ້ອອກແຮງງານຍັງບໍ່ທັນຮ້າຍແຮງ ປານໃດ, ດ້ວຍເຫດນັ້ນ ບົດນິພົນຂອງຊົນຊັ້ນ ສັກດີນາຈຶ່ງໄດ້ສ່ອງ ແສງເຖິງຈິດໃຈແລະຄວາມມຸ່ງຫວັງຂອງປະຊາຊົນລາວແລະປະຊາ ຊົນລາວຈຶ່ງມີຄວາມສາມາດຮັບຮູ້ໄດ້ຕາມກົດສິນທຳ, ຂະທຳແລະຊິວະທັດທີ່ພວກສັກດີນາວາງອອກ. ແຕ່ວ່າເຫດການເຫລົ່ານັ້ນບໍ່ເປັນປົກ ກະຕິແລະມີພຽງແຕ່ໄລຍະໃດໄລຍະໜຶ່ງເທົ່ານັ້ນ, ເພາະທາດແທ້ ຂອງຊົນຊັ້ນສັກດີນາເວລາໃດກໍ່ຢາກເບື່ອເມົາປະຊາຊົນ ແລະ ກົດຂີ່ ຂູດຮີດໄດ້ງ່າຍຖ້າເວົ້າເຖິງການຈຳແນກຊົນຊັ້ນໃນສັງຄົມເກົ່າ. ທາດແທ້ຂອງຊົນຊັ້ນປົກຄອງ ແລະ ຊົນຊັ້ນທີ່ຖືກປົກຄອງ ເວລາໃດກໍ່ຂັດແຍ້ງກັນຢ່າງເອົາເປັນເອົາຕາຍສະນັ້ນຄຽງຄູ່ກັບວັນນະຄະດີຂອງຊົນ ຊັ້ນສັກດີນາ. ປະຊາຊົນລາວຜູ້ອອກແຮງງານ ເວລາໃດກໍໄດ້ປະດິດ ຄິດແຕ່ງວັນນະຄະດີ ອັນແທ້ຈິງຂອງຕົນຂຶ້ນ, ເຊັ່ນວັນນະຄະດີປະຊາ ສາມັນ ແລະ ໃຫ້ວັນນະຄະດີປະຊາສາມັນນັ້ນເປັນອາວຸດອັນແຫລມ ຄົມເພື່ອຕ້ານຊົນຊັ້ນສັກດີນາຄືນ.

ວັນນະຄະດີປະຊາສາມັນຂອງລາວເຮົາ ສຸດທີ່ອຸດົມສົມບູນ, ມີ ວັນນະຄະດີຫລາຍປະເພດຕ່າງກັນຄື: ສຸພາສິດ, ນິທານບູຮານ, ເລື່ອງຫົວ

ທີ່ມີລັກສະນະກໍ່ສ້າງຫລືສຽດສີ, ເລື່ອງຊຽງຫມ້ຽງ, ຜະຫຍາ, ເລື່ອງເລົ່າປາກຕໍ່ປາກ, ກອນຂັບ, ກອນລຳ ແລະ ອື່ນໆ... ເນື້ອໃນສຳຄັນໃນບົດນິພົນເຫລົ່ານີ້ແມ່ນຍົກສູງຄວາມສິນທຳອັນແທ້ຈິງ, ສັນລະ ເສີນເສລີພາບແລະອະທິປະໄຕຂອງຄົນເຮົາ, ບອກສອນ, ຕັກເຕືອນຄົນທັງຫລາຍໃຫ້ຢູ່ກິນໃຫ້ມີສິນທຳມີບົດປະພັນຫລາຍບົດຊຶ່ງປະຊາຊົນ ລາວເຮົາມັກແລະນິຍົມຊົມຊອບ, ສັນລະເສີນຕະຫລອດມາ, ເຂົາໃຊ້ບົດປະພັນເຫລົ່ານັ້ນເພື່ອສ່ອງແສງແນວຄິດຈິດໃຈຂອງເຂົາແລະເປີດ ຫນ້າກາກຄວາມຊົ່ວຊ້າອັບປີຂອງພວກສັກດີນາພວກເຈົ້າຂຸນມູນນາຍໃນສັງຄົມເກົ່າ. ຕົວຢ່າງຄືເລື່ອງ ຊຽງຫມ້ຽງ, ທຸກສ່ວນທຸກຢ່າງທີ່ມີລັກສະນະສະຫວ່າງຜ່າເຜີຍແລະພິລຶກຄຶກຫນາ, ສຳຄັນຂອງພວກສັກດີນາ, ເມື່ອໄດ້ສ່ອງແສງເຂົ້າເລື່ອງຊຽງຫມ້ຽງແລ້ວ, ລ້ວນແຕ່ເປັນເລື່ອງທີ່ຢາກຫົວແລະບໍ່ມີຄຸນຄ່າ, ເລື່ອງຊຽງຫມ້ຽງເວລາໃດກໍ່ມີລັກສະນະໂຈມ ຕີເຢາະເຢີ້ຍສິ່ງທີ່ຊົ່ວ, ໂຈມຕີຄວາມໂງ້ຈ້າ ຂອງຊົນຊັ້ນປົກຄອງ ແລະຍ້ອງຍໍສັນລະເສີນຄວາມສະຫລາດຫລັກແຫລມຂອງປະຊາຊົນຜູ້ ອອກແຮງງານ. ຕ່າງເລື່ອງຊຽງຫມ້ຽງທີ່ມີລັກສະນະໂຈມຕີ, ສຽດສີເຢາະເຢີ້ຍ ຜະຫຍາເປັນປະເພດວັນນະຄະດີຫນຶ່ງທີ່ປະຊາຊົນເຮົານິຍົມຊົມຊອບເຫມືອນກັນ, ຜະຫຍາມີລັກສະນະຍ້ອງຍໍຄວາມຮັກທີ່ສົດໃສ, ດີງາມຂອງໄວຫນຸ່ມ; ຍ້ອງຍໍຊີວິດການກິນຢູ່ອັນອຸດົມສົມບູນຂອງປະ ຊາຊົນ ແລະ ສ່ອງແສງຄວາມຄຽດຊັງຂອງປະຊາຊົນຕໍ່ສັດຕູ.

ສິລະປະວັນນະຄະດີປະຊາສາມັນ ຂອງປະຊາຊົນລາວເຮົາອຸ ດົມສົມບູນດີແນວນັ້ນ; ແຕ່ຍ້ອນປະເທດລາວເຮົາເວລາໃດກໍ່ຖືກພວກ ສັກດີນາຕ່າງປະເທດເຂົ້າມາຮຸກຮານ. ເປັນຕົ້ນແມ່ນພວກສັກດີນາໄທໄດ້

ເຂົ້າມາປົກຄອງປະເທດລາວເຮົາຕັ້ງເປັນສອງຄັ້ງ. ພວກມັນໄດ້ມ້າງເພສີລະປະວັນນະຄະດີຂອງລາວເຮົາເຊັ່ນ; ວັດອາອາຮາມແລະທາດທີ່ເກົ່າແກ່ຕ່າງໆຢູ່ວຽງຈັນ, ປາກເຊ, ຊຽງຂວາງຖືກມ້າງເພ, ນິພົນຫລາຍບົດຖືກພວກມັນຈູດຖິ້ມຫລືລັກເອົາໄປ. ໃນນັ້ນມີພະແກ້ວຊຶ່ງ ມູນມັງມໍລະດົກຂອງຊາດກໍ່ຖືກພວກມັນປຸ້ນເອົາໄປ.

ໃນໄລຍະຫົກສິບກ່ວາປີທີ່ຖືກພວກຝະລັ່ງປົກຄອງ, ພວກລ່າ ເມືອງຂຶ້ນຝະລັ່ງດ້ານຫນຶ່ງສືບຕໍ່ການລັກປຸ້ນ ເອົາມູນມັງມໍລະດົກວັດທະ ນະທຳຂອງປະຊາຊົນລາວເຮົາ, ອີກດ້ານຫນຶ່ງພວກມັນໄດ້ຊອກຫາທຸກວິທີເພື່ອຢຽບຢ່ຳ, ຈົດກັ້ນວັນນະຄະດີລາວເຮົາລົງບໍ່ໃຫ້ເຜີຍແຜ່ໃນໄລຍະສາມສ່ວນສີ່ຂອງສັດຕະວັດ, ທົ່ວປະເທດລາວເຮົາບໍ່ມີຮອດ ຫນັງ ສືພິມສະບັບ ຫນຶ່ງທີ່ພິມດ້ວຍພາສາລາວ, ວັນນະຄະດີບູຮານຂອງ ລາວບໍ່ໄດ້ຄົ້ນຄ້ວາແລະເຜີຍແຜ່, ກົງກັນຂ້າມພວກມັນໄດ້ນຳເອົາປຶ້ມປະ ຕິກິລິຍາ ແບບລ່າເມືອງຂຶ້ນເຂົ້າມາປະເທດເຮົາຫລືຈັດພິມປຶ້ມບູ ຮານສາສະຫນາທີ່ຖືກຕາມທັດສະນະຂອງພວກມັນ, ດ້ວຍເຈຕະນາເພື່ອຮັບໃຊ້ການປົກຄອງ, ການກົດຂີ່ຂູດຮີດຂອງພວກມັນຕໍ່ປະຊາຊົນລາວເຮົາແລະເຮັດໃຫ້ປະຊາຊົນລາວໂງ່ຈ້າຫລ້າຫລັງ. ເພື່ອໃຫ້ພວກມັນ ປົກຄອງໄດ້ງ່າຍໃນປະຈຸບັນ, ປຶ້ມປະຕິກິລິຍາເຫລົ່ານັ້ນທຸ່ນວຽງຈັນຍັງນຳມາເຜີຍແຜ່, ຍ້ອງຍໍສັນລະເສີນ, ນອກນັ້ນທຸ່ນວຽງຈັນ ຍັງໄດ້ນຳເອົາວັດທະນະທຳປະຕິກິລິຍາຂອງຈັກກະພັດອາເມລິກາ ແລະບັນດາ ປະເທດຝ່າຍຕາເວັນຕົກ ເຂົ້າມາເຜີຍແຜ່ຕື່ມອີກ. ໃນສະຖານະການນັ້ນວັນນະຄະດີປະຊາສາມັນ, ວັດທະນະທຳອັນແທ້ຈິງຂອງປະຊາຊົນລາວຍັງຄົງເຜີຍແຜ່ໃນຫມູ່ມະຫາຊົນຜູ້ອອກແຮງງານເມືອປະເທດ ລາວ

ເຮົາ ໄດ້ປະກາດເອກກະລາດແລະການປະຕິວັດລາວໃຕ້ການ ນຳພາຂອງແນວລາວຮັກຊາດ, ວັດທະນະທຳ ປະຊາສາມັນຂອງປະຊາ ຊົນລາວເຮົາຍິ່ງ ໄດ້ເຜີຍແຜ່ແລະເຕີບໃຫຍ່ຢ່າງ ໄວວາກວ່າຍາມໃດໝົດ.

ໃຕ້ການນຳພາຂອງແນວລາວອິດສະຫລະຄາວກ່ອນແລະແນວລາວຮັກຊາດໃນປະຈຸບັນ, ຂະບວນການຕໍ່ສູ້ກູ້ຊາດຂອງປະຊາຊົນລາວເຮົາໄດ້ກ້າວເຂົ້າສູ່ລະດັບ ໃຫມ່ຊຶ່ງບໍ່ເຄີຍມີໃນປະຫວັດສາດລາວ, ໃນການຕໍ່ສູ້ຕ້ານພວກລ່າເມືອງຂຶ້ນຝະລັ່ງຄາວກ່ອນ, ໂດຍສະເພາະແມ່ນການຕໍ່ສູ້ຕ້ານພວກຈັກກະພັດອາເມລິກາ ເມື່ອກ່ອນ; ປະຊາຊົນ ລາວເຮົາດ້ວຍນ້ຳໃຈຮັກຊາດອັນສູງສົ່ງ, ຈິດໃຈຕໍ່ສູ້ອັນແຮງກ້າ ໄດ້ລຸກ ຂຶ້ນຕໍ່ສູ້ຕ້ານກັບອາວຸດທີ່ທັນສະໄຫມຂອງຈັກກະພັດອາເມລິກາເຮັດໃຫ້ລົດຕັງຂອງພວກມັນກາຍເປັນກອງເຫລັກຂີ້ຫມ້ຽງ, ເຮືອບິນ ທີ່ທັນ ສະໄຫມຖືກຝັງຄາບຢູ່ຕອນດິນທີ່ພວກມັນມາກໍ່ໂທດກຳແລະປືນໃຫຍ່ ຂອງພວກມັນຈຳຕ້ອງມິດສຽງ ແລະ ໄດ້ສ້າງຫລາຍກົມກອງແລະບຸກ ຄົນກາຍເປັນນັກວິລະຊົນໃນປະຈຸບັນປະຊາຊົນລາວທົ່ວຊາດ ໄດ້ກ້າວເຂົ້າຕັດສິນໂຊກຊະຕາກຳຂອງຕົນ, ໂຊກສະຕາກຳຂອງຊາດ.

ຄຽງຄູ່ກັບການເຕີບໃຫຍ່ຂອງການປະຕິວັດ. ພາຍໃຕ້ແນວ ທາງເສີມຂະຫຍາຍສິລະປະວັນນະຄະດີ ອັນຖືກຕ້ອງ, ສອດຄ່ອງຂອງແນວລາວຮັກຊາດ; ວັນນະຄະດີ ປະຕິວັດ ໄດ້ກຳເນີດແລະຂະຫຍາຍ ຢ່າງໄວວາ. ວັນະຄະດີປະຕິວັດເປັນວັນນະຄະດີແບບໃຫມ່ຊຶ່ງ ໄດ້ຂັດ ຈ້ອນເອົາຍອດກະທິອັນດີງາມຂອງວັນນະຄະດີແຫ່ງຊາດ, ເປັນຕົ້ນແມ່ນວັນນະຄະດີປະຊາສາມັນແລະວັນນະຄະດີທີ່ກ້າວໜ້າໃນໂລກ. ວັນນະຄະດີປະຕິວັດ ໄດ້ນຳເອົາຊີວິດໃຫມ່ທີ່ອຸດົມສົມບູນ ແລະ ເສັ້ນທາງ ໃຫມ່

ມາສູ່ວັນນະຄະດີແຫ່ງຊາດຊຶ່ງແຕ່ໃດມາບໍ່ເຄີຍມີຈັກເທື່ອວັນນະຄະ ດີປະຕິວັດຕ່າງກັບວັນນະຄະດີປະຕິການຂອງຝ່າຍຂວາຊຶ່ງແມ່ນພວກອາເມລິການຳເອົາເຂົ້າມາ ແລະ ພວກຫຸ່ນວຽງຈັນ ກຳລັງນິຍົມຊົມໃຊ້ ເພື່ອຫວັງໃຊ້ວັນນະຄະດີແບບນັ້ນມາຮັບໃຊ້ແນວທາງ ປະຕິການຂອງພວກມັນ ແລະ ເບື່ອເມົາແນວຄິດອັນຊົ່ວຊ້າຫລ້າຫລັງ,ການດຳລົງຊີວິດແບບ (ໂລກເສລີ) ຂອງອາເມລິກາ ໃຫ້ແກ່ປະຊາຊົນລາວເຮົາ ຈຸດຫນັກແມ່ນພວກໄວຫນຸ່ມ ແລະ ເຍົາວະຊົນ ດູດດຶງເອົາຊາວຫນຸ່ມແລະເຍົາວະຊົນກ້າວເຂົ້າສູ່ເສັ້ນທາງເປັນນັກເລງແລ້ວກາຍໄປເປັນທະຫານຮັບຈ້າງໃຫ້ແກ່ພວກມັນ.

ວັນນະຄະດີປະຕິວັດລາວເຖິງວ່າຫາກໍ່ກຳເນີດ ແລະຫນຸ່ມນ້ອຍ ກໍຕາມແຕ່ມັນໄດ້ສ່ອງແສງຫລາຍບັນຫາທີ່ສຳຄັນຂອງການປະຕິວັດຊາດປະຊາທິປະໄຕຢູ່ລາວດ້ວຍຮູບປະພັນວັນນະຄະດີ,ບັນດານັກປະ ພັນລາວເຮົາໄດ້ສ່ອງແສງການຕໍ່ສູ້ອັນດຸເດືອດ,ສັບສົນ,ແຕ່ກໍ່ສຸດທີ່ພິ ລະອາດຫານທີ່ສຸດແລະໄດ້ເວົ້າເຖິງຄວາມ ເຊື່ອຫມັ້ນຂອງປະຊາ ຊົນລາວເຮົາຕໍ່ການປະຕິວັດສຸດທ້າຍຈະຕ້ອງໄດ້ຮັບໄຊຊະນະແນ່ ນອນບັນດານັກປະພັນລາວໄດ້ຢັ້ງຢືນໃຫ້ເຫັນແຈ້ງເຖິງກຳລັງອັນແຂງ ກ້າເຖິງອຸດົມຄະຕິ,ເຖິງຈິດໃຈຄຽດແຄ້ນສັດຕູ,ເດັດດ່ຽວຕໍ່ສູ້ຂອງປະຊາຊົນລາວເຮົາ. ເຂົາ (ບັນດານັກ ປະພັນ) ໄດ້ສ່ອງແສງໃຫ້ພວກເຮົາເຫັນແຈ້ງຄວາມເຕີບໃຫ່ຍຂະຫຍາຍຕົວໃນທຸກດ້ານຂອງການປະຕິວັດແລະເສັ້ນທາງອະນາຄົດຂອງປະເທດຊາດ.

ຈຸດພິເສດຂອງວັນນະຄະດີປະຕິວັດແມ່ນຮັບໃຊ້ການປະຕິວັດ, ຮັບໃຊ້ການຕໍ່ຕ້ານ,ຮັບໃຊ້ແນວທາງ ນະໂຍບາຍຂອງແນວລາວຮັກຊາດ

ຮັບໃຊ້ປະຊາຊົນ ເພາະສະນັ້ນບັນດານັກປະພັນລາວເຮົາເວລາ ໃດ
ກໍ່ກຳແໜ້ນຕົວຈິງ ການຕໍ່ສູ້ແລະເພີ່ມພູນພະລິດພົນຂອງກອງທັບແລະ
ປະຊາຊົນລາວ, ອີງໃສ່ຄວາມຈິງຂອງການປະຕິວັດທີ່ອຸດົມ ສົມບູນ
ເຫຼົ່ານັ້ນເພື່ອປະດິດຄິດແຕ່ງບັນດາບົດນິພົນ ທີ່ດີເລີດ,ມີເນື້ອໃນຮັກ
ຊາດ,ລັດທິວິລະຊົນ ແລະຄວາມປະເອີບໃຈຕໍ່ການປະຕິວັດ. ກໍ່ ສ້າງ
ສີລະປະວັນນະຄະດີທີ່ມີລັກສະນະຊາດ,ວິທະຍາສາດແລະລັກສະ ນະ
ມະຫາຊົນ,ວັນນະຄະດີປະຕິວັດເຖິງວ່າຍັງໜຸ່ມນ້ອຍກໍຕາມແຕ່ມັນສົດ
ໃສແລະສວຍງາມທີ່ສຸດຄືດັ່ງດອກຈຳປາ,ດອກຂະຍອມ,ດອກບານ ,
ດອກຈິກ,ດອກຮັງກຳລັງບານໃນລະດູບານໃໝ່ຂອງ ໄຊຊະນະ.ຕໍ່ກັບ
ວັນນະຄະດີປະຕິວັດ,ບັນຫາທີ່ພວກເຮົາ ຄວນເອົາໃຈໃສ່ກ່ອນໝູ່ນັ້ນ
ຄືກຳລັງນັກຂຽນ,ນັກແຕ່ງນັບມື້ນັບເຕີບໃຫຍ່ໃນຖັນແຖວຂອງບັນ ດາ
ນັກປະພັນນັກປະຕິວັດ,ຄຽງຄູ່ກັບບັນດານັກປະພັນ,ນັກກະວີຊຸດ ກ່ອນ
ເຊັ່ນ;ທ່ານພູມີວົງວິຈິດ,ທ່ານສີຊະນະສີສານ,ທ່ານອຸຕະມະ,ທ່ານຄຳ
ມາພົມກອງ,ທ່ານສົມສີເດຊາ;ປະຈຸບັນ ໄດ້ປະກົດມີບັນດານັກປະ ພັນ
ນັກກາວີທີ່ໜຸ່ມນ້ອຍ. ເຂົາ ໄດ້ເກີດຂຶ້ນໃນສະ ໄໝຕໍ່ສູ້ຕ້ານຈັກກະ ພັດ
ອາເມລິກາບັນດາບົດນິພົນຂອງເຂົາເຈົ້າທາງດ້ານເນື້ອໃນແລະສີລະ
ປະການແຕ່ງກໍ່ ໄດ້ຮັບຜົນສຳເລັດດີພໍສົມຄວນເຊັ່ນ:ຈ. ເດືອນສະຫວັນ
ຄຳລຽງ ພົນເສນາ,ສຸວັນທອນ,ວັນ ໄຊ. ທອງອິນພົມກອງ,ສົມບູນທະ
ວີ ໄຊ,ຄຳພາຍພິລາວົງແລະອື່ນໆ...ບັນດານັກປະພັນທີ່ໜຸ່ມນ້ອຍ ມີ
ປະກອບຫລາຍພາກສ່ວນ,ຫລາຍຊົນຊາດ. ເຂົາກຳເນີດຈາກຊົນ ຊັ້ນ
ຊາວນາ, ເປັນນັກຮົບ,ພະນັກງານການເມືອງ,ກຳມະກອນ,ຂ້າ ລາ
ຊະການເກົ່າ,ນັກສຶກສາທີ່ຫາກໍ່ກັບມາຈາກຕ່າງປະເທດ;ດ້ວຍນ້ຳໃຈ

ຮັກນັກວັນນະຄະດີ ແລະ ເຕີບໃຫ່ຍໃນທ່າມກາງສຽງປືນຂ້າສັດຕູ ທີ
ກຳລັງພົດສະໜັ່ນທົ່ວປະເທດ, ເຂົາໄດ້ຊອກຫາເສັ້ນທາງປະດິດ ຄິດ
ແຕ່ງ. ແຕ່ລະບົດນິພົນຂອງເຂົາເຈົ້າໄດ້ກາຍເປັນອາວຸດອັນແຫລມຄົມ
ເພື່ອດັບສູນສັດຕູ; ແຕ່ລະບົດເພງ, ກອນລຳ, ເລື່ອງສັ້ນ, ບົດບັນທຶກບົດ
ລະຄອນແລະບົດເລື່ອງນາວະນິຍາຍຂອງເຂົາເຈົ້າ ທີ່ໄດ້ຫລໍ່ ຫລອມ
ໃນແປວໄຟ ສົງຄາມປົດປ່ອຍຊາດໄດ້ອົບອຸ່ນຈິດໃຈຂອງອ້າຍນ້ອງນັກ
ຮົບ ກອງທັບປົດປ່ອຍປະຊາຊົນລາວກ່ອນເວລາຈະແຕກສຽງປືນ ໄດ້
ເປັນການເພີ່ມກຳລັງແຮງ ໃຫ້ບັນດາເອື້ອຍນ້ອງ ກອງລຳລຽງ ອາ
ວຸດອອກໄປສູ່ແນວໜ້າ, ເຮັດໃຫ້ໃບໜ້າ ໂສກເຫງົາຂອງພວກແມ່ທີ
ຖືກເຄາະຮ້າຍຈາກສົງຄາມເກົ່າໄດ້ເບີກບານມ່ວນຊື່ນແລະເຮັດ ໃຫ້
ສຽງຮ້ອງ, ສຽງລຳຂອງພວກນ້ອງເຍົາວະຊົນນັບມື້ ນັບແຈ້ງໃສ, ທຳ
ໃຫ້ຈິດໃຈຂອງພວກທະຫານຫຸ່ນຖືກປັ່ນປ່ວນປະປືນກັບມາຫາສິນທຳປະ
ຕິວັດ, ເພາະສະນັ້ນ, ບົດນິພົນຂອງບັນດານັກປະພັນລາວບໍ່ພຽງແຕ່ໄດ້
ປະຊາຊົນທົ່ວປະເທດນິຍົມຊົມຊອບ, ຍັງມີນັກອ່ານທົ່ວໂລກສະໜັບສະ
ໜູນອີກດ້ວຍ. ອີກດ້ານໜຶ່ງ, ພວກເຮົາຂໍເວົ້າແຈ້ງ. ໃນຖັນແຖວຂອງ
ນັກປະພັນລາວ. ພວກເຮົາເຫັນວ່ານັກປະພັນເກົ່າມີໜ້ອຍທີ່ສຸດ. ພິ
ເສດແມ່ນປະເພດວັນນະຄະດີ ຄຳຮ້ອຍແກ້ວອາດເວົ້າໄດ້ວ່າບໍ່ມີ ຈັກ
ຄົນເລີຍເພາະສະນັ້ນແນວຄິດອັນຜິດພາດຂອງຊົນຊັ້ນນາຍທຶນຈຶ່ງບໍ່ ມີ
ເງື່ອນໄຂເຊື່ອມຊຶມເຂົ້າໃນວັນນະຄະດີປະຕິວັດລາວ.

ວັນນະຄະດີ ປະຕິວັດລາວ ໄດ້ປະກົດຕົວກ່ອນນີ້ປະມານຊາວກ່ວາ
ປີ ແຕ່ໃນລະຫວ່າງສິບກ່ວາປີເບື້ອງຕົ້ນ, ພວກເຮົາຫາກໍ່ພົບພໍ້ບາງບົດ
ເລື່ອງສັ້ນທີ່ພິມຕາມບັນດາໜັງສືພິມອິດສະຫລະ, ສະນັ້ນໃນໄລຍະ ນີ້

ວັນນະຄະດີປະຕິວັດຈຶ່ງມີລັກສະນະໜັງສືພິມ ແລະຍັງບໍ່ທັນເຫັນມີນັກປະພັນ. ສ່ວນຫລາຍແມ່ນພະນັກງານອິດສະຫລະຫລືນັກລົບອິດສະຫລະ ຈົນມາເຖິງລະຫວ່າງປີ 1965 ນີ້, ທ່າມກາງການເຕີບໃຫ່ຍຢ່າງຮຸນແຮງຂອງການປະຕິວັດ, ວັນນະຄະດີປະຕິວັດໄດ້ເຕີບໃຫ່ຍຢ່າງ ວ່ອງໄວ, ບົດນິພົນສັ້ນ, ບົດເລື່ອງນາວະນິຍາຍຫລາຍເຫລັ້ມໄດ້ຈັດພິມອອກ ແລະຈຳໜ່າຍໄປທົ່ວປະເທດ.

ເຖິງຢ່າງໃດກໍ່ຕາມ ຄຽງຄູ່ກັບຜົນງານ ອັນຍິ່ງໃຫ່ຍທີ່ໄດ້ເວົ້າມານັ້ນ, ໃນວັນນະຄະດີປະຕິວັດຂອງພວກເຮົາກໍ່ຍັງມີບາງຈຸດອ່ອນ ສຳລອງອີກ. ຖ້າພວກເຮົາອ່ານໝົດທຸກບົດນິພົນວັນນະຄະດີປະຕິວັດ (ຢູ່ນີ້ພວກເຮົາຂໍເວົ້າສະເພາະພຽງແຕ່ວັນນະຄະດີຮ້ອຍແກ້ວເທົ່ານັ້ນ ) ພວກເຮົາຈະເຫັນໄດ້ວ່າຕົວເລື່ອງທົ່ວໄປນັ້ນແມ່ນເລື່ອງສູ້ຮົບ, ເຫດການນີ້ເວົ້າລວມແມ່ນດີ, ເພາະມັນຕອບສະໜອງໄດ້ຕາມຄວາມຕ້ອງການຂອງການປະຕິວັດ, ແຕ່ຖ້າຫາກເປັນແບບນີ້ຕະຫລອດໄປ ພວກເຮົາເຫັນວ່າວັນນະຄະດີປະຕິວັດລາວຈະບໍ່ສ່ອງແສງໄດ້ທຸກດ້ານຂອງການປະຕິວັດອີກດ້ານໜຶ່ງຖ້າເວົ້າເຖິງວັນນະຄະດີແມ່ນເວົ້າເຖິງຄົນເວົ້າເຖິງວັນນະຄະດີປະຕິວັດຈະຕ້ອງເວົ້າເຖິງຄົນປະຕິວັດ, ຄົນແບບໃໝ່, ນັ້ນມັນແມ່ນບຸກຄົນທີ່ມີອຸດົມຄະຕິສູງສົ່ງ, ສ່ວຍງາມແລະເຂົາຕໍ່ສູ້ເພື່ອປະຕິບັດອຸດົມຄະຕິຂອງເຂົາໃຫ້ເກີດເປັນຕົວຈິງ. ຄົນແບບໃໝ່ທີ່ດຳລົງຊີວິດຢູ່ໃນສະໄໝຂອງການປະຕິວັດ ບໍ່ແມ່ນມີພຽງແຕ່ປະກົດຕົວຢູ່ສະໜາມຮົບເທົ່ານັ້ນ; ມັນຍັງປະກົດຕົວໃນວຽກງານດ້ານອື່ນໆຂອງການປະຕິວັດ. ໃນວັນນະຄະດີປະຕິວັດຍັງຂາດບົດນິພົນທີ່ ເວົ້າເຖິງການກໍ່ສ້າງເຂດປົດປ່ອຍແລະຊີວິດການເປັນຢູ່ຂອງປະຊາ ຊົນ

ໃນເຂດປົດປ່ອຍ,ບົດເລື່ອງຕ່າງໆໃນວັນນະຄະດີປະຕິວັດສ່ວນຫລວງຫລາຍແມ່ນຂຽນແບບເລົ່າເລື່ອງຈິງຄົນແທ້,ສິລະປະການແຕ່ງກໍ່ ຍັງອ່ອນແລະມີບາງກໍລະນີຍັງບໍ່ທັນ ເຫມາະສົມປານໃດ,ບັນຫານີ້ ພວກເຮົາຍັງຈະເວົ້າລະອຽດຕື່ມອີກໃນເນື້ອໃຈ້ແຍກຕົວຈິງຂອງແຕ່ລະບົດນິພົນ.

ເຖິງວ່າຈະມີບາງ ຈຸດອ່ອນ ສຳລອງຄືແນວນັ້ນ ກໍ່ຕາມເພື່ອຢາກແກ້ໄຂໄດ້ຈຸດອ່ອນເຫລົ່ານັ້ນຈະຕ້ອງໃຊ້ເວລາຕື່ມອີກຈຶ່ງສາມາດ ດັດແປງໄດ້.ຈຸດຫນັກພວກເຮົາຈະຕ້ອງເຫັນແຈ້ງຜົນສຳເລັດອັນຍິ່ງໃຫ່ຍຂອງວັນນະຄະດີປະຕິວັດແລະພວກເຮົາຈະຕ້ອງເຊື່ອແນ່ວ່າໃຕ້ ການນຳພາຂອງສູນກາງແນວລາວຮັກຊາດ,ວັນນະຄະດີປະຕິວັດລາວ ໄດ້ນັບມື້ເຕີບໃຫ່ຍແລະຈະ ໄດ້ຮັບຜົນສຳເລັດຍິ່ງໃຫ່ຍກ່ວານີ້ຕື່ມອີກ.

# ພາກ *II*

## ເນື້ອໃນ

## ເນື້ອໃນປະກົດການເປັນຈິງໃນວັນນະຄະດີປະຕິວັດລາວ

ໃນພາກນີ້ພວກເຮົາຈະເວົ້າຜ່ານກ່ຽວກັບຫົວເລື່ອງໃຫຍ່ ຈຳນວນໜຶ່ງແລະເນື້ອໃນທີ່ສຳຄັນ, ຕົ້ນຕໍຊຶ່ງໃນບົດປະພັນວັນນະຄະດີປະຕິວັດລາວໄດ້ສ່ອງແສງແລະເວົ້າເຖິງຫລັງຈາກນັ້ນ, ພວກເຮົາຈະພ້ອມກັນຊອກຮູ້ຕື່ມເຖິງຕົວລະຄອນຈຳນວນທີ່ເດັ່ນ, ນັ້ນແມ່ນບັນດາບຸກຄົນແບບໃໝ່, ດຳລົງຊີວິດໃນແປວໄຟຂອງສົງຄາມປະຕິວັດຊຶ່ງບັນດານັກ ປະພັນ, ນັກຂຽນໄດ້ສະແດງອອກໃນບົດເລື່ອງຕ່າງໆແລະທ້າຍສຸດ ພວກເຮົາຈະຂໍຍົກບາງຄຳເຫັນສັງເກດຈຸດດີແລະຈຸດອ່ອນໃນວັນນະ ຄະດີປະຕິວັດລາວ.

# ຫົວເລື່ອງທີ່ເວົ້າເຖິງ "ໄປຊອກຫາແສງສະຫວ່າງຂອງການປະຕິວັດ"

ດັ່ງພາກທີໜຶ່ງທີ່ພວກເຮົາໄດ້ເວົ້າຜ່ານມາ: ໃນໄລຍະຊາວກວ່າປີທີ່ຜ່ານມາ (1945–1972), ການປະຕິວັດລາວໃຕ້ການນຳພາຂອງສູນກາງ ແນວລາວຮັກຊາດໄດ້ດຳເນີນການຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາ, ການຕໍ່ສູ້ນັ້ນມາເຖິງປະຈຸບັນໄດ້ກາຍເປັນປັດໃຈອັນ ຍິ່ງໃຫຍ່ຂອງທຸກຊົນຊາດ, ຊົນຊັ້ນຢູ່ລາວການປະຕິວັດລາວໄດ້ວາງ ຮາກຖານໃຫ້ແກ່ວັນນະຄະດີປະຕິວັດກຳເນີດແລະຂະຫຍາຍຕົວ, ເພາະສະນັ້ນໃນເມື່ອພວກນັກປະພັນ, ນັກຂຽນຂອງລາວເຮົາ ກ້າວເຂົ້າ ສູ່ເສັ້ນທາງວັນນະຄະດີ, ເຂົາມີຄວາມສະດວກຫລາຍສິ່ງຫລາຍຢ່າງ.

ອາດຈະເວົ້າໄດ້ວ່າ: ຫົວເລື່ອງທີ່ບັນດານັກຂຽນມັກສຸມໃສ່ ຫລາຍກວ່າໝູ່ແມ່ນບັນຫາ "ໄປຊອກຫາແສງສະຫວ່າງຂອງການປະຕິ ວັດ" ຄົນທີໄປຊອກຫາແສງສະຫວ່າງຂອງການປະຕິວັດກ່ອນອື່ນແມ່ນ ຈຳພວກຄົນທີ່ທຸກຍາກອັບຈົນ. ເປັນຊັ້ນຄົນຕ່ຳຕ້ອຍຂອງສັງຄົມເກົ່າ ເລືອດເນື້ອເຫື່ອແຮງແລະຈິດໃຈຂອງພວກເຂົາຖືກສັງຄົມເກົ່າກົດຂີ່ຂົ່ມເຫັງຢຽບຢ່ຳພວກເຂົາແມ່ນຈຳພວກຊາວນາທີ່ຖືກສັງຄົມເກົ່າກົດຂີ່ຂູດ ຮີດແມ່ນພວກເອື້ອຍນ້ອງທີ່ຖືກສັງຄົມເກົ່າຢຽບຢ່ຳ. ສັງຄົມເກົ່າດູຖູກແມ່ນພວກເດັກນ້ອຍກຳພ້າກຳພອຍຂໍກິນຕາມຕະຫລາດຫລືແມ່ນຊາຍ ແລະຍິງໜຸ່ມຮັກຊາດ, ບໍ່ຍອມດຳລົງຊີວິດພາຍໃຕ້ສັງຄົມທີ່ເໜົ່າເໝັນ, ຕ່ຳຕ້ອຍໄດ້ພ້ອມກັນອອກມາຫາແສງສະຫວ່າງຂອງການປະຕິວັດ. ສະພາບແວດລ້ອມແລະບົນເສັ້ນທາງອອກມາຫາການປະຕິວັດຂອງ ເຂົາ

ເຈົ້າແຕກຕ່າງກັນ ແລະ ມີແຕ່ເສັ້ນທາງ ອອກມາຫາການປະຕິ ວັດ
ເທົ່ານັ້ນຈິງຈະສາມາດກູ້ເອົາຊີວິດ ຂອງພວກເຂົາຄືນໄດ້,ຖ້າ ພວກ
ເຮົາເບິ່ງຄືນບົດນິພົນທີໄດ້ຈຳໜ່າຍແຕ່ຄາວກ່ອນຄື:ປຶ້ມເລືອງ (ແສງ
ສະຫວ່າງຂອງການປະຕິວັດ)ຂອງນັກແຕ່ງ ຈ.ເດືອນສະຫວັນ. ນັກ
ແຕ່ງ ຈ. ເດືອນສະຫວັນ(ໃນເລືອງລາວໃສ່ຊື່ວ່າຂ້ອຍ), ໄດ້ ເລົ່າ
ຄືນເສັ້ນທາງເດີນແຫ່ງຊີວິດອັນທຸກຍາກຂອງລາວເພືອໄປຊອກ ຫາ
ແສງສະຫວ່າງຂອງການປະຕິວັດແລະເວົ້າເຖິງບຸນຄຸນຂອງການ ປະ
ຕິວັດທີໄດ້ກູ້ເອົາຊີວິດຂອງລາວ ກໍ່ຄືຄົນທີທຸກຍາກ ອອກຈາກ ຄວາມ
ມືດມົນ.ນັກຂຽນຈ. ເດືອນສະຫວັນເກີດຢູ່ໃນຄອບຄົວຊາວນາມີຢູ່ພໍກິນ
ຄອບຄົວຂອງລາວຍ້ອນໃຫ້ພະນັກງານອິດສະຫລະຢູ່,ສະນັ້ນພໍ່ ຂອງ
ລາວຖືກສັດຕູຈັບ,ແຕ່ນັ້ນມາຄອບຄົວຂອງລາວຄ່ອຍຖືກຂູດໂຊມ ລົງ
ອ້າຍແລະເອື້ອຍຂອງສະຫາຍ ຈ.ຖືກຕາຍຍ້ອນອຶດຢາກແລະ ເຈັບ
ປ່ວຍບໍ່ມີຢາປົວ,ແມ່ຂອງລາວຈຳຕ້ອງຊັກຈູງລາວພັດພາກຈາກ ບ້ານ
ເກີດເມືອງນອນອັນແສນຮັກ,ທະເນຈອນຫາເຊົ້າກິນຄ່ຳຕາມ ບ້ານ
ເພິ່ນເມືອງອື່ນ,ແຕ່ແລ້ວສຸດທ້າຍແມ່ຂອງລາວກໍ່ຖືກລົ້ມຫາຍຕາຍຈາກ
ຍ້ອນໄປຮັບຈ້າງລ້ຳບາກກາກກຳ, ປະລາວຄົນດຽວດຳເນີນຊີວິດ ໃນ
ສັງຄົມເກົ່າອັນຕ່ຳຕ້ອຍແລະເນົ່າເຫມັນ.ບໍ່ສາມາດດຳເນີນຊີວິດ ໃນ
ສັງຄົມຫມືດມົນ.ເນົ່າເຫມັນນັ້ນໄດ້ຕໍ່ໄປອີກ,ສະຫາຍ ຈ.ເດືອນ ສະ
ຫວັນໄດ້ໄປຊອກຫາແສງສະຫວ່າງຂອງການປະຕິວັດ; ໄດ້ການປະ ຕິ
ວັດສິດສອນ ແລະ ຫລໍ່ຫລອມລາວແຕ່ເດັກກຳພອຍ.ທຸກຈົນຄົນ ຫນຶ່ງ
ກາຍເປັນພະນັກງານຂອງການປະຕິວັດ.ຊີວິດຂອງສະຫາຍ ຈ.ເດືອນ
ສະຫວັນກໍ່ຄ້າຍຄືກັນກັບຊີວິດຂອງເດັກນ້ອຍ,ທຸກຈົນຫລາຍພັນຄົນເອົາ

ຈະ ໄດ້ກາຍເປັນຄົນຜູ້ໜຶ່ງທີ່ມີຄວາມໝາຍອັນຄົບຖ້ວນກໍ່ໃນເມື່ອເຂົາ ໄດ້ພົບພໍ້ແສງສະຫວ່າງຂອງການປະຕິວັດແລະການປະຕິວັດ ໄດ້ກູ້ເອົາຊີວິດຂອງເຂົາຄືນມາ.

ໃນປຶ້ມເລື່ອງ (ແສງສະຫວ່າງຂອງການປະຕິວັດ)[1] ສະຫາຍ ຈ. ເດືອນສະຫວັນຍັງໃຫ້ພວກເຮົາເຫັນແຈ້ງຄວາມກົງກັນຂ້າມລະຫວ່າງສອງສັງຄົມ ແລະ ການພົວພັນລະຫວ່າງຄົນຕໍ່ຄົນໃນສອງສັງຄົມ ນັ້ນ ສັງຄົມໜຶ່ງມືດມົນ, ເຕັມແຕ່ຄວາມອຶດຢາກທຸກຈົນ, ເຫື່ອເໝັນແລະນັບມື້ນັບສຸດໂຊມລົງ ແລະ ຈຳຕ້ອງປະໃຫ້ສັງຄົມໃໝ່ອັນດີງາມ ມາປ່ຽນສັງຄົມເກົ່ານັ້ນ, ເຖິງວ່ານັກຂຽນພຽງແຕ່ເວົ້າຜ່ານ ເປັນບາງເລັກນ້ອຍເທົ່ານັ້ນ. ແຕ່ມັນເຮັດໃຫ້ເຫັນແຈ້ງເສັ້ນທາງອັນດີງາມຂອງສັງຄົມລາວໃນອະນາຄົດ ກົງກັນຂ້າມກັບສັງຄົມເກົ່າ. ຢູ່ສັງຄົມໃໝ່ທຸກການພົວພັນລະຫວ່າງຄົນເຮົາດ້ວຍກັນທີ່ດຳລົງຊີວິດຢູ່ເທິງແຜ່ນດິນ (ອິດສະຫລະ) ແມ່ນການພົວພັນທີ່ເຕັມໄປດ້ວຍຄວາມຮັກແພງ. ສະໜິດສະໜົມລະຫວ່າງເພື່ອນມິດສະຫາຍທີ່ໄດ້ຮ່ວມທຸກຮ່ວມສຸກນຳກັນມີບາງຄົນມີເສື້ອສອງຜືນກໍ່ປັນໃຫ້ຂ້ອຍຜືນໜຶ່ງ, ໃຜມີສິ່ງສັ້ນກໍ່ເອົາໃຫ້ມີ ບາງອ້າຍມີໝວກໜ່ວຍດຽວກໍ່ເອົາໃຫ້ຂ້ອຍເພາະຢ້ານ ຂ້ອຍເຈັບຫົວ; ເຖິງເວລາກິນ, ອ້າຍນ້ອງກໍ່ແບ່ງໃຫ້ຂ້ອຍກິນເທົ່າພວກອ້າຍນ້ອງອື່ນໆ, ຫລືວ່າມີບາງເທື່ອພົບພໍ້ຄວາມຫຍຸ້ງຍາກພວກເພິ່ນໄດ້ ປະໃຫ້ຂ້ອຍກິນໝົດແລະທັງເວົ້າວ່າ: "ນ້ອງຍັງນ້ອຍ, ຈົ່ງພະຍາ ຍາມເພື່ອໄປໃຫ້ທັນ ພວກອ້າຍ ສ່ວນພວກອ້າຍແມ່ນຍັງແຂງແຮງຢູ່ຄວາມ

---

1. ພິມຄືນເທື່ອທີສອງ ໄດ້ໃສ່ຊື່ວ່າ "ເສັ້ນທາງແຫ່ງຊີວິດ"

ເວົ້າແລະການປະພຶດຂອງພວກອ້າຍສັງມາກົງກັນຂ້າມກັບຈຳພວກຄົນຊຶ່ງຂ້ອຍໄດ້ດຳເນີນຊີວິດນຳເຂົາແຕ່ຄາວກ່ອນ; ແຕ່ກ່ອນພວກເຂົາກິນເຂົ້າຂາວກັບຊີ້ນລວກ, ຊີ້ນຈີ່, ສ່ວນຂ້ອຍກິນແປ້ງສາລີ ກັບແກງ ຈືດປານນັ້ນພວກເຂົາຍັງອ້າປາກເວົ້າວ່າ:

- "ມຶງຍັງໜຸ່ມກິນຫຍັງກໍ່ໄດ້, ພວກກູເປັນຜູ້ໃຫຍ່ກິນດີແບບມຶງບໍ່ໄດ້ ພວກມັນເອີ້ນຂ້ອຍວ່າ: "ບັກໂງ່, ບັກຈ້າ" ແຕ່ມາເຖິງປະຈຸບັນ: ພວກອ້າຍນ້ອງຢູ່ອ້ອມຂ້າງພັດເອີ້ນຂ້ອຍວ່າ: "ນ້ອງຊາຍ" ຫລື "ລູກ" ຫລານ (ຄັດຈາກປຶ້ມແສງສະຫວ່າງຂອງການປະຕິວັດ, ໜ້າ 31)

ດ້ວຍຮູບພາບປຽບທຽບ, ນັກຂຽນໄດ້ຈຳແນກຄວາມສີວິໄລ, ຄວາມປະພຶດຂອງຄົນໃນສອງສັງຄົມຕໍ່ຄົນທີ່ກົງກັນຂ້າມດີແນວໃດ, ສັງ ຄົມໜຶ່ງຊຸກຄົນເຮົາໄປສູ່ບ່ອນຕາຍ, ສ່ວນສັງຄົມໜຶ່ງດຶງສະຫາຍ ຈ. ເດືອນສະຫວັນ ໄດ້ເວົ້າ: "...ຂ້ອຍສຸດທີ່ດີໃຈເພາະເຫັນວ່າການປະຕິວັດໄດ້ກູ້ເອົາຊີວິດຄົນທຸກຍາກຫລາຍຮ້ອຍພັນຄົນອອກຈາກຄວາມມືດມົວ ແລະກ້າວໄປຫາແສງສະຫວ່າງຂອງການປະຕິວັດ ແລະ ອະນາຄົດອັນສວຍງາມ. ຊຶ່ງຢູ່ໃນຈຳພວກຄົນເຫລົ່ານັ້ນ ມີຂ້ອຍ.." ( ຄັດຈາກປຶ້ມແສງສະຫວ່າງຂອງການປະຕິວັດ, ໜ້າ 34).

ຖ້າໃນປຶ້ມເລື່ອງ "ແສງສະຫວ່າງຂອງການປະຕິວັດ" ນັກຂຽນ ຈ. ເດືອນສະຫວັນ ໄດ້ຕັ້ງບັນຫາໄປຊອກຫາແສງສະຫວ່າງຂອງການ ປະຕິວັດຂອງນ້ອງນ້ອຍຄົນໜຶ່ງແລະທຽບຊີວິດຂອງນ້ອງນ້ອຍນັ້ນຢູ່ ໃນສອງສັງຄົມທີ່ກົງກັນຂ້າມ, ມາເຖິງເລື່ອງ "ພັດພາກຈາກສີພັນດອນ" ຂອງເອື້ອຍວຽງເຮືອງ, ບັນຫາຕັ້ງຂຶ້ນກໍ່ຢາກຄ້າຍຄືກັນກັບ ເລື່ອງ "ແສງສະຫວ່າງຂອງການປະຕິວັດ", ແຕ່ໃນເລື່ອງ "ພັດພາກຈາກສີພັນ

ດອນ" ຈຸດໜັກແມ່ນ ເວົ້າເຖິງໂຊກຊະຕາກຳຂອງຜູ້ຍິງ, ຜູ້ຍິງລາວຢູ່ໃນສັງຄົມເກົ່າກໍ່ຄ້າຍຄືກັບຜູ້ຍິງຢູ່ຫລາຍປະເທດທີ່ຍັງບໍ່ທັນໄດ້ປົດປ່ອຍ ມີພຽງແຕ່ເປັນເຄື່ອງຫລິ້ນຂອງຜູ້ຊາຍເທົ່ານັ້ນ- ເອື້ອຍສາຍສະໝອນ (ຕົວລະຄອນໃນເລື່ອງພັດພາກຈາກສີພັນດອນ) ເປັນຕົວລະຄອນ ທີ່ເວົ້າເຖິງໂຊກຊະຕາກຳຂອງແມ່ຍິງລາວຢູ່ໃນສັງຄົມເກົ່າ. ເຂດ ສີດຕູຄອບຄຸມ- ເອື້ອຍເປັນນາງສາວຄົນໜຶ່ງທີ່ສວຍງາມຢູ່ສີພັນດອນ, ຄູ່ຮັກຂອງເອື້ອຍ. ອ້າຍຄຳມະນີເຂົ້າຮ່ວມການປະຕິວັດ, ຖ້າຢູ່ໃນສັງຄົມຈີບງາມ, ຊີວິດຂອງເອື້ອຍຈະໄດ້ຮັບຄວາມສຸກສະບາຍ, ແຕ່ ຍ້ອນເອື້ອຍຕົກຢູ່ໃນສັງຄົມເກົ່າ. ເພາະສະນັ້ນເອື້ອຍຖືກສັງຄົມເກົ່າ ຢຽບຢ່ຳຈົນເຖິງຂັ້ນຈຳຕ້ອງໂຕນນ້ຳຕາຍ ເຫດການທີ່ເອື້ອຍສາຍ ສະໝອນໂຕນນ້ຳຕາຍນັ້ນມັນໄດ້ສະແດງເຖິງທ່າທີໝົດຫວັງ, ບໍ່ຮູ້ ຈະຊອກຫາເສັ້ນທາງເດີນຕໍ່ໄປ- ມັນສະແດງເຖິງຄວາມຍໍທໍ້ຂອງ ເອື້ອຍ ດ້ານໜຶ່ງການກະທຳຂອງເອື້ອຍສາຍສະໝອນນັ້ນມັນໄດ້ສະ ແດງເຖິງການກ່າວປະນາມສັງຄົມເກົ່າອັນມືດມົນ, ເນົ່າ ເໝັນ ແລະອະທຳ- ແຕ່ສັງຄົມເກົ່າອັນເປິອນເປິ້ນຍັງບໍ່ທັນປະປ່ອຍ ເອື້ອຍ ເອື້ອຍຖືກເຂົ້າກູ້ເອົາຊີວິດຄືນມາ ແລະ ຖືກຈັບໄປເປັນນາງສາວຮັບແຂກຢູ່ໂອແຕນ (ອາດເວົ້າໄດ້ວ່າຖືກຈັບໄປໂຮງແມ່ຈ້າງກໍ່ໄດ້) ຢູ່ ໂອແຕນນັ້ນບໍ່ພໍເທົ່າໃດເອື້ອຍສາຍສະໝອນພັດຖືກສັກສີດຳຕົນຊ໌ເອົາໄປເປັນເມຍນ້ອຍດ້ວຍລາຄາຫ້າສິບພັນກີບ- ການຕໍ່ລາຄາຊື້ ແລະ ຂາຍຄົນໄດ້ເກີດຂຶ້ນເໝືອນດັ່ງ: ການຕໍ່ລາຄາຊື້ນາງກ່ຽວຢູ່ໃນນິຍາຍ ເລື່ອງ "ນາງກ່ຽວ" ຂອງ ນັກກະວີໃຫ່ຍຫວຽດນາມຫວຽນ- ຢູທີ່ລີຄືແບບພວກລ່ຳເມືອງຂຶ້ນຝະລັ່ງ ແລະ ພວກຈັກກະພັດອັງກິດຂາຍຄົນໜັງດຳ ຢູ່

ທະວີບອາເມລິກາ-ແຕ່ສິ່ງທີ່ເຮັດໃຫ້ພວກເຮົາເຈັບແສບນັ້ນຢູ່ ແມ່ນບ່ອນໃນສະໄໝປະຈຸບັນເລື່ອງລາຍຂາຍແລະຊື້ຄົນແບບນີ້ຍັງ ເກີດຂຶ້ນຢູ່ປະເທດລາວເຮົາ.

ເລື່ອງ "ພັດພາກຈາກສີພັນດອນ" ມີລັກສະນະກ່າວຟ້ອງສັງຄົມເກົ່າ ແຕ່ເສຍດາຍໃນເລື່ອງນີ້ ນັກແຕ່ງ ຍັງມີສິ່ງ ຜິດພາດບາງບ່ອນກ່ອນອື່ນແມ່ນການສ້າງຕົວລະຄອນມີລັກສະນະບໍ່ທໍ້ຂາດນ້ຳໃຈຕໍ່ສູ້ເພື່ອຕ້ານຄືນກັບສັງຄົມເກົ່າ ແລະບາງເທື່ອລາວກໍ່ຕໍ່ສູ້ ແຕ່ຕໍ່ສູ້ແບບໝົດຫວັງ ມັນບໍ່ຖືກກັບລັກສະນະຂອງແມ່ຍິງລາວໃນສະໄໝປະຈຸບັນ, ແມ່ ຍິງລາວໃນສະໄໝການປະຕິວັດ, ເຖິງຈະຢູ່ໃນສັງຄົມໃດກໍ່ຕາມ, ແຕ່ເວລາໃດເຂົາເຈົ້າກໍ່ມີນ້ຳໃຈຕໍ່ສູ້ ອັນອົງອາດກ້າຫານ. ຕໍ່ສູ້ເພື່ອຄົ້ນ ລົ້ມສັງຄົມເກົ່າ ແລະ ສ້າງສັງຄົມໃໝ່; ຕໍ່ສູ້ເພື່ອປົດປ່ອຍປະເທດ ຊາດປົດປ່ອຍຕົນເອງ, ຕໍ່ສູ້ເພື່ອໃຫ້ໄດ້ ເຂົ້າຮ່ວມນຳ ຂະບວນການຕໍ່ ສູ້ປະຕິວັດແມ່ຍິງລາວໃນສະໄໝປະຈຸບັນມີສະຕິເປັນເຈົ້າຕົນ ເອງເປັນເຈົ້າການຕໍ່ທຸກສະພາບການ, ບໍ່ແມ່ນຈະປະປ່ອຍໃຫ້ຊີວິດຂອງຕົນລ່ອງລອຍໄປຕາມໂຊກຊະຕາກຳຊື່ງ. ຫລືວ່າໃນເລື່ອງຍັງມີຂໍ້ປົກຍ່ອຍໜຶ່ງ, ຄືນັກຂຽນ ໄດ້ໃຫ້ຕົວລະຄອນຂອງຕົນ; ເອື້ອຍສາຍສະ ໝອນອຸ້ມຫົວລູກນ້ອຍໂຕນລົງນ້ຳຂອງ; ບັນຫານີ້ພວກເຮົາເຫັນວ່າມັນຜິດກັບທັດສະນະຂອງແມ່ຍິງລາວ, ບາງເທື່ອ ໃນກໍລະນີ ໃດໜຶ່ງ ອາດຈະມີບາງຄົນຍ້ອນຮັກລູກໂພດ ແລະ ບໍ່ຢາກປະໃຫ້ລູກຂອງຕົນຈະ ກາຍເປັນຄົນຊື່ວ ໃນພາຍໜ້າ. ດັ່ງນັ້ນ ຈຶ່ງໄດ້ອຸ້ມລູກໂຕນລົງນ້ຳ ຕາຍພ້ອມກັນ. ແຕ່ເລື່ອງນັ້ນມັນມີແຕ່ບາງກໍລະນີພິເສດເທົ່ານັ້ນ, ມັນບໍ່ ຖືກກັບທາດແທ້ຂອງແມ່ຍິງລາວທົ່ວໄປ, ທາດແທ້ຂອງແມ່ຍິງລາວເປັນຄົນ

ຫມົ່ນນອນ, ດຸຫມັ່ນຕໍ່ວຽກເຮືອນການຊານ, ຮັກຜົວ, ຖະຫນອມ ລູກ ເຂົາເຈົ້າປຽບເຫມືອນພວງດອກຈຳປາ ທີຂາວສະອາດ, ແຕ່ຈິດ ໃຈ ແຂງກ່ວາເຫລັກກ້າ ເຂົາດຸຫມັ່ນອົດທົນຕໍ່ວຽກເຮືອນ ກໍ່ຄືຕໍ່ກັບ ວຽກງານປະຕິວັດ. ເຂົາເຈົ້າເວລາໃດກໍ່ເດັດດ່ຽວ ຕໍ່ສູ້ບໍ່ຍອມຕໍ່ ກຳລັງອຳນາດປະຕິການໃດທີຈະມາຫນີບເຕັງ, ຂົ່ມເຫັງ, ກົດຂີ່ຂູດຣີດ ເຂົາ ຄວາມຈິງແລ້ວຄືດັ່ງທີພວກເຮົາ ໄດ້ເຫັນ, ໃນປະຈຸບັນ, ບໍ່ວ່າຢູ່ເຂດປົດປ່ອຍຫລືເຂດສັດຕູທີຍັງຄວບຄຸມຊົ່ວຄາວ, ຢູ່ແນວຫນ້າຫລືແນວ ຫລັງ ໃນກອງທັບປົດປ່ອຍປະຊາຊົນລາວ ຫລືໃນສຳນັກງານອົງການ ຕ່າງຕ່າງ; ໃນທຸກວຽກງານແລະທຸກຂັ້ນນຳກໍ່ລ້ວນແຕ່ມີຫນ້າແມ່ຍິງ ລາວ ເຂົ້າຮ່ວມນຳ. ກຳລັງຂອງແມ່ຍິງເປັນກຳລັງທີ່ບໍ່ອາດຈະຂາດໄດ້ ໃນ ວຽກງານການປະຕິວັດແລະທຸກສິ່ງເຫລົ່ານັ້ນ, ມັນໄດ້ສະແດງໃຫ້ພວກ ເຮົາເຫັນແຈ້ງຕໍ່ແນວທາງ ນະໂຍບາຍອັນຖືກຕ້ອງສອດຄ່ອງຂອງສູນ ກາງແນວລາວຮັກຊາດ ແລະ ລັກສະນະດີເດັ່ນຂອງສັງຄົມໃຫມ່ພວກ ເຮົາ.

ບໍ່ແມ່ນມີແຕ່ຈຳພວກຄົນທີທຸກຍາກຄືສະຫາຍ ຈ. ເດືອນສະ ຫວັນ ຫລືຈຳພວກຄົນທີ່ຖືກເຄາະຮ້າຍຈາກສັງຄົມເກົ່າຄືດັ່ງເອື້ອຍສາຍ ສະ ຫມອນຈຶ່ງຊອກຫາ ເສັ້ນທາງອອກມາຫາແສງສະຫວ່າງຂອງການປະ ຕິວັດ; ຈົນເຖິງພວກ ຂ້າລາຊະການ, ທະຫານ, ນັກຮຽນ, ນັກສຶກ ສາ ຢູ່ໃນຖັນແຖວຂອງສັດຕູພ້ອມພາກັນອອກມາຫາແສງສະຫວ່າງ ຂອງ ການປະຕິວັດ. ຊອກຫາເສັ້ນທາງອອກມາຫາເຂດປົດປ່ອຍໃນ ເລື່ອງ "ຕາມຖະຫນົນວຽງຈັນ" ຂອງວັນໄຊ ແລະພອນຈັນ. ນອກ ຈາກ ທີວ ເລື່ອງໃຫຍ່ໄປຊອກຫາ "ແສງສະຫວ່າງຂອງການປະຕິວັດ" ຢູ່ ໃນ

ເລືອງນັ້ນັກຂຽນຍັງເວົ້າເຖິງຄວາມຈິງຢູ່ໃນຕົວເມືອງວຽງຈັນ. ຢູ່ວຽງຈັນນັບຕັ້ງແຕ່ເງິນໂດລາເຊືອມເຂົ້າມານຳພວກຈັກກະພັດອາເມລິກາ, ທຸກສິ່ງທຸກຢ່າງຢູ່ໃນສັງຄົມນັ້ນລ້ວນແລ້ວຖືກເງິນໂດລາຂອງອາເມລິກາຄອບຄອງຢ່າງຮ້າຍແຮງທີສຸດ, ຄືດັ່ງຄຳປາໄສຂອງສະເດັດເຈົ້າເພັດສະລາດ, ໃນເວລາສະເດັດກັບມາແຕ່ປະເທດໄທປີ 1957 ໄດ້ປະກາດວ່າ: "...ການຊ່ວຍເຫລືອຂອງອາເມລິການີ້ພຽງແຕ່ເຮັດໃຫ້ຄົນຈຳພວກນ້ອຍໆຮັ່ງມີແລະຊຸກປະຊາຊົນລາວທັງມວນຕົກຢູ່ໃນຄວາມທຸກຍາກອັບຈົນ..." (ຄັດຈາກປຶ້ມ: ການຂະຫຍາຍເສດຖະກິດຂອງລາວ ນັບຕັ້ງແຕ່ຫລັງຈາກສົງຄາມໂລກຄັ້ງທີສອງເຖິງ ປີ 1958. ຂອງລ. ອາເຊດົບ, ໜ້າທີ39). ເບິ່ງເຂົ້າເລິກສັງຄົມ ວຽງຈັນ, ເມືອງຫລວງສີວິໄລປອມແປງ, ສັງຄົມເປືອຍເຍືອຍກຳລັງ ຫລົ້ມຈົມໃນບວກຕົມທີ່ເນົ່າເໝັນ ຫລົ້ມຈົມລົງໃນຍາມແລງໜືດມົວ, ຫລົ້ມຈົມລົງພົ້ນແມ່ນ້ຳຂອງທີ່ກຳລັງນ້ຳນອງເກີດຟອງໃຫ່ຍຈົມຫລົ້ມລົງ ຈົມໝົດທຸກສິ່ງທຸກຢ່າງ; ເພືອໃຫ້ສັງຄົມໃຫ່ມ, ສັງຄົມອັນດີງາມປາກົດຂຶ້ນ

ຢູ່ຕົວເມືອງ ວຽງຈັນໃນເວລານັ້ນຄຽງຂ້າງກັບເຮືອນສີ່ຫ້າ ຊັ້ນຂອງພວກຄົນຕ່າງດ້າວ, ພວກນາຍທຶນຈຳໜ່າຍນາຍທຶນແຫ່ງ ຊາດແມ່ນຕູບນ້ອຍໆທີ່ເພພັງຂອງປະຊາຊົນຜູ້ອອກແຮງງານທຸກຍາກ- ໃຕ້ແສງໄຟຟ້າສີແດງ. ສີຂຽວ, ສີເຫລືອງ ແລະອື່ນໆ...ແຍງໃສ່ໃບຮູບແຕ້ມຜູ້ຍິງປະເປືອຍຕິດຢູ່ຕາມຝາໂຮງສາຍຮູບເງົາ; ພວກເຮົາ ຍັງແນມເຫັນຈຳພວກຄົນຂໍທານ, ແມ່ຈ້າງຢ່າງເຕັມຫົນທາງ ຢູ່ໃນສັງຄົມນັ້ນເງິນຄຳໄດ້ກາຍເປັນຂອງວິເສດ, ເງິນຄຳໄດ້ກາຍເປັນ "ເທວະບຸດຊຶ່ງຄົນເຮົາອາດແນມເຫັນໄດ້. ມັນເຮັດໃຫ້ກົງກັນຂ້າມທຸກສິ່ງ ທຸກ

ຢ່າງ, ທຸກລັກສະນະຂອງສັງຄົມມະນຸດແລະທຳມະຊາດ; ເຮັດໃຫ້ຂາວກາຍເປັນດຳ..." (ຄັດຈາກປຶ້ມມາກ-ອັງແກນ ແລະສິລະປະວັນນະຄະດີ; ໜ້າ 208) ນອກຈາກໃຊ້ວິທີການເອົາເງິນໂດລາຊື້ ຈ້າງຈອບອອຍແລະເຮັດໃຫ້ທຸກລະບຽບຂອງສັງຄົມສັບສົນປົ່ນເປ; ພວກຈັກກະພັດອາເມລິກາຍັງຄົງ "ພະຍາຍາມ" ເອົາແບບແຜນ ດຳລົງຊີວິດຂອງ "ໂລກເສລີ", ສີວິໄລແບບອາເມລິກາເຂົ້າມາເພື່ອຫວັງ ເບື່ອເມົາໄວໜຸ່ມແລະເຍົາວະຊົນ.

ຍ້ອນຖືກສັງຄົມມືດມົນ. ເນົາເໜັນນັ້ນຢຽບຢ່ຳ, ໜີບເຕັງ, ບົວແກ້ວ (ຕົວລະຄອນໃນເລື່ອງ: "ຕາມຖະໜົນວຽງຈັນ") ຈຳຕ້ອງ ໄປເປັນຕຳຫລວດ, ເຄື່ອງມືປາບປາມປະຊາຊົນຂອງພວກຈັກກະພັດ ອາເມລິກາແລະພວກຫຸ່ນວຽງຈັນ. ບົວແກ້ວຫວັງວ່າ ໄປຕາມເສັ້ນທາງ ນັ້ນລາວອາດຈະຄ່ອຍຮັ່ງມີຂຶ້ນແລະຈະຄ່ອຍກາຍເປັນເຈົ້ານາຍໃຫຍ່ ຄືເພິ່ນ. ເພາະສະນັ້ນເມື່ອໄດ້ຍິນບັກຫົວໜ້າຕຳຫລວດເວົ້າວ່າ: "ປະເທດລາວເຮົານັບມື້ນັບມີເພື່ອນມິດຜູ້ຮັ່ງມີ, ເມື່ອມີເພື່ອນຜູ້ຮັ່ງມີດີ ຈັ່ງຊັ້ນ, ພວກເຮົາກໍ່ອາດຈະຮັ່ງມີຂຶ້ນ..." (ຄັດຈາກເລື່ອງ; ຕາມ ຖະໜົນວຽງຈັນ; ໜ້າ 3). ບົວແກ້ວຮູ້ສຶກວ່າດີໃຈ. ເຖິງວ່າເວລານັ້ນ ຢູ່ເຮືອນເມຍຂອງລາວກຳລັງ ເຈັບປ່ວຍລູກຂອງລາວກຳລັງນັ່ງ ຫິວທ້ອງຖ້າລາວ ແລະ ຄວາມຈິງຢູ່ຕາມຖະໜົນວຽງຈັນໄດ້ປະກົດ ກົງກັນຂ້າມກັບຄວາມໄຝ່ຝັນຂອງລາວ. ຕາມຖະໜົນວຽງຈັນ, ບົວ ແກ້ວໄດ້ເຫັນກັບຕາ "ຄວາມຮັ່ງມີ" ຂອງເມືອງວຽງຈັນແລະ "ເພື່ອນຮັ່ງ ມີຂອງ "ປະເທດລາວ" ໄດ້ກະທຳຕໍ່ພີ່ນ້ອງວຽງຈັນຄືແນວໃດ. ແຕ່ ທຸກສິ່ງທີ່ບົວແກ້ວເຫັນນັ້ນກໍ່ພຽງແຕ່ເຫັນພວກມັນກະທຳຕໍ່ຄົນອື່ນຊື່ໆ ກັບ

ບົວແກ້ວເອງຊຶ່ງເປັນເຄື່ອງມືຮັບໃຊ້ໃຫ້ສັງຄົມນັ້ນ, ໃນເມື່ອເຮັດ ຜິດກັບກົດເກນໃຫ່ມຂອງສັງຄົມນັ້ນແລ້ວ, ລາວເອງກໍ່ຈະຖືກຮັບ ເຄາະຮ້າຍຈາກສັງຄົມນັ້ນຄືກັນ. ບົວແກ້ວຖືກໄລ່ອອກຈາກຄ້າຍຕ່ຳ ຫລວດຍ້ອນວ່າ"... ໄດ້ເຮັດເສຍກຽດຂອງຄົນອາເມລິກາຢູ່ຕໍ່ຫນ້າມວນຊົນ ..."(ຄັດຈາກເລື່ອງ: ຕາມຖະຫນົນວຽງຈັນ; ຫນ້າ24). ແຕ່ນັ້ນມາ ບົວແກ້ວບໍ່ມີວຽກເຮັດງານທຳອີກແລະຖືກທຸກຈົນ; ຄວາມ ໄຝ່ຝັນ ຂອງບົວແກ້ວອີງໃສ່"ເພື່ອນຮັ່ງມີ" ເພື່ອໃຫ້ຮັ່ງມີແລະເປັນເຈົ້າໃຫ່ຍ ນາຍໂຕໄດ້ຖືກສູນຫາຍໄປ. ສັງຄົມວຽງຈັນຊຶ່ງບົວແກ້ວໄດ້ສະແດງຄວາມບໍລິສຸດຕໍ່ມັນນັ້ນໄດ້ຄ່ອຍຊຸກບົວແກ້ວ ແລະ ຄອບຄົວ ຂອງລາວໄປ ສູ່ຄວາມຕາຍຍ້ອນຖືກສັງຄົມນັ້ນຢຽບຢ່ຳ, ຫມົບເຕັງພ້ອມກັນນັ້ນບົວແກ້ວໄດ້ພົບກັບສະຫາຍຄຳດີ, ສະຫາຍຄຳດີໄດ້ໂອ້ລົມແລະຊີ້ແຈງໃຫ້ ບົວແກ້ວ ເຫັນແຈ້ງເສັ້ນທາງເດີນແຫ່ງຊີວິດ. ທ້າຍສຸດບົວແກ້ວໄດ້ໄປຫາແສງສະຫວ່າງຂອງການປະຕິວັດ, ດ້ວຍວາດແຕ່ງທີ່ມີລັກສະນະ ກ່າວປະນາມ. ນັກແຕ່ງໄດ້ສ່ອງແສງຕົວຈິງຂອງເມືອງວຽງຈັນແລະ ການກະທຳອັນໂຫດຮ້າຍສາມານຂອງພວກຈັກກະພັດອາເມລິກາ ຕໍ່ພີ່ນ້ອງວຽງຈັນ ແລະ ພີ່ນ້ອງປະຊາຊົນລາວທັງຫລາຍທີ່ກຳລັງ ຕົກຢູ່ ໃນເຂດຄອບຄຸມຂອງພວກມັນ.

ເສຍດາຍໃນປຶ້ມເລື່ອງນີ້, ນັກຂຽນຍັງບໍ່ທັນສ່ອງແສງໃຫ້ໄດ້ຫມົດແລະຖືກ ຕາມຄວາມຈິງຢູ່ໃນເມືອງວຽງຈັນ, ຕາມພວກເຮົາຄິດ, ຖ້າ ນັກແຕ່ງຫາກ ພະຍາຍາມສ່ອງແສງໃຫ້ໄດ້ຕາມເລື່ອງເກີດຂຶ້ນໃນ ຕົວເມືອງວຽງຈັນ, ອາດຈະເຮັດໃຫ້ຄຸນຄ່າຂອງບົດເລື່ອງສູງກ່ວານີ້ ອີກຫລາຍເທົ່າ.

ເທິງນີ້ພວກເຮົາຫາກໍ່ເວົ້າ ຜ່ານຄົນສາມປະເພດທີມີສະພາ ວະການຕ່າງກັນ ແລະຊອກຫາເສັ້ນທາງອອກມາຫາການປະຕິວັດ ຕ່າງກັນ; ສຸດທ້າຍ ເຂົາໄດ້ພົບກັນ ບົນເສັ້ນທາງຕໍ່ສູ້ປະຕິວັດ. ແຕ່ຕໍ່ກັບຄົນສາມປະເພດນີ້, ພວກເຮົາເຫັນວ່າມີຈຸດໜຶ່ງຄືກັນ: ເຊັ່ນ: ພວກ ເຂົາເຈົ້າລ້ວນແລ້ວເປັນຄົນທຸກຍາກ. ຖືກສັງຄົມເກົ່າເຫນີບຕົງ, ປຸ້ນ ຢ່ຳແລະຄ່ອຍຊຸກເຂົາເຈົ້າໄປສູ່ຄວາມຕາຍ. ຍ້ອນມີນ້ຳໃຈຮັກຊາດ ແລະຕົ້ນຕໍ່ເພື່ອກູ້ເອົາຊີວິດຂອງເຂົາເຈົ້າ, ຂອງຄອບຄົວເຂົາເຈົ້າ ອອກຈາກຄວາມຕາຍ, ສະນັ້ນເຂົາເຈົ້າຈຳຕ້ອງຊອກຫາເສັ້ນທາງອອກມາຫາການປະຕິວັດ. ມາໃນເລື່ອງ "ພາສາແມ່", ຕົວເລື່ອງກໍ່ແມ່ນ" ໄປຊອກຫາແສງສະຫວ່າງ ຂອງການປະຕິວັດ" ແຕ່ໃນເລື່ອງນີ້ກ ແຕ່ງໄດ້ຕັ້ງບັນຫາຢາກຕ່າງກັບຈຳນວນເລື່ອງທີ່ພວກເຮົາໄດ້ເວົ້າ ມາເລື່ອງ "ພາສາແມ່" ຄຳດີ (ຕົວລະຄອນໃນເລື່ອງ) ເປັນນັກຮຽນ ມັດທະຍົມ; ທຸກງານຄຳດີໄດ້ຮ່ຳຮຽນ ແລະ ຮັບເອົາວັດທະນະທຳ ເນົ່າເຫມັນ, ຊຸດໂຊມແລະຊອດກະຈາແບບຝ່າຍຕາເວັນຕົກ. ລາວກຳ ລັງຮຽນ ມ.ສາມ ແລະ ໃກ້ຈະເສັງຈົບຊັ້ນມັດທະຍົມ; ລາວຈະ ກາຍເປັນຂ້າລາຊະການຜູ້ໜຶ່ງ, ຂາຍແຮງງານຂອງຕົນ ເພື່ອແລກ ປ່ຽນເອົາເງິນເດືອນ ເດືອນລະສີ່-ຫ້າພັນກີບມາຮັບໃຊ້ຊີວິດປະຈຳ ວັນຫລື ວ່າລາວຈະຍອມ ເປັນຕົນ ມີຊັ້ນຈຳ, ຂາຍຊາດເພື່ອແລກ ປ່ຽນເອົາເງິນໂດລາ. ຄຳດີມີເພື່ອນຮັກຄົນໜຶ່ງທີ່ສວຍງາມແລະຮັ່ງ ມີສະນັ້ນຕໍ່ກັບຄຳດີມີສອງເສັ້ນທາງທີ່ຈະໃຫ້ລາວດຳລົງຊີວິດຕໍ່ໄປ. ໜຶ່ງແມ່ນຍອມເປັນຕົນມີຊັ້ນຈຳໃຫ້ພວກຂາຍຊາດເພື່ອຊອກຫາລາຍໄດ້ໃຫ້ຮັ່ງມີສ່ວນຕົວຫລືຍອມດຳລົງຊີວິດແບບເກົ່າຕ້ອຍແລະພໍໃຈຕໍ່ໂສກຊາຕາ

ກໍ່ສ່ວນຕົວ, ປະປ່ອຍໃຫ້ຊີວິດຄ່ອຍຫລັ່ງໄຫລໄປຕາມຄວາມນິດ ງຽບ ນິດນົມ ຄືດັ່ງຊາຍຫນຸ່ມຄົນອື່ນ. ແຕ່ພວກເຮົາເຫັນວ່າຄໍາດີເປັນ ຊາຍຫນຸ່ມຄົນຫນຶ່ງທີ່ຮັກຊາດ, ຮູ້ຈັກຄຽດແຄ້ນສັດຕູ. ໃນສະພາບທີ່ວັດທະນະທໍາອັນເນົ່າເຫມັນຂອງຈັກກະພັດອາເມລິການັບມື້ ນັບແຊກແຊງເຂົ້າມາລາວຢ່າງຫລວງຫລາຍ ແລະພວກຂາຍຊາດກໍາລັງອອກແຮງ ໂຄສະນາ ແລະນິຍົມວັດທະນະທໍາຂອງຕ່າງປະເທດ, ຫມິ່ນປະຫມາດວັດທະນະທໍາແຫ່ງຊາດ, ດັດແປງ ວັດທະນະທໍາແຫ່ງຊາດກາຍເປັນ ວັດທະນະທໍາຊອດກະຈາແບບອາເມລິກາ, ມັນໄດ້ແຕະຕ້ອງເຖິງຈິດ ໃຈກົດຕິຄຸນແຫ່ງຊາດ, ນໍ້າໃຈຮັກຊາດຂອງບັນດາໄວຫນຸ່ມ, ໃນນັ້ນມີຄໍາດີ ຖືກດໍາລົງຊີວິດໃນສັງຄົມວຽງຈັນທີ່ເປັນຫນ້າເຈັບແສບ, ອີກດ້ານຫນຶ່ງ ຍ້ອນຄໍາດີໄດ້ສ່ອງເຫັນແສງສະຫວ່າງຂອງການປະຕິວັດ, ຈຸດ ຫນັກ ແມ່ນລາວໄດ້ເບິ່ງຮູບເງົາສອງເລື່ອງ "ຊາວປີແຫ່ງການປະຕິວັດ" ແລະເລື່ອງ "ສິລະປະກອນແນວລາວຮັກຊາດ" ໄດ້ກະທົບກະ ເທືອນ ເຖິງລາວ. ລາວຄຽດຊັງ ຊີວິດທີ່ລາວ ກໍາລັງ ດໍາລົງ"...ເຮົາ ບໍ່ ອາດສາມາດຈະດໍາລົງຊີວິດເປັນແບບນີ້ໄດ້ຕໍ່ໄປອີກ, ເຮົາສຸດທີ່ ເບື່ອ ຫນ່າຍຕໍ່ຊີວິດການເປັນຢູ່ທີ່ຕໍ່າຕ້ອຍຫນັກຫນ່ວງຢູ່ໃນນະຄອນຫລວງສີວິ ໄລປອມແປງແບບນີ້, ຢູ່ບ່ອນໃດກໍ່ເຫັນເຕັມໄປດ້ວຍໂຮງເຕັ້ນລໍາໂຮງ ແມ່ຈ້າງ...ໃຕ້ລະບອບປົກຄອງຂອງພວກ"ເຈົ້ານາຍ"ນີ້, ຄວາມຊົ່ວ ຊ້າ, ເນົ່າເຫມັນ ເຮັດໃຫ້ຈອມທາດຫລວງທີ່ເຫລື້ອມໃສຈົນມົວ, ແມ່ ນໍ້າຂອງທີ່ໃສເຢັນ ຈົນຂຸ່ນ. ສ່ວນພວກເຮົາ, ຈໍາພວກນັກຮຽນ, ນັກສຶກ ສາຊັ້ນມັດທະຍົມ, ຊັ້ນອຸດົມພັດຖືກປັ້ນສະຫມອງດ້ວຍວັດທະນະທໍາ ອັນ ເນົ່າເຫມັນ, ໃຊ້ພາສາຝະລັ່ງຕາງພາສາຊາດຂອງຕົນ, ຍ້ອງຍໍ ປະ

ເທດອາເມລິກາຫລາຍກ່ວາຊຸກຍູ້ນ້ຳໃຈຮັກປະເທດລາວ..." ( ຄັດຈາກປຶ້ມ: ພາສາແມ່; ໜ້າ6) ; ຍິ່ງກ່ວານັ້ນ, ຕໍ່ກັບຄວາມເຕີບ ໃຫຍ່ທາງດ້ານສຶກສາວັດທະນະທຳຢູ່ເຂດປົດປ່ອຍປະກົດວ່າມີກຳລັງອັນມະຫາສານດູດດຶງເອົາຄຳດີ: "..ດາລາ, ເຈົ້າເຫັນແລ້ວບໍ່, ຢູ່ເຂດ ປົດປ່ອຍມີໂຮງຮຽນຊັ້ນມັດທະຍົມ, ຊັ້ນອຸດົມສອນດ້ວຍພາສາລາວ. ໂຮງຮຽນຊັ້ນມັດທະຍົມສອນດ້ວຍພາສາລາວ, ສອນແຕ່ມໍໜຶ່ງຈົນເຖິງ ຊັ້ນອຸດົມ; ສະໜຸກບໍ່, ຄຳດີທັງເວົ້າທັງເອົາແຂນເສື້ອເຊັດນ້ຳຕາ, ສ່ວນພວກເຮົາຢູ່ນີ້ ຈຳຕ້ອງຮຽນດ້ວຍພາສາຝະລັ່ງ, ເລີ່ມແຕ່ປໍສາມ, ປໍສີກໍ່ຈຳຕ້ອງຮຽນ, ເຈັບແສບບໍ່! ເຮົາຢາກທີ່ສຸດ, ເຮົາຢາກພົບຊີວິດ ໃໝ່ຂອງພວກເພື່ອນຢູ່ເຂດປົດປ່ອຍ, ນອກນັ້ນເຮົາຍັງໄດ້ຍິນໄທບ້ານ ໄທເມືອງ ເພີ່ນຊາມກັນວ່າ: ຢູ່ເຂດປົດປ່ອຍໃກ້ຈະຕັ້ງໂຮງຮຽນມະຫາວິທະຍາໄລສອນດ້ວຍພາສາລາວ. ສິ່ງໜຶ່ງ, ຊຶ່ງຢູ່ນີ້ພວກເຮົານອນ ຝັນກໍ່ບໍ່ຫານຈະຄິດໄຝ່ຝັນຫາ, ຢູ່ເຂດປົດປ່ອຍສູນກາງແນວລາວຮັກ ຊາດຍັງສົ່ງບໍ່ຈັກຕັ້ງເທື່ອໃດນັກສຶກສາລາວທີ່ມີຄວາມສາມາດໄປຮຽນຢູ່ບັນດາໂຮງຮຽນມະຫາວິທະຍາໄລຫວຽດນາມ, ຈີນ, ໂຊວຽດແລະຫລາຍປະເທດທີ່ສີວິໄລອີກ, ເພື່ອອະນາຄົດນຳເອົາຄວາມຮູ້ກັບມາສ້າງ ສາປະເທດຊາດ..." (ຄັດຈາກປຶ້ມພາສາແມ່; ໜ້າ11) ແລະສຸດ ທ້າຍຄຳດີໄດ້ຢັ້ງຢືນຢ່າງແນ່ວແນ່ວ່າ. "...ນັ້ນໃບໜ້າຂອງປະເທດລາວໃໝ່, ປະເທດລາວໜຸ່ມນ້ອຍກຳລັງໄດ້ກຳເນີດ ແລະ ເຕີບໃຫຍ່ ຢູ່ເຂດປົດປ່ອຍແຜ່ອອກໄປທົ່ວປະເທດ. ບໍ່ແມ່ນແຜ່ອອກແຕ່ວຽງຈັນ... (ຄັດຈາກພາສາແມ່; ໜ້າ11). ຄຳເວົ້າຂອງຄຳດີເຖິງວ່າມີລັກ ສະນະທຳມະດາ, ແຕ່ຄວາມຈິງມັນແມ່ນຄວາມສັດຈະທຳ. ບໍ່ແມ່ນມາເຖິງ

ປະຈຸບັນເທົ່ານັ້ນ, ຕັ້ງເປັນຫລາຍປີຜ່ານມາປະຊາຊົນລາວ ທີ່ຢູ່ ໃນເຂດສັດຕູຄອບຄຸມ ໄດ້ພ້ອມກັນຫັນໜ້າອອກມາຫາເຂດປົດປ່ອຍເຂົາປາຖະໜາ, ເຂົາລໍຖ້າແລະ ເຂົາເຊື່ອໝັ້ນວ່າຊີວິດໃໝ່ແລະສັງຄົມໃໝ່ຢູ່ເຂດປົດປ່ອຍອາດມມ້ໜື້ງ ຈະນຳຄວາມສຸກ ມາສູ່ເຂົາ ເຈົ້າອາດສາມາດ ຊ່ວຍເອົາສັງຄົມລາວພົ້ນອອກຈາກບວກຕົມທີ່ ເນົ່າເໜັນ, ມືດມົນຂອງລັດທິລ້າເມືອງຂຶ້ນແບບໃໝ່ຂອງຈັກກະພັດອາເມລິກາຈາກຄວາມຮັບຮູ້ທາງດ້ານນອກຕົວ, ຜ່ານການຄິດຫງຳອັນ ເລິກເຊິ່ງ, ຄວາມຮັບຮູ້ນັ້ນນັບມື້ນັບເຊື່ອມຊຶມເຂົ້າໃນນຶກຄິດຈິດໃຈ ແລະຄ່ອຍກາຍເປັນການຕື່ນຕົວ ຕໍ່ຊົນຊັ້ນ, ຄວາມກິດຕິຄຸນແຫ່ງຊາດ ແລະຄວາມເຊື່ອໝັ້ນຕໍ່ການປະຕິວັດ. ຕໍ່ກັບຄຳດີ, ຖ້າສິ່ງທີ່ຍັງຈັບຈ່ອງ ຄຳດີຢູ່ວຽງຈັນນັ້ນ ແມ່ນຄວາມຮັກຂອງລາວຕໍ່ນາງພິມພາ; ຍ້ອນມີ ສຽງຮ້ອງຂອງເຂດປົດປ່ອຍ, ສຽງແກຂອງການປະຕິວັດຍິ່ງດູດດຶງຈິດ ໃຈລາວແຮງກວ່ານັ້ນຫລາຍເທົ່າ, ຄຳດີ້ຄືນຄິດ ແລະ ຕໍ່ສູ້ກັບແນວ ຄິດລະຫວ່າງ ໄປ ແລະ ຢູ່, ລະຫວ່າງຄວາມຕັນຫາສ່ວນຕົວກັບອຸດົມ ຄະຕິຕໍ່ການປະຕິວັດ ແລະ ສຸດທ້າຍຄືດັ່ງພວກເຮົາໄດ້ຮູ້, ນ້ຳໃຈຮັກຊາດສຽງແກປະຕິວັດ ໄດ້ເອົາຊະນະຄວາມຕັນຫາສ່ວນຕົວ. ຄຳດີຕັດ ສິນໃຈອອກມາຫາເຂດປົດປ່ອຍ; ອອກມາຫາການປະຕິວັດ.

ເສັ້ນທາງ ອອກມາຫາເຂດປົດປ່ອຍຂອງຄຳດີເປັນເສັ້ນທາງ ຈຳຕ້ອງໄປຂອງຄົນລາວທີ່ຮັກຊາດ, ຢາກປະກອບສ່ວນເຂົ້າໃນການຕໍ່ສູ້ກູ້ຊາດ. ອີກດ້ານໜຶ່ງກໍ່ຍ້ອນແນວລາວຮັກຊາດ ໄດ້ຍົກສູງຄັນທຸງສາມັກຄີທົ່ວທຸກຊົນຊັ້ນ, ຊົນຊາດ; ຄືດັ່ງສະເດັດປະທານເຈົ້າສຸພານຸວົງຜູ້ນຳອັນແສນຮັກຂອງປະຊາຊົນລາວເຮົາ ໄດ້ເວົ້າວ່າ: "...ປະເທດ ລາວ

ເຮົາມີຫລາຍຊົນຊາດ, ແຕ່ຖ້າຮູ້ຈັກສາມັກຄີກັນເຂົ້າ ຈະງາມເຫມືອນດັ່ງດອກໄມ້ຫລາຍສີເກີດໃນຕົ້ນດຽວ..." (ຄັດຈາກປຶ້ມ: ນັກຮົບລາວ ຫນ້າ 12). ແນວລາວຮັກຊາດເວລາໃດກໍ່ຍົກສູງສິດຜົນປະໂຫຍດຂອງປະເທດຊາດແລະຕໍ່ສູ້ເພື່ອເຮັດໃຫ້ປະເທດລາວກ້າວເດີນ ຕາມເສັ້ນທາງເອກະລາດ, ສັນຕິພາບ, ເປັນກາງ, ປະຊາທິປະໄຕ, ເອກະພາບແລະວັດທະນາຖາວອນ. ແນວທາງອັນຖືກຕ້ອງຂອງແນວລາວຮັກຊາດໄດ້ເຮັດໃຫ້ອິດທິພົນຂອງແນວລາວຮັກຊາດນັບມື້ນັບສູງແລະເຊື່ອມຊຶມເຂົ້າຈິດໃຈຂອງປວງຊົນທົ່ວປະເທດ.

ເລື່ອງ "ສົ້ມອຍ" ນັກຂຽນໄດ້ຍົກບັນຫາມີລັກສະນະກວ້າງກວ່າ ສີບົດທີ່ພວກເຮົາໄດ້ຈຳແນກມາ. ໃນເລື່ອງນີ້, ນັກແຕ່ງໄດ້ເວົ້າ ເຖິງການລຸກຮື້ຂຶ້ນຂອງປະຊາຊົນເພື່ອຍາດເອົາສິດອຳນາດການປົກ ຄອງຢູ່ແຕ່ລະບ້ານ. ຍ້ອນຖືກກົດຂີ່ຂູດຮີດ, ຖືກຊຸກ ໄປເຖິງເສັ້ນທາງຕາຍ. ບໍ່ສາມາດທົນທານໄດ້ຕໍ່ໄປອີກ; ໃຕ້ການນຳພາຂອງພະນັກງານ ແນວລາວອິດສະຫລະ, ປະຊາຊົນບ້ານໄຮ, ບ້ານໂພ ໄດ້ພ້ອມກັນລຸກຮື ຂຶ້ນຍາດເອົາສິດອຳນາດການປົກຄອງ, ໂຄ່ນລົ້ມພວກອາດຍາສິດ, ພວກເຈົ້າທີ່ດິນຢູ່ປະເທດຫນຶ່ງທີ່ເຕັມໄປດ້ວຍຮູບພາບທຳມະຊາດອັນ ສວຍງາມແລະຮັ່ງມີ; ໄກຈາກໃຈກາງຂອງການປະຕິວັດຕັ້ງເປັນ ຫລາຍຮ້ອຍພັນຫລັກ; ດ້ວຍການກະທຳພາກຕົວຈິງ, ຄວາມສັດຈະທຳ ອັນເຫລື້ອມໃສ, ອີກຄັ້ງຫນຶ່ງມັນໄດ້ຢັ້ງຢືນຕໍ່ກັບລັດທິມາກ-ເລນິນທີ່ ໄດ້ເວົ້າວ່າ: "ຢູ່ໃສມີການກົດຂີ່ຂູດຮີດ, ຢູ່ບ່ອນນັ້ນມີການຕໍ່ສູ້; ຖ້າການກົດຂີ່ຂູດຮີດຍິ່ງຫນັກ, ການຕໍ່ສູ້ກໍ່ຍິ່ງແຮງ" ຮູບພາບທີ່ປະຊາຊົນບ້ານ ໂພບ້ານໄຮລຸກຮື້ຂຶ້ນນັ້ນມັນເປັນຮູບພາບຂອງຮ້ອຍພັນໆບ້ານປະຊາຊົນ ຢູ່

ລາວ, ຢູ່ໝົດທຸກປະເທດທີ່ກຳລັງລຸກຂຶ້ນຕໍ່ສູ້ປົດປ່ອຍຊາດ, ປົດປ່ອຍປະເທດ, ບັນຍາກາດອັນໜັກໜ່ວງ, ນິດໄສ ແລະ ຈິດໃຈ ຄຽດແຄ້ນຂອງປະຊາຊົນຢູ່ສອງບ້ານນັ້ນກໍ່ອາດຈະແມ່ນບັນຍາກາດລວມຂອງ ທຸກປະເທດທີ່ກຳລັງກຽມພ້ອມລຸກຮືຂຶ້ນຕໍ່ສູ້. ຂັບໄລ່ສັດຕູຕົວຮ້າຍກາດຂອງຊາດ. ຮູບພາບຂອງທິດນໍ, ຂອງພໍ່ສາລີເປັນຕົວແທນ ໃຫ້ແກ່ຊາວ ນາທຸກຈົນຢູ່ໃນສັງຄົມເກົ່າ; ເຂົາຢ້ານກົວ, ຫວາດຫວັ່ນຕໍ່ກັບສິດອຳ ນາດປົກຄອງອັນໂຫດຮ້າຍສາມານ. ແຕ່ໃນເມື່ອເຂົາເຫັນໄດ້ຄວາມ ເປັນທຳ, ແສງສະຫວ່າງຂອງການປະຕິວັດໄດ້ສ່ອງແສງເຖິງເຂົາ; ໃນເມື່ອແນວທາງການປະຕິວັດຂອງແນວລາວຮັກຊາດໄດ້ເຊື່ອມຊຶມເຂົ້າໃນນຶກຄິດຂອງເຂົາເຈົ້າ, ກາຍເປັນສາຍເລືອດແລະກ້ອນຊີ້ນ ຂອງເຂົາເຈົ້າແລ້ວ, ນຶກຄິດອັນນັ້ນຈະນຳພາເຂົາໄປເຖິງການປະພຶດປະຕິວັດດ້ວຍກຳລັງອັນມະຫາສານ. ເຂົາຕັດສິນໃນຍອມເສຍສະຫລະ ສິດຜົນປະໂຫຍດສ່ວນຕົວ, ສິດຜົນປະໂຫຍດຂອງຄອບຄົວ, ເພື່ອສິດຜົນປະໂຫຍດຂອງການປະຕິວັດ, ການກະທຳຂອງເຂົາເຈົ້າໃນເວລານັ້ນຈະບໍ່ມີກຳລັງອຳນາດປະຕິການໃດ ຈະມາມຸດມອດໄດ້. ພວກເຮົາ ເວົ້າວ່າທິດສະດີປະຕິວັດໄດ້ກາຍເປັນກຳລັງວັດຖຸກໍໃນເມື່ອທິດສະດີນັ້ນໄດ້ເຊື່ອມຊຶມເຂົ້າໝູ່ມະຫາຊົນ ແລະ ຊຸກຍູ້ໃຫ້ມະຫາຊົນໄປເຖິງ ການກະທຳປະຕິວັດ.

ເລື່ອງ "ສີ້ນອຍ" ເປັນນະວະນິຍາຍເຫລັ້ມທຳອິດຂອງລາວເຮົາ ເພາະສະນັ້ນມັນບໍ່ອາດຈະຫລີກເວັ້ນໄດ້ຄວາມຂາດຕົກບົກພ່ອງ ຈຸດອ່ອນ ໃນເລື່ອງສີ້ນອຍແມ່ນຂາດຄວາມຈິງ, ການສືບຊ້ອນເວລາແລະສະຖານທີ່ກໍ່ບໍ່ຈະແຈ້ງ, ດັ່ງນັ້ນເຮັດໃຫ້ຜູ້ອ່ານມີຄວາມສົນໃຈ; ເວົ້າ

ເຖິງຕົວລະຄອນ, ບາງຕົວລະຄອນໃນການຂະຫຍາຍຕັກຄະສາດພາຍໃນຂອງມັນຍັງຂາດ, ເຮັດໃຫ້ຜູ້ອ່ານເຫັນວ່າຊີວິດຂອງຕົວລະຄອນ ບໍ່ລຽນຕິດກັນແລະສຸດທ້າຍຂອງເລື່ອງສົ້ນອຍມີລັກສະນະໂສກ ເສົ້າຫງ່ວມເຫງົາ.

ຜ່ານທັງເລື່ອງທີ່ພວກເຮົາໄດ້ຈຳແນກມານີ້, ພວກເຮົາເຫັນ ແຈ້ງວ່າ, ບັນດານັກຂຽນໄດ້ສ່ອງແສງຖືກຕາມວົງຫມູນວຽນຂອງການ ປະຕິວັດທີ່ຢູ່ໃນເຂດສັດຕູຄອບຄຸມ; ດ້ວຍວາດແຕ່ງຕ່າງກັນ, ແຕ່ລະເລື່ອງມີລັກສະນະຕ່າງກັນແລະໄດ້ສ່ອງແສງເຖິງແຕ່ລະດ້ານຂອງ ສັງຄົມເກົ່າຢູ່ເຂດສັດຕູຄອບຄຸມຊົ່ວຄາວ ແລະແນວຄິດຈິດໃຈ, ການ ກະທຳຂອງຄົນທັງຫລາຍທີ່ຢູ່ໃນສັງຄົມນັ້ນ. ບັນດານັກຂຽນ ໄດ້ພົບກັນຢູ່ ໃນບັນຫາຫນຶ່ງຄື: ກ່າວຟ້ອງສັງຄົມເກົ່າຢ່າງດຸເດືອດ; ສະຫນັບສະ ຫນູນແລະຢັ້ງຢືນຄວາມດີງາມຂອງສັງຄົມໃຫມ່ຢູ່ໃນເຂດປົດປ່ອຍ, ນອກນັ້ນ ນັກຂຽນ ຍັງໄດ້ຊີ້ບອກ ໃຫ້ແກ່ບຸກຄົນທີ່ຍັງຫລົງເຊື່ອໄປນຳສັດຕູ ຈົ່ງຮີບຊອກຫາເສັ້ນທາງອອກມາຫາ ແສງສະຫວ່າງຂອງການປະຕິວັດ.

ດ້ານສິລະປະການແຕ່ງ ໃນທັງເລື່ອງທີ່ພວກເຮົາໄດ້ເວົ້າຜ່ານມາກໍ່ຍັງມີບາງຈຸດອ່ອນຄື: ໃນເນື້ອວາດແຕ່ງແຕ່ລະບັນຫາທີ່ນັກແຕ່ງວາງອອກມີບາງເທື່ອຍັງຂາດຕັກຄະສາດ, ຍັງບໍ່ທັນເຫມາະສົມກັບຂະບວນວິວັດຂະຫຍາຍພາຍໃນຂອງເລື່ອງ ແລະໃນຕົວຂອງຕົວລະຄອນການພັນລະນາຍັງມີລັກສະນະເຜີນໆ. ຫລາຍບ່ອນຍັງມີລັກສະນະ ເລົ່າເລື່ອງ, ຮ່າງປະກອບເລື່ອງຍັງບໍ່ທັນແຫນ້ນແກ່ນ, ແກ້ໄຂຂໍ້ຂັດແຍ້ງໃນເລື່ອງຍັງບໍ່ທັນເຫມາະສົມແລະຍັງບໍ່ທັນອະທິບາຍໃຫ້ສົມເຫດສົມ ຜົນເພື່ອໃຫ້ຜູ້ອ່ານຕາຍໃຈນຳ. ມີບາງເລື່ອງ, ບາງບ່ອນຍັງຂາດຕົວ ຈິງ

ເຫດຜົນເລົ່ານັ້ນອາດຈະແມ່ນຍ້ອນນັກແຕ່ງຂອງພວກເຮົາຍັງບໍ່ທັນກຳແຫນ້ນຕົວຈິງໃນສັງຄົມເກົ່າ, ສັງຄົມຢູ່ເຂດສັດຕູຄວບຄຸມຊົ່ວ、 **ຄາວ** ເພາະສະນັ້ນ, ຫນ້າທີ່ຂອງບັນດານັກຂຽນແມ່ນຈະຕ້ອງຕິດຕາມ ຢ່າງໃກ້ຊິດແລະກຳໃຫ້ແຫນ້ນຕົວຈິງຢູ່ສັງຄົມເກົ່າ. ຄັດຈ້ອນ ແລະ ລວບລວມເຫດການປະກົດການເລົ່ານັ້ນເພື່ອແຕ່ງໃຫ້ໄດ້ບົດເລື່ອງທີ່ດີເດັ່ນກ່ວາເກົ່າ, ມີເນື້ອໃນສູ້ຮົບສູງ. ເລິກເຊິ່ງ ແລະ ພວກເຮົາເຊື່ອຫມັ້ນວ່າຕໍ່ກັບບັນຫານີ້, ບັນດານັກຂຽນຂອງພວກເຮົາມີຄວາມສາມາດເຮັດໄດ້.

# ຫົວເລື່ອງຕໍ່ສູ້

ຄືດັ່ງພວກເຮົາໄດ້ຮູ້ນຳກັນ ຈັກກະພັດອາເມລິກາໄດ້ກໍ່ສົງຄາມຂຶ້ນໃນປະເທດລາວເຮົາຢ່າງໂຫດຮ້າຍສາມານທີ່ສຸດພວກມັນໄດ້ໃຊ້ ອາວຸດຍຸດທະປັດໃຈອັນທັນສະໄໝທຸກຊະນິດເພື່ອດຳເນີນສົງຄາມ ແບບລ້າງຜານ ປະເທດລາວເຮົາເປັນປະເທດໜຶ່ງທີ່ພວກຈັກກະພັດ ອາເມລິກາໄດ້ໃຊ້ເຮືອບິນຍຸດທະສາດເບ 52 ມາຖິ້ມລະເບີດ,ຈຳນວນລະເບີດບົມ ແລະ ອາວຸດຍຸດທະປັດໃຈຕ່າງໆທີ່ພວກມັນນຳເອົາ ມາໃຊ້ຢູ່ດິນລາວ,ຖ້າຄິດສະເລ່ຍໃສ່ຫົວຄົນແລ້ວແມ່ນລື່ນພົນລະ ເມືອງລາວຫລາຍເທື່ອ. ພວກມັນຫວັງໃຊ້ລູກແຕກລູກບົມແລະຢາພິດເຄ ມີເພື່ອຈູດເລົ້າເຂົ້າເຜົາຫລັງເຮືອນ,ທຳລາຍໄຮ່ນາຮົ້ວສວນ, ເຄື່ອງປູກຂອງຝັງແລະສັດສາວາສິ່ງ; ໃຊ້ກຳລັງແຮງເພື່ອບີບບັງຄັບໃຫ້ ປະຊາຊົນລາວຈຳຕ້ອງຍອມເປັນຂ້ອຍຂ້າຂອງພວກມັນແຕ່ຂະບວນ ການປະຕິວັດລາວພາຍໃຕ້ການນຳພາຂອງສູນກາງແນວລາວຮັກຊາດ ໄດ້ຊູຄົນທຸງ ຕໍ່ສູ້ກູ້ຊາດຕ້ານຈັກກະພັດອາເມລິກາຂອງປະຊາຊົນລາວຂຶ້ນແລະນັບມື້ນັບໄດ້ເປີດກວ້າງ; ຕັ້ງແຕ່ເຂດທີ່ໝັ້ນຂອງການປະຕິ ວັດວຽງຈັນພິລະອາດຫານ,ທ່າແຂກນອງເລືອດໄດ້ພ້ອມພຽງຮຽງ ໜ້າກັນລຸກຮື້ຂຶ້ນລວາດໆເໝືອນດັ່ງກະແສຄື້ນພະຍຸລົມແດງໃນທົ່ວປະເທດ

ທ່າມກາງສຽງປືນກູ້ຊາດ,ດັບສູນສັດຕູທີ່ກຳລັງຟົດສະໜັ່ນທົ່ວ ປະເທດ,ບັນດານັກແຕ່ງຂອງພວກເຮົາໄດ້ໃຊ້ວິທີການແຕ່ງຕ່າງກັນແລະໃຊ້ຮູບວັນນະຄະດີຫລາຍປະເພດຕ່າງກັນ, ໄດ້ພ້ອມກັນສ່ອງແສງການຕໍ່ສູ້ອັນພິລະອາດຫານຂອງຊາດ,ຖ້າພວກເຮົາເບິ່ງຄືນວັນນະຄະ ດີ

ຄຳຮ້ອຍແກ້ວປະຕິວັດຂອງພວກເຮົາ. ອາດຈະເວົ້າໄດ້ວ່າບົດ ເລື່ອງສ່ວນຫລາຍແມ່ນເວົ້າເຖິງການຕໍ່ສູ້. ຈົນວ່າມີບາງເລື່ອງທີ່ມີລັກສະນະສັງຄົມຫລືກໍ່ສ້າງເຂດປົດປ່ອຍພວກເຮົາຍັງເຫັນນັກຂຽນຕື່ມໃສ່ ບາງຕອນກ່ຽວກັບການສູ້ຮົບ.

ຕາມທຳມະດາບົດເລື່ອງເຫລົ່ານັ້ນ ນັກຂຽນແບບບົດບັນທຶກ, ບົດເລົ່າເລື່ອງຈິງຄົນແທ້, ຕົວລະຄອນສ່ວນຫລວງຫລາຍແມ່ນ ລຸງ ຊາວນາທີ່ເຖົ້າແກ່ໃຊ້ກົນອຸບາຍຈັບສັດຕູ: ຫລືພວກເອື້ອຍນ້ອງຍິງຈັບປືນ ສູ້ຮົບຄຽງບ່າຄຽງໄຫລ່ກັບລູກຜົວ ຫລືແມ່ນບັນດານັກຮົບປະເທດ ລາວທີ່ອົດທຸກຍາກເດັດດ່ຽວຕໍ່ສູ້ສັດຕູມາໄດ້ຊາວກວ່າປີແລ້ວ, ຕົວລະ ຄອນເຫລົ່ານັ້ນລ້ວນແລ້ວແຕ່ເປັນບຸກຄົນທີ່ທຳມະດາ, ແຕ່ເດັດດ່ຽວ ຫນຽວແຫນ້ນ ໃນການຕໍ່ສູ້. ເດັດດ່ຽວຢູ່ໃນການກະທຳຂອງເຂົາຢູ່ໃນ ວຽກງານທີ່ເຂົາເຈົ້າກຳລັງເຮັດ. ເຂົາເປັນຕົວແທນໃຫ້ແກ່ກຳລັງທີ່ ກ້າວຫນ້າສູ້ຮົບຢູ່ທຸກສະຫນາມຮົບ. ທຸກພະແນກການຂອງການຕໍ່ສູ້ກູ້ ຊາດຕ້ານຈັກກະພັດອາເມລິກາ. ນັ້ນແມ່ນຮູບພາບຂອງປວງຊົນທັງຊາດທີ່ຕໍ່ຕ້ານແລະຕີສັດຕູຢ່າງອົງອາດ.

ໃນປື້ມເລື່ອງ "ເລົ່າເລື່ອງມູນເຊື້ອປະຕິວັດ", ນັກຂຽນໄດ້ສະເຫນີໃຫ້ພວກເຮົາຮູ້ກ່ຽວກັບມູນເຊື້ອຕໍ່ສູ້ຂອງປະຊາຊົນລາວເຮົານັບ ແຕ່ການປະຕິວັດເດືອນ 8 ແລະ ວັນປະກາດເອກະລາດ 12 ຕຸລາ ປີ 1945 ຫລືເວົ້າເຖິງກອງ "ລາດຊະວົງ" ທີ່ເປັນກອງປະກອບອາ ວຸດຂອງກອງທັບປົດປ່ອຍປະຊາຊົນລາວເຮົາ. ກອງ "ລາດຊະວົງ" ໄດ້ຈັດຕັ້ງຂຶ້ນ ວັນທີ 20-1-1949, ປະກອບດ້ວຍຊາວຫ້າສະຫາຍເທົ່ານັ້ນ ໂດຍແມ່ນທ່ານ ໄກສອນພົມວິຫານ, ຮອງປະທານແນວລາວຮັກ ຊາດ

ເປັນຜູ້ບັນຊາ. ເອີ້ນວ່າກອງປະກອບອາວຸດ, ແຕ່ກອງ "ລາດຊະວົງ" ໃນຄາວນັ້ນແມ່ນບໍ່ມີອາວຸດໃນມື (ມີພຽງແຕ່ປືນແກັບ, ປືນເພີງຫລື ປືນຫລັກຍາວທີ່ເກົ່າແກ່, ຫລ້າສະໄຫມຂອງພວກຝະລັ່ງເທົ່ານັ້ນ) ເຄື່ອງນຸ່ງຂອງຖືຈົນເຖິງສະບຽງອາຫານ, ທຸກສິ່ງທຸກຢ່າງຈະຕ້ອງຫາ ລ້ຽງກຸ້ມຕົນເອງ. ໃນເບື້ອງຕົ້ນ ກອງ "ລາດຊະວົງ" ຈຳຕ້ອງເຄື່ອນ ໄຫວຕາມຫ້ວຍຮ່ອມ ປ່າຕຶບ, ດົງໜາ ແລະ ເລັດລອດຂອດຕິດຢູ່ກັບ ການເຄື່ອນໄຫວຂອງສັດຕູ, ຄ່ອຍໂຄສະນາຂົນຂວາຍເອົາປະຊາຊົນ ແລະ ໄປເຖິງບ່ອນໃຊ້ທຸກຮູບການເພື່ອຕີສັດຕູ, ຍາດເອົາອາວຸດ ຈາກ ກຳມືສັດຕູມາປະກອບໃຫ້ຕົນເອງແລ້ວສືບຕໍ່ດຳເນີນຕີສັດຕູ. ດຽວນີ້ ກອງ "ລາດຊະວົງ" ໄດ້ເຕີບໃຫຍ່ຂະຫຍາຍຕົວຂື້ນເປັນກອງທັບປົດປ່ອຍປະຊາຊົນລາວ; ມີເດຊານຸພາບອັນບໍ່ມີສັດຕູຕົວໃດຈະມາເອົາໄຊຊະ ນະໄດ້. ຫລືໃນເລື່ອງ "ກອງພັນທີສອງ ພິລະອາດຫານ", ນັກຂຽນ ໄດ້ເລົ່າສູ່ພວກເຮົາຟັງ ວິທີການຕໍ່ສູ້ ແລະ ສູ້ຮົບ ອັນພິລະອາດ ຫານຂອງກອງພັນທີສອງ ຂອງຝ່າຍປະເທດລາວທີ່ໄດ້ຜ່າວົງພິດລ້ອມຂອງສັດຕູ 6 ກອງພັນ, ຮັກສາກຳລັງອັນຄົບຖ້ວນອອກມາຫາເຂດທີ່ ໝັ້ນເລື່ອງກອງພັນທີສອງຖອນທັບອອກຈາກທົ່ງ ໄຫຫິນ ໄດ້ຢ່າງປອດ ໄພນັ້ນມັນເປັນເລື່ອງທີ່ໜ້າອັດສະຈັນ; ມັນບໍ່ພຽງແຕ່ເຮັດໃຫ້ປະຊາຊົນລາວທົ່ວປະເທດຮູ້ສຶກເທົ່ານັ້ນ, ແຕ່ຍັງເຮັດໃຫ້ຊາວໂລກຕື່ນເຕັ້ນໃຈ ອີກດ້ວຍ ພາຍຫລັງສັນຕິພາບ ໄດ້ກັບຕ່າວຄືນມາສູ່ປະເທດລາວເຮົາຕາມສັນຍາລະຫວ່າງກຳລັງຝ່າຍປະເທດລາວກັບລັດຖະບານອານາ ຈັກກອງພັນທີສອງຂອງປະເທດລາວ ໄດ້ເຂົ້າຕັ້ງຢູ່ທົ່ງ ໄຫຫີນ. ແຕ່ຍັງບໍ່ທັນໄດ້ເທົ່າໃດ, ພວກຫຸ່ນວຽງຈັນໂດຍປະຕິບັດຕາມຄຳສັ່ງຂອງຈັກກະພັດ

ອາເມລິກາ ໄດ້ລືບລ້າງສົນຍາເຊີແນວ, ສົນຍາວຽງຈັນແລະທົ່ງ ໄຫຫີນ ຈັບກຸມຄຸມຂັງບັນດາທ່ານຜູ້ນຳຂອງຝ່າຍປະເທດລາວຢ່າງຜິດ ກົດໝາຍ ໃຊ້ທະຫານຫຸ່ນຫລາຍກອງພັນມາປິດລ້ອມກອງພັນທີໜຶ່ງແລະທີສອງຂອງຝ່າຍປະເທດລາວ ແຕ່ລະກ້າວ, ພວກມັນໄດ້ດຳເນີນ ເລ່ກົນອັນເລິກແລບ ແລະ ໂຫດຫ້ຽມ; ທັງຊື້ຈ້າງຈອບອອຍດ້ວຍເງິນ ຄຳກຳແກ້ວ, ຍົດຖາບັນດາສັກ. ແບ່ງແຍກພາຍໃນບັນດານັກຮົບປະ ເທດລາວ, ຕັດທຸກການຕິດຕໍ່ລະຫວ່າງຂັ້ນເທິງ ແລະ ຂັ້ນລຸ່ມ, ລະ ຫວ່າງກອງທັບປະເທດລາວກັບປະຊາຊົນ; ພ້ອມກັນນັ້ນພວກມັນໄດ້ໃຊ້ກຳລັງອາວຸດເພື່ອ ນາບຂູ່ຫວັງດັບສູນກຳລັງຝ່າຍປະເທດລາວໃຫ້ກ້ຽງ ຕໍ່ໜ້າສະພາບການທີ່ຫຍຸ້ງຍາກ ແລະດຸເດືອດດັ່ງກ່າວ, ບັນດານັກ ຮົບປະເທດລາວ ໄດ້ໃຊ້ຍຸດທະວິທີອັນສະຫລາດຫລັກແຫລມ, ນ້ຳໃຈສູ້ ຮົບອັນພິລະອາດຫານ ໄດ້ທັບມ້າງການປິດລ້ອມຂອງສັດຕູ, ຮັກສາກຳ ລັງຢ່າງຄົບຖ້ວນອອກມາຫາເຂດທີ່ໝັ້ນ ຂອງການປະຕິວັດ.

ການຖອນທັບຂອງກອງພັນທີສອງ ກັບຄືນມາເຂດທີ່ໝັ້ນເທື່ອ ນີ້ໄດ້ບັນທຶກຢູ່ໃນປະຫວັດການຕໍ່ສູ້ ອັນອົງອາດກ້າຫານຂອງຊາດ, ມັນກາຍເປັນບົດເພງວິລະຊົນອັນສະຫງ່າຜ່າເຜີຍຂອງປະຫວັດການຕໍ່ ສູ້ກູ້ຊາດຂອງປະຊາຊົນລາວເຮົາ.

ຈາກແນວປູກສິແດງຂອງກອງພັນທີສອງທີ່ໄດ້ທົດສອບຢູ່ໃນແປວໄຟ ໃນຄີມເຫລັກຂອງສັດຕູຢູ່ທົ່ງ ໄຫຫີນອອກມາແລະ ໄດ້ຫວ່ານລົງໃສ່ດິນທີ່ອຸດົມສົມບູນຂອງປະເທດຊາດ ໄດ້ແຕກໜໍ່ກໍ່ຈາວ ແລະ ເກີດ ເປັນຫລາຍຮ້ອຍ. ຫລາຍພັນແນວປູກສິແດງໃຫ້ແກ່ປະເທດຊາດ. ໃນປະ ຈຸບັນນີ້, ຢູ່ທຸກກົມກອງຂອງກອງທັບປົດປ່ອຍປະຊາຊົນລາວທີ່ກຳລັງສູ້ຮົບ

ຢູ່ໃນທຸກສະໜາມຮົບ; ຄຽງຂ້າງກັບບັນດານັກຮົບວິລະຊົນ ກອງ ພັນທີ່ສອງເກົ່າ, ພວກເຮົາເຫັນມີຕື່ມອີກຫລາຍພັນຫລາຍໝື່ນນັກຮົບກອງພັນທີ່ສອງທີ່ໜຸ່ມນ້ອຍກຳລັງສູ້ຮົບແລະກຳລັງຕີເອົາຊະນະສັດຕູຢູ່ ທຸກສະໜາມຮົບ: ສາລາພູຄູນ, ຫລວງນ້ຳທາ, ນ້ຳບາກ, ຜາດີ, ພູກູດ, ທົ່ງໄຫຫີນ, ບົວລະເວນ, ທາງເລກທີ ໙ ແລະອື່ນໆ... ວິລະກຳໃນການສູ້ຮົບ ແລະ ຊື່ສຽງຂອງບັນດານັກຮົບກອງພັນທີ່ສອງ ໄດ້ບັນທຶກຢູ່ ໃນປະຫວັດການຕໍ່ສູ້ປະຕິວັດຂອງປະຊາຊົນລາວຢ່າງແທ້ຈິງ.

ເກີດມີກົມກອງວິລະຊົນຂຶ້ນມັນຈະຕ້ອງປາກົດມີບຸກຄົນວິລະຊົນແລະບຸກຄົນວິລະຊົນຈະຕ້ອງເກີດຂຶ້ນບົນພື້ນຖານທີ່ມີກົມກອງວິລະຊົນບໍ່ອາດຈະມີວິລະຊົນເອກະຊົນໄດ້, ນັ້ນມັນແມ່ນຕັກກະສາດແຫ່ງຊີວິດຂອງມະນຸດ.

ເທື່ອນີ້ພວກເຮົາຫາກໍ່ໄດ້ພ້ອມກັນຈຳແນກມູນເຊື້ອພິລະອາດ ຫານຂອງກອງທັບປົດປ່ອຍປະຊາຊົນລາວ ແລະກົມກອງວິລະຊົນ, ຕໍ່ໄປ ນີ້ພວກເຮົາຈຶ່ງພ້ອມກັນຊອກຮູ້ກ່ຽວກັບບຸກຄົນວິລະຊົນຕື່ມອີກ. ໃນເລື່ອງສີທອງອະນະເຕະ "ນັກຂຽນໄດ້ເລົ່າຄືນສູ່ພວກເຮົາຟັງເລື່ອງຂອງ ນັກວິລະຊົນສະຫາຍ ສີທອງຊຶ່ງກອງບັນຊາການ ສູງສຸດກອງທັບປົດປ່ອຍປະຊາຊົນລາວໄດ້ມອບກຽດເປັນນັກວິລະຊົນສອງຄັ້ງ ແລະ ໄດ້ ຮັບຫລຽນໄຊອິດສະຫລະຊັ້ນໜຶ່ງ. ບ້ານເກີດເມືອງນອນຂອງສະຫາຍ ສີທອງຢູ່ເຂດຮ່ອມພູນ້ຳຕອນ, ມີສາຍພູພາລາງທີ່ໃຫຍ່ຫລວງແມ່ນ້ຳ ລຳເຊທີ່ໃສເປັນ. ພູຜາປ່າດົງ, ແມ່ນ້ຳລຳເຊແລະການປະຕິວັດໄດ້ ລ້ຽງເກື້ອທ້າວນ້ອຍສີທອງ; ເມື່ອໃຫຍ່ຂຶ້ນມາ, ສີທອງ ໄດ້ເຂົ້າຮ່ວມການປະຕິວັດ, ໃນເບື້ອງຕົ້ນສະຫາຍໄດ້ເຂົ້າຢູ່ກອງຫລອນ; ຕໍ່ຈາກນັ້ນລາວໄດ້

ເຂົ້າເປັນທະຫານຫລວງທ້າຍປີ 1952. ພວກລ່າເມືອງຂຶ້ນຝະລັ່ງໄດ້ເປີດການກວາດລ້າງເຂົ້າເຂດທີ່ໝັ້ນນ້ຳຕອນ, ເພື່ອຫວັງທຳຣ້າຍພົນຖານການປະຕິວັດ; ຊອກຂ້າພະນັກງານແຂວງ, ທຳຣ້າຍສາງ ແລະໂຮງງານຜະລິດອາວຸດຕ່າງໆ. ສີທອງ ໄດ້ນຳພາໜ່ວຍສູ້ຣົບ ໜ່ວຍໜຶ່ງຕ້ານພວກສັດຕູຄືນ. ແຕ່ສຸດທ້າຍເມື່ອລາວກຳລັງໂຈມເອົາໝູ່ ຜູ້ໜຶ່ງທີ່ຖືກບາດເຈັບ ອອກຈາກວົງສະກັດຂອງສັດຕູ, ສະຫາຍເລີຍຖືກຈັບ ພວກສັດຕູແຂ່ງກັນທຸບຕີທໍລະມານ, ສໍ້ຖາມສະຫາຍ ສີທອງ; ລາວໄດ້ຕອບພວກສັດຕູຄືນ ດ້ວຍທ່າຂຶງຂັງວ່າ: "ປະເທດນີ້ແມ່ນ ຂອງພວກກູ, ຢູ່ໃສກໍ່ມີບ່ອນຢູ່ຂອງພະນັກງານ, ສາງເຂົ້າຂອງພວກກູ ແມ່ນໄຮ່ນາ, ແມ່ນປະຊາຊົນ; ສ່ວນສາງອາວຸດແມ່ນບໍ່? ສາງອາວຸດ ຂອງພວກກູແມ່ນຢູ່ໃນກອງທະຫານຂອງພວກສູ..." (ຂັດຈາກປຶ້ມນັກ ຣົບພູກູດ; ໜ້າ 62). ເຫັນວ່າໃຊ້ວິທີການທຸບຕີທໍລະມານບໍ່ໄດ້ຮັບຜົນຫຍັງໝົດ; ພວກມັນໄດ້ໃຊ້ເລ່ຫລ່ຽມທີ່ໂຫດຫ້ຽມກວ່ານັ້ນ. ພວກມັນໄດ້ ຈັບເອົາແມ່ຂອງ ສະຫາຍສີທອງມາບອກໃຫ້ສະຫາຍ ຍອມພວກມັນ, ສະຫາຍສີທອງເປັນລູກຜູ້ໜຶ່ງທີ່ຮູ້ຈັກຮັກແພງແລະເຄົາລົບນັບຖືພໍ່ແມ່ຢ່າງສູງ; ເພາະສະນັ້ນເມື່ອເຫັນສັດຕູຈັບແມ່ມາ, ສະຫາຍສີທອງເຈັບແສບແລະຄຽດແຄ້ນຄືດັ່ງມີດໄດ້ສຽບແທງເຂົ້າໃນດວງໃຈຂອງຕົນ; ແຕ່ສະຫາຍສີທອງໄດ້ກະຕວງກ່ອນແລ້ວ ກ່ຽວກັບ ເລ້ກົນອັນໂຫດຫ້ຽມຂອງສັດຕູ, ສະຫາຍໄດ້ກັ້ນໃຈເວົ້ານຳແມ່ວ່າ: "ແມ່ເອີຍ! ພວກມັນບໍ່ ສາມາດເຮັດຫຍັງໃຫ້ລູກໄດ້ດອກ, ພວກມັນຈຶ່ງໄປຈັບເອົາແມ່ມານີ້, ພວກມັນໂຫດຫ້ຽມສາມານກວ່າສັດຫລາຍເທື່ອ, ພວກມັນຫວັງໃຊ້ແມ່ ເພື່ອຈຳໃຫ້ລູກຍອມພວກມັນ. ນ້ຳໃນຫ້ວຍໄຫລຫລາຍພື້ນໃນຫ້ວຍກໍຈະຫ້ຽນ

ໄປ. ແມ່ເອີຍນ້ຳຕາຂອງແມ່ໄຫລອອກອາດຈະເຮັດໃຫ້ຈິດໃຈຂອງລູກ ອ່ອນລົງ ຄັນຖ້າຕາຍກໍ່ມີແຕ່ລູກຄົນດຽວຕາຍ, ແຕ່ຍັງມີນັກຮົບປະເທດ ລາວນັບເປັນພັນເປັນໝື່ນ. ໃຜໆກໍ່ຖະໜອມຫອມຮັກ ແລະທັງ ເປັນ ລູກຂອງແມ່; ພວກເຂົາຈະແກ້ແຄ້ນໃຫ້ລູກ ທຸກເຊົ້າຄ່ຳວັນແລງ ພວກ ເຂົາຈະມາຢ້ຽມຢາມແມ່... (ຄັດຈາກປຶ້ມນັກຮົບພູກູດ; ໜ້າ63) ຄຳ ເວົ້າຂອງສະຫາຍສີທອງຈຶ່ງແມ່ນສຸດຈະລຶກ, ສົມເຫດສົມຜົນ. ແມ່ ນ້ຳ ຢູ່ໃນຫ້ວຍໄຫລດົນຫື້ນໃນຫ້ວຍກໍຈະຫ້ຽນໄປ; ລູກຜູ້ໜຶ່ງທີ່ຮູ້ຮັກ ແພງ ແລະເຄົາລົບນັບຖືພໍ່ແມ່, ຫລຽວເຫັນນ້ຳຕາແມ່ໃຜຈະບໍ່ສະທ້ອນ ໃຈ ຄວາມເວົ້ານັ້ນ ຕໍ່ກັບພວກເຮົາແມ່ນຈຳເປັນທີ່ສຸດ, ແຕ່ຕໍ່ກັບແມ່ ຄົນ ໜຶ່ງທີ່ມີລູກຊາຍເປັນວິລະຊົນ ແມ່ນເຫລືອ, ແມ່ຈະບໍ່ບອກລູກ ແລະ ຄວາມຈິງແມ່ຈະບໍ່ສາມາດອ້າປາກ ບອກລູກຍອມສັດຕູໄດ້, ຖ້າ ແມ່ ຫາກບອກໃຫ້ລູກຍອມສັດຕູແລ້ວ, ແມ່ກໍ່ບໍ່ສາມາດສົມເປັນແມ່ໄດ້ ແລະ ລູກຂອງແມ່ຖ້າຟັງຄວາມແມ່, ຍອມສັດຕູແລ້ວ, ຈະເຮັດແນວໃດຈຶ່ງຈະ ສົມເປັນລູກຂອງແມ່ອີກ. ອຸດົມຄະຕິອັນສູງສົ່ງຂອງທັງສອງ ແມ່ລູກ ກໍ່ ຈະຖືກສູນເສຍ ແລະ ເຂົາຈະບໍ່ສາມາດດຳເນີນຊີວິດ ອັນແທ້ຈິງໄດ້ ຕໍ່ໄປອີກ ແມ່ຂອງສະຫາຍສີທອງກໍ່ຄືດັ່ງບັນດາຜູ້ເປັນແມ່ຫລາຍ ຮ້ອຍ ຄົນ, ໃຜຈະບໍ່ເຈັບແສບ, ແໜ້ນໃຈເມື່ອເຫັນສາຍເລືອດຂອງຕົນກຳ ລັງຖືກທຸບຕີທໍລະມານ ແລະ ຄ່ອຍຍັບໄປສູ່ຄວາມຕາຍແຕ່ບັ້ນຫາຊີວິດ ຢູ່ມີ ນສິ່ງໜຶ່ງທີ່ຈຳຕ້ອງໄດ້ແລກປ່ຽນດ້ວຍເລືອດ, ດ້ວຍຄວາມ ເສຍ ສະຫລະ ແລະ ບໍ່ສາມາດປານີ ປານອມນຳສັດຕູໄດ້. ເພາະສະ ນັ້ນ ແມ່ທັງ ,ລູບໆຄຳໆທົ່ວຕົນຕົວທີ່ຖືກບາດເນື້ອຂອງສະຫາຍສີ ທອງ ທັງເວົ້ານຳ ສະຫາຍສີທອງດ້ວຍສຽງສະອຶກສະອື້ນວ່າ: "ສີທອງ! ລູກ

ຢ່າຫ້າມບໍ່ໃຫ້ແມ່ໄຫ້. ພວກມັນທຸບຕີທໍລະມານລູກປານນັ້ນ...ແມ່ບໍ່ເຈັບແຄ້ນ...ນ້ຳຕາບໍ່ໄຫລແມ່ນບໍ່ສາມາດອົດໄດ້! ແຕ່ແມ່ບໍ່ໄດ້ຈຳໃຫ້ ລູກເປັນຄົນກະບົດຊາດດອກ. ແມ່ຮູ້ດີວ່າລູກຄືກັນກັບໜໍ່ໄມ້ຢູ່ໃນປ່າ. ເວລາໃດກໍ່ໄປຊື່...(ຄັດຈາກປຶ້ມ: ນັກຮົບພູກູດ; ໜ້າ63) ອ່ານຄືນ ຄຳເວົ້າຂອງແມ່ສະຫາຍສີທອງ, ທັນໃດເຮົາພັດຄິດເຖິງຄຳເວົ້າຂອງແມ່ໃນບົດເລື່ອງ "ມີຊີວິດຄືອ້າຍຫງວຽນວັນໂຈ້ຍ" ຂອງນັກປະພັນ ພາກໃຕ້ຫວຽດນາມຈັນດິງເວີນ. ເມືອມີນັກສືບຄົນໜຶ່ງບອກໃຫ້ແມ່ມາບອກລູກສາວຂອງແມ່ຄຳນັບທຸງສາມແຈ່ຂອງພວກຫຸ່ນໄຊງ່ອນ ແລະຮັບ ຮູ້ວ່າຄອມມູນິດແມ່ນປ່າເຖື່ອນແລ້ວມັນຈະປ່ອຍລູກສາວຂອງແມ່ ອອກຈາກຄຸກແຕ່ແມ່ ໄດ້ເວົ້າທັ້ງໃສ່ໜ້າຂອງມັນວ່າ: "ກູເກີດມັນ ອອກມາກູມີແຕ່ ຮູ້ລ້ຽງເກືອມັນເທົ່ານັ້ນ, ສ່ວນມັນຈະຄຳນັບທຸງຂອງ ພວກທ່ານຫລືບໍ່; ມັນວ່າຄອມມູນິດດີຫລືຊົ່ວແມ່ນຕາມໃຈຂອງມັນ, ກູບໍ່ສາມາດບອກໃຫ້ມັນເວົ້າໄດ້...(ຄັດຈາກປຶ້ມ: ມີຊີວິດຄືອ້າຍຫງວຽນວັນໂຈ້ຍ; ໜ້າ 47) ມັນແມ່ນເປັນໜ້າອັດສະຈັນ, ເປັນໜ້າທະນົງໃຈຕໍ່ ບັນດາຜູ້ເປັນແມ່ຂອງພວກເຮົາທີ່ໄດ້ເກີດມີລູກວິລະຊົນທັງຫລາຍໃນ ສະໄໝປະຈຸບັນ, ແມ່ຂອງ ສະຫາຍ ສີທອງ ແລະແມ່. ນ. ເຂົາບໍ່ ທັນຮູ້ຈັກກັນ ແລະ ບໍ່ເຄີຍພົບໜ້າກັນຈັກເທື່ອເລີຍແຕ່ເຂົາພົບກັນຢູ່ ໃນບັນຫາໜຶ່ງຄືບົມນ້ຳໃຈຮັກຊາດ, ຮັກການປະຕິວັດແລະຄວາມ ເສຍສະຫລະຕໍ່ສູ້ເພື່ອເອກະລາດຂອງຊາດ, ນັ້ນມັນແມ່ນລັດທິມະນຸດສະທຳອັນສູງສົ່ງ.

ເລ້ກັນໃຊ້ແມ່ສະຫາຍສີທອງ ບີບບັງຄັບ ສະຫາຍສີທອງໄດ້ຖືກປະລາໄຊ, ພວກມັນເລີຍຈັບເອົາສະຫາຍສີທອງ ມາໃສ່ຄຸກຢູ່ວຽງ ຈັນ

ເພື່ອສືບຕໍ່ການທຸບຕີ, ສິ້ຖາມ ແລະ ທໍລະມານ. ຢູ່ໃນຄຸກ, ສະຫາຍສີທອງຍິ່ງຕໍ່ສູ້ຢ່າງດຸເດືອດກ່ວາເກົ່າ. ພວກມັນໃຊ້ທ່ອນເຫລັກເຜົາແດງນາບຂູ່ສະຫາຍ ຈຳໃຫ້ສະຫາຍຕ້ອງຍອມຕົວ ແຕ່ນັກຮົບປະຕິວັດ ໄດ້ຂຶງຕາເບິ່ງທ່ອນເຫລັກແດງດ້ວຍທ່າທີຂຶງຂັງ ແລະ ຈັບເອົາ ທ່ອນເຫລັກແດງນັ້ນ ມາດາດໃສ່ຂາຕຸ່ມຂອງຕົນດ້ວຍທ່າທີເສີຍເມີຍ, ທ່ອນເຫລັກແດງນັ້ນຄືດັ່ງໄດ້ຈູບລົງນ້ຳ ໜັງ ແລະຊີ້ນຖືກໄໝ້ດັງແຊດ ໆ ຄວັນໄໝ້ກູບຂຶ້ນ, ເຮັດໃຫ້ພວກສັດຕູຈີ່ນຢ້ານກົວ, ຮີບປົ່ນໜ້າໄປ ບໍ່ຫານຫລຽວເບິ່ງ, ພາຍຫລັງຖືກຄຸກໄລຍະໜຶ່ງ, ສະຫາຍສີທອງ ແລະ ນັກຮົບຈຳນວນໜຶ່ງໄດ້ໂຕນອອກຈາກຄຸກ ກັບຄືນມາສູ້ຮົບ. ປີ 1954 ໂດຍປະຕິບັດຕາມສັນຍາເຊີແນວ, ກຳລັງຝ່າຍປະເທດລາວໄດ້ ມາເຕົ້າໂຮມຢູ່ສອງແຂວງຊຳເໜືອ ແລະ ຜົ້ງສາລີ, ໃນທ່າມກາງ ມ່ວນຊື່ນ ຊົມເຊີຍນັກຮົບແຂ່ງຂັນທົ່ວປະເທດ. ສະຫາຍສີທອງໄດ້ຂັດເລືອກເປັນນັກວິລະຊົນຂອງກຳລັງປະກອບອາວຸດປະເທດລາວ.

ການລັດຖະປະຫານ ວັນທີ 9 ເດືອນ 8 ປີ 1960ເກີດຂຶ້ນຢູ່ນະຄອນຫລວງວຽງຈັນ, ຕາມຄວາມຕ້ອງການຂອງຄະນະລັດຖະປະຫານ ສະຫາຍສີທອງໄດ້ຮັບຄຳສັ່ງນຳເອົາກອງທະຫານແນວລາວຮັກ ຊາດເຂົ້າສົມທົບກຳລັງເປັນກາງ, ເພື່ອປົກປັກຮັກສາ ນະຄອນຫລວງວຽງຈັນ. ໃນການສູ້ຮົບ ເພື່ອຮັກສານະຄອນຫລວງ, ກອງຂອງສະຫາຍ ສີທອງໄດ້ສູ້ຮົບຢ່າງພິລະອາດຫານ ແລະ ສະຫາຍສີທອງໄດ້ຖືກ ເສຍສະຫລະພາຍຫລັງທີ່ເຮັດໜ້າທີ່ຕ້ານການບຸກໂຈມຕີຂອງ ສັດຕູທີ່ບຸກເຂົ້ານະຄອນຫລວງ, ເພື່ອໃຫ້ກຳລັງຂອງພວກເຮົາ ແລະ ປະຊາຊົນທັນຖອນອອກຈາກວຽງຈັນ.

ນ້ຳໃຈສູ້ຮົບ ແລະ ເສຍສະຫລະຢ່າງພິລະອາດຫານຂອງສະຫາຍສີຫອງເປັນການລວມສູນຂອງນ້ຳໃຈຮັກຊາດອັນສູງສົ່ງ, ຄວາມ ຄຽດແຄ້ນສັດຕູຢ່າງເລິກເຊິ່ງ, ນັ້ນແມ່ນຍ້ອນມີອຸດົມຄະຕິ, ມີລັດທິວິລະ ຊົນປະຕິວັດ ແລະ ທັງໄດ້ກາຍເປັນແວ່ນແຍງອັນແຈ້ງ ສະຫວ່າງ ຂອງສະໄໝປະຈຸບັນ-ຜ່ານສະຫາຍສີຫອງ, ພວກເຮົາມອງເຫັນຢູ່ໃນ ຕົວຂອງສະຫາຍ ສີຫອງມີທັງນ້ຳໃຈສູ້ຮົບອັນພິລະອາດຫານ, ບໍ່ຍິນ ຍອມສັດຕູຄືດັ່ງເຈົ້າອານຸວົງ, ອົງແກ້ວ, ອົງກົມມະດຳແລະມີທັງທາດ ແທ້ອັນເກັ່ງກ້າ, ໝັ້ນຄົງຂອງນັກຮົບປະຕິວັດ. ຮ່ຳຮຽນ ໄດ້ນ້ຳໃຈສູ້ຮົບອັນເກັ່ງກ້າພິລະອາດຫານ, ນ້ຳໃຈເສຍສະຫລະເພື່ອຊາດ, ເພື່ອການປະຕິວັດຂອງສະຫາຍສີຫອງ; ປະຈຸບັນນີ້, ຢູ່ໃນຖິ່ນແຖວຂອງກອງທັບ ປົດປ່ອຍປະຊາຊົນລາວ ໄດ້ປາກົດມີບໍ່ຮູ້ຈັກເທົ່າໃດນັກວິລະຊົນ, ນັກ ຮົບແຂ່ງຂັນຕື່ມອີກ, ນັ້ນແມ່ນບັນດາພວງດອກ ໄມ້ທີ່ງົດງາມກວ່າ ໝູ່ເຫລື້ອມໃສ ແລະຫອມກວ່າໝູ່ໃນສວນດອກ ໄມ້ທີ່ງົດງາມຂອງຊາດ.

ຊີວິດການຕໍ່ສູ້ຂອງປະຊາຊົນລາວເຮົາແສນທີ່ທຸກຍາກລຳບາກ, ແຕ່ໜີດຢ່າງ ເບີກບານມ່ວນຊື່ນ ດຸເດືອດທີ່ສຸດ, ແຕ່ກໍ່ທຳມະດາທີ່ສຸດ, ຕໍ່ບັນຫານີ້, ອາດຈະແມ່ນຍ້ອນ ລັກສະນະຂອງປະຊາຊົນລາວ ເຮົາແລະທາດແທ້ຂອງການປະຕິວັດລາວພາໃຫ້ມີແນວນັ້ນ, ຊີວິດຢູ່ ແນວໜ້າທຸກຍາກແທ້, ແຕ່ບັນດານັກຮົບປົດປ່ອຍຍັງມ່ວນຊື່ນເບີກບານ, ຮັກຊີວິດແລະສະຫງ່າຜ່າເຜີຍຈົນວ່າພວກເຮົາບໍ່ສາມາດຈະສຳນຶກໄດ້ຈິດໃຈອັນສົດຊື່ນເບີກບານ, ທະນົງໃຈ, ສະຫວາດສະເຫວີຍນັ້ນ ມັນແມ່ນຈິດໃຈຂອງຄົນລາວປະຕິວັດ, ດ້ານໜຶ່ງເຂົາ ໄດ້ສືບທອດມູນເຊື້ອອັນດີງາມຂອງຊາດ, ດ້ານໜຶ່ງເຂົາ ໄດ້ເຫັນແຈ້ງຈຸດປະສົງຂອງການ

ຕໍ່ສູ້ປະຕິວັດ ແລະ ເຊື່ອໝັ້ນວ່າໃນອະນາຄົດແມ່ນເດັດຂາດມີ ໄຊ ເພາະສະນັ້ນ ຍິ່ງທຸກຍາກປານໃດເຂົາຍິ່ງມ່ວນຊື່ນເບີກບານ, ໃນ ເລື່ອງ: "ຂັບໄລ່ສັດຕູໄປ 25ກິໂລແມັດ". ນັກຂຽນໄດ້ເລົ່າວ່າ: ມີ ຫລາຍຄືນແລ້ວ. ນັ່ງຢູ່ຂຸມຄອງ, ບັນດານັກຣົບຄິດຮອດບ້ານເກີດເມືອງ ນອນ; ມີສະຫາຍໜຶ່ງເຫັນນົກເຂົາຄູ່ໜຶ່ງ ນອນຢູ່ເທິງງ່າໄມ້ ໄຜ່ ລາວເລີຍລືມນຳໝູ່ວ່າ:

"...ຖ້າຂ້ອຍຫາກກັບກາຍເປັນນົກໂຕນັ້ນ, ຂ້ອຍຈະບິນເມືອບ້ານ ຂ້ອຍໂລດ, ເມືອບາຍມືນາງແກ້ວຈັກໜ້ອຍ..." "...ນຶ່ງມີແຕ່ບາຍ ມືເທົ່ານັ້ນບໍ່" ນັກຣົບຜູ້ໜຶ່ງເວົ້າຕໍ່ແລ້ວການເລົ່າເລື່ອງ ໄດ້ກາຍເປັນ ການມ່ວນຊື່ນ (ຂັດຈາກປຶ້ມ: ຜ່ານຜ່າພາຍຸໄຟ; ໜ້າ67). ດ້ວຍນ້ຳໃຈ ສູ້ຮົບອັນພິລະອາດຫານແລະຄວາມມ່ວນຊື່ນເບີກບານໃຈຄືແບບນີ້ສຽງ ເຮືອບິນອາຍພົ່ນຂອງຈັກກະພັດອາເມລິກາ, ສຽງດັງສະໜັ່ນ ຫວັ່ນ ໄຫວຂອງປືນໃຫຍ່ທຸກຊະນິດຂອງສັດຕູ ຈະເຮັດແນວໃດຈຶ່ງສາ ມາດ ລຶບຖິ້ມ ໄດ້ສຽງຮ້ອງລຳທຳເພງ, ສຽງແຄນແລະສຽງກອງລຳວົງ ອັນ ສົດຊື່ນເບີກບານຂອງ ບັນດານັກຣົບ ທີ່ກຳລັງດັງກ້ອງອອກມາ ຈາກ ຂຸມຄອງທີ່ໜາວຈ້ອຍຫລືຢູ່ໃນສະໜາມຮົບທີ່ຄວັນລູກປືນຍັງຂົວກຸ້ນ ຢູ່ ໂອຍ! ສຽງຮ້ອງຂອງບັນດານັກຣົບກຳລັງສູ້ຮົບຕ້ານຈັກກະພັດອາເມລິ ກາຮຸກຮານ; ສຽງຮ້ອງຂອງບັນດາຄົນທີ່ກຳລັງກຸມປ້ຳກັບຄວາມ ເປັນ ແລະຄວາມຕາຍ. ແຕ່ໃນຄວາມທຸກຍາກຮ້ອຍແປດພັນປະການນັ້ນ ຊຸ້ ພັດ ໄດ້ຍິນສຽງຮ້ອງລຳທີ່ອອນຊອນແລະສົດໃສຂອງນັກປະຕິວັດ ໄດ້ດັງ ກ້ອງ ໄປທົ່ວຮ່ອມຫ້ວຍພູເຂົາ, ຍິ່ງທຸກຍາກລຳບາກ, ສຽງຮ້ອງເພງຍິ່ງ ແຮງຂຶ້ນ, ຍິ່ງດຸເດືອດທໍ່ໃດສຽງເພງຍິ່ງສົດຊື່ນເບີກບານທໍ່ນັ້ນເໜືອນ

ດັ່ງວ່າໃນຊີວິດຂອງຄົນລາວເຮົາບໍ່ສາມາດຂາດໄດ້ສຽງຮ້ອງລຳ ທຳ
ເພງ, ສຽງກອງອັນສົດຊື່ນຂອງແບບຟ້ອນລຳວົງ ແລະ ຜ່ານ ສຽງ
ຮ້ອງລຳທຳເພງ, ສຽງແຄນ, ສຽງກອງເຫລົ່ານັ້ນ ມັນໄດ້ສ່ອງ ແສງ
ເຖິງລັກສະນະຊາດຢ່າງຈະແຈ້ງ. ຊາດລາວເຮົາເປັນຊາດໜຶ່ງທີ່ຮັກ
ຫອມສັນຕິພາບແລະມັກຄວາມສະຫງົບສຸກ. ຖ້າໃຜພັນລະນາເລື່ອງ ຊີ
ວິດການຕໍ່ສູ້ແລະເພີ່ມພູນຜະລິດຜົນຂອງປະຊາຊົນລາວເຮົາ, ຖ້າບໍ່ພັນ
ລະນາເຖິງຈິດໃຈ ມ່ວນຊື່ນເບີກບານຂອງເຂົາໃນທຸກເວລາ ແລ້ວ
ຕາມພວກເຮົາຄິດວ່າຄຸນຄ່າຂອງບົດເລື່ອງນັ້ນອາດຈະຖືກລຸດຜ່ອນລົງ
ບໍ່ຫລາຍກໍ່ໜ້ອຍ. ເພາະວ່າລັກສະນະຊາດໃນວັນນະຄະດີ ໄດ້ສະແດງ
ດີແນວນັ້ນລະ.

ການປະຕິວັດລາວເຮົາ ໄດ້ຜ່ານພົ້ນຫລາຍໄລຍະຕ່າງກັນ. ບາງໄລ
ຍະຕໍ່ສູ້ທາງດ້ານອາວຸດເປັນຈຸດໜັກ, ແຕ່ກໍ່ມີບາງໄລຍະຕໍ່ສູ້ທາງດ້ານ
ການເມືອງເປັນຈຸດໜັກ, ບາງໄລຍະຕໍ່ສູ້ດ້ານການເມືອງແລະ ດ້ານ
ອາວຸດໄປພ້ອມກັນ. ທັງຕີທັງເຈລະຈາ. ການເຈລະຈາກໍ່ແມ່ນຍຸດທະວິ
ທີເພື່ອເປີດສະໜາມຮົບໃໝ່, ຕໍ່ສູ້ຢ່າງຖືກກົດໝາຍແລະເພື່ອປັບປຸງ
ກຳລັງຍຸດທະວິທີ ແລະ ຮູບການຕໍ່ສູ້ຕ່າງໆເຫລົ່ານັ້ນມັນເປັນຈຸດ ພິ
ເສດຂອງການປະຕິວັດລາວ. ໃນການຕໍ່ສູ້ທາງດ້ານການເມືອງມີເຫດ
ການໜຶ່ງຊຶ່ງປະຫວັດສາດຈະໄດ້ບັນທຶກເຂົ້າປຶ້ມຄຳຂອງການຕໍ່ສູ້ປະຕິ
ວັດຂອງຊາດ. ນັ້ນຄືການໂຕນອອກຈາກຄຸກຂອງບັນດາທ່ານຜູ້ນຳແນວ
ລາວຮັກຊາດ. ໃນປຶ້ມເລື່ອງ "ພາຍຸປ່າ". ນັກຂຽນໄດ້ເລົ່າສູ່ພວກເຮົາ
ຟັງເຖິງຈິດໃຈມະໂນພາບຂອງປະຊາຊົນ, ນັບທັງຄູບາອາຈານ, ຂ້າ
ລາຊະການ, ນັກຮຽນ, ນັກສຶກສາ, ນາຍແລະພົນທະຫານໃນກອງ ທັບ

ລາຊະອານາຈັກທີ່ຢູ່ຕົວ ເມືອງວຽງຈັນແລະທົ່ວປະເທດຕໍ່ກັບເຫດການ
ທີ່ບັນດາທ່ານຜູ້ນຳຂອງແນວລາວຮັກຊາດ ຖືກພວກຂາຍຊາດພູຍ ຊະ
ນະນິກອນແລະກະຕ່າຍຈັບໃສ່ຄຸກທີ່ໂພນເຄັງ ເຂົາເປັນຫ່ວງເຖິງ ຊີ
ວິດຂອງບັນດາທ່ານຜູ້ນຳ, ເຖິງສະເດັດເຈົ້າສຸພານຸວົງ ແລະ ເປັນ
ຫ່ວງເຖິງໂຊກຊະຕາກຳຂອງປະເທດຊາດ. ເຂົາຄຽດແຄ້ນສັດຕູເຂົາ
ຮ່ວມມິດຕຶງ, ຫວ່ານໃບປິວຄັດຄ້ານການກະທຳອັນຜິດກົດໝາຍ, ໄຮ້
ສັດຈະທຳຂອງພວກຫຸ່ນທີ່ກຳອຳນາດຢູ່ວຽງຈັນແລະຮ້ອງໂຮຊື່ນຊົມໃນ
ເມື່ອໄດ້ຮັບຂ່າວບັນດາທ່ານ ຜູ້ນຳ ແນວລາວຮັກຊາດ, ສະເດັດເຈົ້າ
ສຸພານຸວົງ ໄດ້ໂຕນອອກຈາກຄຸກ, ກັບຄືນມານຳພາ ປະຊາຊົນສືບ ຕໍ່
ການຕໍ່ຕ້ານ. ມີຫລາຍບ້ານຢູ່ນອກເມືອງວຽງຈັນທີ່ຄະນະ ໄດ້ໄປ ຜ່ານ
ປະຊາຊົນໄດ້ຊອກຫາວິທີເພື່ອປົກປັກ ແລະ ປ້ອງກັນຄະນະແລະຍັງມີ
ຫລາຍເລື່ອງອີກທີ່ປະຊາຊົນລາວ ໄດ້ສະແດງຄວາມເຄົາລົບນັບ ຖື
ເຊື່ອໝັ້ນຕໍ່ບັນດາ ທ່ານຜູ້ນຳປະຕິວັດ. ໃນບົດບັນທຶກທວນຄືນ" ສະ
ເດັດເຈົ້າສຸພານຸວົງມາຢ້ຽມຢາມໂຮງຮຽນນ້ອງນ້ອຍ"ຂອງສະ ຫາຍ
ສິນໄຊ ໄດ້ເວົ້າເຖິງຄວາມຮູ້ສຶກແຫ່ງຈິດໃຈຂອງຕົນທີ່ໄດ້ພົບສະ ເດັດ
ເຈົ້າສຸພານຸວົງ, ໃນໂອກາດສະເດັດ ໄປຢ້ຽມຢາມໂຮງຮຽນນ້ອງນ້ອຍ
ວັນທີ 1 ເດືອນ 6 ວັນບຸນນ້ອງນ້ອຍສາກົນ, ຫລືໃນເລື່ອງສັ້ນ "ນ້ອງ
ອານຸ" ນັກຂຽນ ໄດ້ເວົ້າເຖິງນ້ຳໃຈເດັດດ່ຽວຕໍ່ສູ້, ເພື່ອຮັກສາຮູບ ສະ
ເດັດເຈົ້າສຸພານຸວົງຂອງນ້ອງນ້ອຍຄົນໜຶ່ງຍ້ອນຮູບຂອງສະເດັດເຈົ້າ
ສຸພານຸວົງ ໄດ້ກາຍເປັນຄະຕິເຕືອນໃຈ ແລະ ນຳພານ້ອງອານຸໄປ ສູ່
ເສັ້ນທາງປະຕິວັດແລະໃນສຸດທ້າຍນ້ອງອານຸ ໄດ້ຖືກເສຍສະຫລະຊີວິດ
ນ້ອງ ໄດ້ເອົາເລືອດສີແດງຂອງນ້ອງເພື່ອຮັກສາຮູບຂອງສະເດັດເຈົ້າ

ສຸພານຸວົງ ໄວ້, ການເສຍສະຫລະຂອງນ້ອງອານຸບໍ່ມີປະກົດຫຍັງທີ່ ມີລັກສະນະລະຄອນໂສກ. ກົງກັນຂ້າມມັນເປັນການເສຍສະຫລະອັນອົງອາດກ້າຫານ, ເສຍສະຫລະເພື່ອປົກປັກຮັກສາອຸດົມຄະຕິແລະອາ ນາຄົດອັນສະຫວ່າງງາມຂອງຊາດ. ຍ້ອນການເສຍສະຫລະຂອງນ້ອງອານຸໄດ້ເຮັດໃຫ້ແມ່ຂອງນ້ອງອານຸແລະ ໄທບ້ານເຫັນແຈ້ງຕື່ມອີກກ່ຽວ ກັບແສງສະຫວ່າງຂອງການປະຕິວັດແລະ ໄດ້ປຸກລຸກຈິດໃຈປະຕິວັດໃນຫມູ່ປະຊາຊົນໃນບ້ານ.

ທ່ານເລນິນ ໄດ້ເວົ້າວ່າ: "ການປະຕິວັດແມ່ນວັນບຸນຂອງມະຫາຊົນຜູ້ທຸກຍາກ"; ການປະຕິວັດ ໄດ້ທັບມ້າງ ສາຍໂສ້ເຫລັກ, ການກົດຂີ່ຂູດຂອງພວກຈັກກະພັດ ແລະ ສັກດີນາອອກຈາກຄໍ, ຈາກແຂນທີ່ ຈ່ອຍຜອມຂອງມະຫາຊົນຜູ້ອອກແຮງງານ, ການປະຕິວັດ ໄດ້ເປັນຜູ້ລຶບລ້າງຮ່ອງຮອຍຂອງລະບອບຂ້ອຍຂ້າທາສາທີ່ເກີດຂຶ້ນເທົ່າໃດພັນປີມາ ໃນຫມູ່ມະຫາຊົນຜູ້ທຸກຍາກ ແລະ ການປະຕິວັດ ໄດ້ນຳເອົາຊີວິດອັນ ພາສຸກມາສູ່ພວກເຂົາເຈົ້າທຸກທົ່ວຫນ້າ. ສະນັ້ນໃນເມື່ອແສງສະ ຫວ່າງຂອງການປະຕິວັດ ໄດ້ມາເຖິງເຂົາເຈົ້າ. ເຂົາເຈົ້າມ່ວນຊື່ນເບີກບານຂະຫຍັນຂັນແຂງ, ສະຫມັກເຂົ້າຮ່ວມການປະຕິວັດແລະການປະຕິ ວັດຈະແຜ່ຂະຫຍາຍກ້ວາງ ໄດ້ກໍ່ຈະຕ້ອງອີງໃສ່ມະຫາຊົນຜູ້ທຸກຍາກ; ຕ້ອງເຮັດໃຫ້ມະຫາຊົນຜູ້ທຸກຍາກສະຫນັບສະຫນູນ. ການປະຕິວັດຊາດ ປະຊາທິປະໄຕຂອງປະຊາຊົນລາວເຮົາແມ່ນການປະຕິວັດຂອງທົ່ວ ປວງຊົນ ທັງຊາດຕ້ານການຮຸກຮານ ຂອງຈັກກະພັດອາເມລິກາ. ເພາະສະນັ້ນບໍ່ແມ່ນມີແຕ່ບັນດາພະນັກງານ, ນັກຮົບຈຶ່ງມີຫນ້າທີ່ຈັບປືນ ສັງຫານສັດຕູ; ພວກເຮົາຍັງເຫັນພວກລຸງຊາວນາທີ່ເຖົ້າແກ່, ເອື້ອຍນ້ອງ

ຍິງໝີລູກອ່ອນນ້ອຍຈົນເຖິງພວກນ້ອງນ້ອຍອາຍຸສິບເອັດ, ສິບສອງປີ ກໍ່ສາມາດພ້ອມກັນລຸກຂຶ້ນຈັບປືນສັງຫານສັດຕູໄດ້. ພົນລະເມືອງຜູ້ໜຶ່ງ ກໍ່ປຽບເໝືອນ ກຳແພງໜຶ່ງເພື່ອຕ້ານຢັບການຮຸກຮານຂອງສັດຕູໃນ ເລື່ອງ "ຝົນສັ່ງຟ້າ" ທະນູໄຊ ໄດ້ເລົ່າສູ່ພວກເຮົາຟັງເລື່ອງລຸງທະຫານໃຊ້ ເລ່ກົນຈັບພວກກົນມັງ ໂດໄດ້ຫ້າບັກ ແລະທີເປີກສານາຍທະຫານອາ ເມລິກາ ໜຶ່ງບັກຫລີໃນເລື່ອງ "ທັງເປັນເພື່ອນສູ້ຮົບ". ພຽງ ແຕ່ ເລື່ອງເອື້ອຍຈິໄດ້ສ່ຽງໄພ ແລະ ເສຍສະຫລະເພື່ອຊ່ວຍເອົາ ອ້າຍ ສິ, ພະນັກງານປະເທດລາວ ເທົ່ານັ້ນ ກໍ່ເປັນເລື່ອງໜຶ່ງທີ່ສະທົກສະ ທ້ອນໃຈແລ້ວ, ແຕ່ໃນເລື່ອງນັກຂຽນພັດບໍ່ຢຸດຢູ່ແຕ່ເທົ່ານັ້ນແລະກໍ່ບໍ່ ມີ ພຽງແຕ່ປະດິດພາບເອື້ອຍຈໍ. ພິລະອາດຫານ, ສະຫລາດຫລັກ ແຫລມ ແລະທຸ່ນທ່ຽງ. ນັກຂຽນຍັງໄດ້ເຂົ້າເລິກກ່ວານັ້ນ ແລະ ປະດິດ ພາບ ເອື້ອຍຈໍໄດ້ຢ່າງຄົບຖ້ວນກ່ວານັ້ນ, ພາຍຫລັງທີ່ໄດ້ຊ່ວຍເອົາອ້າຍສີພົ້ນ ອອກຈາກກຳມື ຂອງສັດຕູແລ້ວ, ເອື້ອຍຈໍຍັງໄດ້ຊອກຫາທຸກວິທີ ທາງ ຍາດເອົາປືນສັດຕູ. ມືເບື້ອງໜຶ່ງອູ້ມລູກ, ເບື້ອງໜຶ່ງຈັບປືນ, ເອື້ອຍ ຈໍໄດ້ຄຽງບ່າຄຽງໄຫລ່ກັບຜົວ ແລະໝູ່ເພື່ອນດັບສູນສັດຕູ, ຮູບ ພາບ ຂອງເອື້ອຍຈໍທີ່ຄຽງບ່າຄຽງໄຫລ່ກັບຜົວສູ້ຮົບ, ໄດ້ປະສານເຂົ້າໃນບັນ ຍາກາດຂອງກອງທັບແລະປະຊາຊົນຮ່ວມກັນສູ້ຮົບ ແລະ ກຳລັງ ຕີ ເອົາຊະນະສັດຕູໄດ້ກາຍເປັນຮູບພາບໃບໜຶ່ງ ທີ່ສວຍງາມແລະເປັນ ໜ້າອອນຊອນ. ນັ້ນມັນແມ່ນຄວາມງາມຂອງການປະຕິວັດ. ໃນເລື່ອງ "ຟອດສະບູ" ແລະ ເລື່ອງ "ລູກຂອງແມ່". ນັກຂຽນໄດ້ເລົ່າສູ່ ພວກ ເຮົາຟັງເລື່ອງຂອງນ້ອງນ້ອຍເຍົາວະຊົນສອງນ້ອງໄດ້ຕໍ່ສູ້ກັບສັດ ຕູ ຢ່າງພິລະອາດຫານ ແລະໃຊ້ເລ່ກົນຍາດເອົາປືນສັດຕູ. ໃນເລື່ອງ "

ນ້ອງນ້ອຍອາດຫານ", ພວກເຮົາເຫັນວ່ານ້ອງເຢີໄດ້ກຳເນີດ ແລະ ໃຫ່ຍຂຶ້ນພາຍຫລັງບ້ານເກີດເມືອງນອນຂອງນ້ອງ ໄດ້ຮັບການປົດປ່ອຍ ແລະຫລັງຈາກນັ້ນ, ນ້ອງ ໄດ້ເຫັນສະພາບການທຳຣ້າຍຂອງສັດຕູ ຕໍ່ກັບບ້ານເກີດຂອງນ້ອງ. ການປະຕິວັດ ໄດ້ສິດສອນໃຫ້ນ້ອງມີ ນ້ຳ ໃຈຮັກບ້ານເກີດເມືອງນອນ, ຮັກປະເທດຊາດ, ສ່ວນໂທດກຳ ຂອງສັດຕູ ໄດ້ ເປັນການປຸກລຸກນ້ຳໃຈຄຽດແຄ້ນ ຂອງນ້ອງ ສູງ ຂຶ້ນໝື ສະນັ້ນເຖິງວ່າອາຍຸຂອງນ້ອງຍັງອ່ອນ ກໍ່ຕາມ, ແຕ່ ນ້ອງ ເຢີ ໄດ້ຂຶ້ນກຳພໍ້ ແລະ ຄະນະກອງຫລອນບ້ານ ໄປສູ້ຮົບ ການກະທຳ ແລະ ຄຳເວົ້າຂອງນ້ອງເຢີ:" ເຮົາຍັງນ້ອຍ, ແຕ່ເຮົາມີ ນ້ຳໃຈ ຄຽດແຄ້ນສັດຕູ" ນັ້ນ ໄດ້ອະທິບາຍການກະທຳຂອງນ້ອງແລະບັນດາ ນ້ອງນ້ອຍເຍົາວະຊົນທັງຫລາຍຊຶ່ງ ໃນປະຈຸ ບັນ ກຳ ລັງ ຄຽງບ່າຄຽງໄຫລ່ກັບພໍ່ແມ່, ອ້າຍເອື້ອຍຈັບປືນຕີສັດຕູ. ຕໍ່ກັບພວກນ້ອງເຍົາວະ ຊົນຄວາມຈິງພວກນ້ອງຕ້ອງມີຊີວິດຮ່ຳຮຽນ, ຂຽນອ່ານຢູ່ໃນໂຮງ ຮຽນແຕ່ເກີດຢູ່ໃນສະພາບສົງຄາມກູ້ຊາດຕ້ານການຮຸກຮານຂອງຈັກກະພັດອາເມລິກາ, ແປວໄຟແຫ່ງການປະຕິວັດ ໄດ້ສັ່ງສອນໃຫ້ພວກນ້ອງ ຮັບຮູ້ຢ່າງຈະແຈ້ງວ່າ: ຢາກມີຊີວິດອັນຜາສຸກ, ຢາກໄດ້ຮ່ຳຮຽນ; ກ່ອນອື່ນໝົດແມ່ນຈະຕ້ອງຕໍ່ສູ້, ປັດກວາດພວກມານຮ້າຍອອກຈາກຜືນແຜ່ນດິນທີ່ປູ່ຍ່າຕາຍາຍໄດ້ສ້າງຂຶ້ນ ແລະ ໄດ້ປົກປັກຮັກສາໄວ້ໃຫ້ ພວກນ້ອງມາຕັ້ງຫລາຍພັນປີ.

ບົນພື້ນຖານຫລັກໝັ້ນອັນຖືກຕ້ອງ, ແນວລາວຮັກຊາດເວລາໃດ ກໍ່ພະຍາຍາມດຳເນີນແນວທາງສັນຕິພາບເປັນກາງແລະຄວາມຖືກຕ້ອງປອງດອງຊາດຢ່າງໝັ້ນຄົງ, ແຕ່ຍ້ອນການຮຸກຮານຂອງຈັກກະພັດອາ

ເມລິກາ; ຊາວກ່ວາປີທີ່ຜ່ານມາ, ສະພາບການດ້ານການເມືອງຢູ່ລາວຖືກເສດຖະໄພຢ່າງໜັກໜ່ວງ; ພວກມັນໄດ້ໃຊ້ທຸກເລ້ກົນເພື່ອ ທຳຮ້າຍແນວທາງສັນຕິພາບແລະຄວາມຖືກຕ້ອງປອງດອງຊາດ. ເສກສັນປັ້ນແຕ່ງເລື່ອງລາວທີ່ເອີ້ນວ່າ "ປະນາມໂທດຄອມມູຍນິດ". "ດັບ ສູນຄອມມູຍນິດ", ອອກແຮງປາບປາມ, ຈັບກຸມຄຸມຂັງ, ຂ້າຟັນລັນແທງບັນດາຄົນຕໍ່ຕ້ານເກືອຢ່າງປ່າເຖື່ອນ, ຈັດຕັ້ງລະບອບຂຸນເສິກຂຶ້ນຢູ່ ລາວ ສະພາບການບ້ານເມືອງທີ່ສັບສົນເຫລົ່ານັ້ນໄດ້ສ່ອງແສງເຂົ້າໃນ ບັນດາບົດເລື່ອງຄື: "ແມ່ເຖົ້າມີ; ນາງຈີ, ໃບບັດເລກທີ 15 ເງິນບໍ່ ຮ້ອຍໝື່ນ ແລະອື່ນໆ..." ໃນສະໜາມຮົບໃໝ່ (ຕໍ່ສູ້ດ້ານການເມືອງ) ນີ້ ພວກເຮົາບໍ່ໄດ້ຍິນສຽງປືນໃຫຍ່ກ້ອງດັງສະເທືອນ, ບໍ່ເຫັນຂຸມ ຄອງເລິກ ແລະກຳບັງອັນສູງ, ບໍ່ໄດ້ມີປິດຄ້າຍແລະ ບໍ່ແມ່ນເຫັນເຮືອ ບິນອາຍພື້ນອາເມລິກາ; ຍິງທຳຮ້າຍຫລືວ່າພວກເຮົາກໍ່ບໍ່ເຫັນບັ້ນສູ້ ຮົບອັນດຸເດືອດຂອງບັນດານັກຮົບປະເທດລາວ, ແຕ່ການສູ້ຮົບໃໝ່ນີ້ ບໍ່ແມ່ນວ່າຈະດຸເດືອດ, ພິລະອາດຫານ ແລະ ມັນຍັງຈະຕ້ອງໃຊ້ຄວາມສະຫລາດຫລັກແຫລມຕື່ມອີກ. ໃນການເລືອກຕັ້ງຜູ້ແທນລາສະ ດອນເພີ້ມເຕີມ, ຢູ່ບ້ານໜຶ່ງ (ພາກໃຕ້ລາວ), ໃນເວລາການຂັດແຍ້ງຮ້າຍແຮງລະຫວ່າງສອງສະໜາມຮົບ; ເຮົາກັບສັດຕູເກີດຂຶ້ນ; ພວກສັດ ຕູກຳລັງ ນາບຂູ່ປະຊາຊົນ ຢ່າງຮ້າຍແຮງ, ບັງຄັບໃຫ້ປະຊາຊົນ ຈະຕ້ອງປ່ອນບັດໃຫ້ຜູ້ແທນຂອງພວກມັນ. ເອື້ອຍຄຳຫອງ (ເລື່ອງໃບ ບົດເລກທີ 15), ໄດ້ນຳພາບັນດາສະຫາຍຂອງຕົນ "ພວກເຮົາຈະຕ້ອງຊະນະ, ການປະຕິວັດແມ່ນຂອງພວກເຮົາຈົ່ງກ້າຫານພວກສະຫາຍ ເອີຍກ້າຫານກ່ວານີ້ອີກ, ຈະຕ້ອງດູດດຶງເອົາປະຊາຊົນໄປນຳພວກ ເຮົາ

ຕ້ອງເປັນຕົວຢ່າງ..."ເອື້ອຍທອງຄຳເວົ້າແລ້ວກໍ່ປະຕິບັດໂລດ: " ເອື້ອຍທອງຄຳແຍກໝູ່ມະຫາຊົນອອກ, ເອື້ອຍຍ່າງມາຫາໂຕະ ປ່ອນບັດ, ຈັບເອົາບັດໃບໜຶ່ງ, ຈົກເອົາເລກທີ15 ແລ້ວ, ສ່ວນຍັງ ເຫລືອເອື້ອຍຖີ້ມລົງໃສ່ກະຕ່າຂີ້ເຫຍື້ອ, ພວກສັດຕູຫວາດຫວັ່ນ, ສັ່ນສະເທືອນພວກມັນຈົກປິນມາຈ້ຳໃສ່ໜ້າເອິກຂອງເອື້ອຍທອງຄຳແລ້ວຖາມວ່າ:

-ມຶງປ່ອນບັດໃຫ້ໃຜ?

-ໃຫ້ທ່ານສິຊະນະ ເລກທີ 15(ຜູ້ແທນຂອງຝ່າຍແນວລາວ ຮັກຊາດ), ເອື້ອຍທອງຄຳ ຕອບຄືນພວກມັນແລ້ວຄ່ອຍຍ່າງຍ່າງສະຫງ່າຜ່າເຜີຍມາຫາຫີບປ່ອນບັດ ທີ່ຕິດຮູບຂອງທ່ານສິຊະນະ ແລະປ່ອນໃບບັດເລກທີ 15 ລົງໃສ່ຫີບໜ່ວຍນັ້ນ... (ຄັດຈາກເລື່ອງ: ໃບ ບັດເລກທີ 15; ໜ້າ 60). ການປ່ອນບັດທັນໃດ ໄດ້ກາຍເປັນການສະແດງກຳລັງອັນມະຫາສານຂອງມະຫາຊົນ ແລະ ຜົນສຸດທ້າຍໄດ້ເຮັດໃຫ້ພວກສັດຕູຈຳຕ້ອງຍອມກຳລັງແຮງຂອງມະຫາຊົນນັ້ນໄດ້ລະ ເບີດຂຶ້ນຢູ່ຫລາຍແຫ່ງ, ໃນນັ້ນມີເລື່ອງ: ເງິນບໍ່ຮ້ອຍໝັ້ນ"ຫລື ເລື່ອງ ແມ່ເຖົ້າມີ". ແມ່ເຖົ້າມີເຂົ້າຮ່ວມການປະຕິວັດແຕ່ສະໄໝຕໍ່ຕ້ານແມ່ ໄດ້ອອກໄປສູ້ຮົບກັບພວກລູກຫລານ, (ໝາຍເຖິງບັນດານັກຮົບປະ ເທດລາວ) ເມື່ອສັນຕິພາບ ໄດ້ກັບຕ່າວຄືນມາ, ແມ່ກັບຄືນເມືອຫາບ້ານຊ່ອງຢູ່ນຳພີ່ນ້ອງຊາວບ້ານ. ໃນເມື່ອການປະຕິວັດຫັນທິດ, ຊຳເໜືອໄດ້ຮັບການປົດປ່ອຍ, ພວກເຮົາພົບເຫັນແມ່ເຖົ້າມີສັກໄມ້ຄ້ອນເທົ້າໄປ ຊອກຫາບັນດາລູກຫລານຂອງຕົນ, ເພື່ອໄປຕີສັດຕູ.

ການຕໍ່ສູ້ຕ້ານຈັກກະພັດອາເມລິກາຂອງປະຊາຊົນລາວເຮົານັບ ມື້ນັບກ້າວເຂົ້າສູ່ຂັ້ນດຸເດືອດ. ພວກຈັກກະພັດອາເມລິກາອ້າງວ່າ ພວກ

ມັນຮັ່ງມີດ້ານວັດຖຸສິ່ງຂອງ, ແຕ່ພວກມັນບໍ່ສາມາດທັບມ້າງໄດ້ເຈດຈຳນົງແລະນ້ຳໃຈເດັດດ່ຽວຕໍ່ສູ້, ກູ້ຊາດ, ຕ້ານການຮຸກຮານຂອງຈັກ ກະພັດອາເມລິກາຂອງບັນດາກຳລັງຮັກຊາດ ແລະ ປະຊາຊົນລາວ ໄດ້ຜ່ານຊາວກ່ວາປີແຫ່ງການຕໍ່ສູ້ ປະຕິວັດ; ໄດ້ຝຶກຝົນຫລໍ່ຫລອມໃນແປວໄຟສົງຄາມກູ້ຊາດ, ກອງທັບແລະປະຊາຊົນລາວທັງຊາດນັບມື້ນັບເຕີບໃຫຍ່ແລະເຂັ້ມແຂງ- ໃນປະຈຸບັນ ຢູ່ທຸກແຫ່ງຫົນຂອງປະເທດ ຊາດພວກເຮົາສາມາດພົບພໍ້ນັກຮົບທີ່ດີເດັ່ນຄືດັ່ງ: ສະຫາຍສີທອງ, ທ້າວຕູ່ງພວກແມ່ຄື: ແມ່ເຖົ້ານີ, ແມ່ເຖົ້າຊອງ; ພວກເອື້ອຍຄື: ເອື້ອຍທອງ ຄຳນາງຈີ ແລະ ອື່ນໆ...ບັນດາກົມກອງທີ່ດີເດັ່ນ, ເກັ່ງກ້າຄື: ກອງພັນທີສອງພິລະອາດຫານ ຫລືບັນດານັກຮົບທີ່ສູ້ຮົບ ຢູ່ເທິງພູກູດ ຈອມເຫລັກ, ແຕ່ລະມື້ ຈຳຕ້ອງ ທົນກັບລະເບີດ ແລະ ລູກປືນຂອງຈັກກະພັດອາເມລິກາຫລາຍຮ້ອຍພັນໂຕນ; ຈົນກະທັ້ງບັນດາເພື່ອນມິດ ໃນໂລກ ໄດ້ໃສ່ຊື່ວ່າ "ພູການຫລວງຂອງລາວ" ບັນດານັກຮົບເຫລົ່າ ນັ້ນໄດ້ໃຊ້ອາວຸດ ທີ່ຫລ້າສະໄໝ, ແຕ່ເຂົາສາມາດຍິງເຮືອບິນອາຍ ພົ່ນທີ່ທັນສະໄໝທີ່ໜຶ່ງໃນໂລກຂອງຈັກກະພັດອາເມລິກາຕົກແລະໃນມໍ່ງນີ້, ເຂົາຍັງໄດ້ສ້າງກິດຈະການອັນເລີດລ້ຳໃນການສູ້ຮົບຢູ່ທົ່ງໄຫ ຫີນຊຽງຂວາງ. ປັດກວາດທະຫານສັດຕູ ຫລາຍໝື່ນຄົນ ອອກຈາກ ຂົງເຂດນີ້, ທັບມ້າງ ອັນທີ່ເອີ້ນວ່າ: "ບັ້ນຮົບກູ້ກຽດ" ຂອງຈັກກະພັດ ອາເມລິກາ ແລະ ວ່າງປາວ.

ຜ່ານຊາວກ່ວາປີຕໍ່ສູ້ປະຕິວັດ; ຈຸດໜັກແມ່ນໄຊຊະນະຢ່າງສະຫງ່າຜ່າເຜີຍໃນສິບຫົກ, ສິບເຈັດປີຕ້ານຈັກກະພັດອາເມລິກາ; ມັນໄດ້ ສົມລະສຸດໃຫ້ເຫັນວ່າ; ປະຊາຊົນລາວມີຄວາມສາມາດຢ່າງພຽງພໍ ເພື່ອ

ຕີໃຫ້ສົງຄາມອະທຳຂອງຈັກກະພັດອາເມລິກາຖືກປະລາໄຊໃນທຸກ ໆ ຄັ້ງ." ໃນສະພາບປະຈຸບັນຂອງໂລກ, ຊົນຊາດໜຶ່ງເຖິງວ່າຈະ ອ່ອນນ້ອຍ; ແຕ່ຖ້າວ່າໄດ້ລຸກຂຶ້ນຕໍ່ສູ້ ແລະ ໄດ້ມີການນຳແນວທາງ ການເມືອງອັນຖືກຕ້ອງ. ສາມັກຄີ, ເດັດດ່ຽວຕໍ່ສູ້ເພື່ອເອກະລາດ ແລະ ສັນຕິພາບຂອງຊາດ; ພັດນິກຳລັງ ອັນໃຫຍ່ຫລວງຂອງປະຊາຊົນຜູ້ ຮັກຫອມສັນຕິພາບ (ຈຸດໜັກແມ່ນຄ້າຍສັງຄົມນິຍົມ) ສະໜັບສະໜູນຊາດນັ້ນແມ່ນມີຄວາມສາມາດຢ່າງພຽງພໍ ເພື່ອຕີເອົາຊະນະ ທຸກຮູບການແຊກແຊງ ແລະ ຮຸກຮານຂອງຈັກກະພັດ. ຄວາມສັດຈະທຳ ທີ່ ຍິ່ງໃຫຍ່ໃນສະໄໝປະຈຸບັນນີ້, ມັນບໍ່ພຽງແຕ່ຖືກຕ້ອງ ແລະ ສອດ ຄ່ອງກັບບັນດາປະເທດຢູ່ທະວີບອາຊີ, ອາຟະລິກາແລະອາເມລິກາລາ ຕິນທີ່ກຳລັງລຸກຂຶ້ນຕໍ່ສູ້ເທົ່ານັ້ນ; ມັນຍັງຖືກຕ້ອງ ແລະສອດຄ່ອງກັບ ການປະຕິວັດລາວເຮົາ.

ອາດເວົ້າໄດ້ວ່າຕົວຈິງອັນອຸດົມສົມບູນຂອງການຕໍ່ສູ້ຕ້ານຈັກກະພັດອາເມລິກາຈິດໃຈເດັດດ່ຽວເອົາຊະນະສັດຕູຂອງກອງທັບແລະປະຊາຊົນລາວເຮົາໄດ້ສ່ອງແສງເຂົ້າໃນວັນນະຄະດີປະຕິວັດລາວເຮົາ ໄດ້ຄົບຖ້ວນພໍສົມຄວນເຮັດໃຫ້ວັນນະຄະດີປະຕິວັດມີລັກສະນະຂອງ ສະໄໝປະຈຸບັນແຕ່ເຖິງວ່າຫົວເລື່ອງຂອງບັນດາບົດເລື່ອງທີ່ເວົ້າ ເຖິງການຕໍ່ສູ້ຈະຫລາຍປານໃດກໍ່ຕາມໃນເວທີວັນນະຄະດີປະຕິວັດ ພວກເຮົາເຫັນວ່າມັນຍັງຂາດບົດເລື່ອງບົດນິພົນທີ່ຍິ່ງໃຫຍ່ບົດນິພົນຍິ່ງໃຫຍ່ນັ້ນບໍ່ໝາຍຄວາມວ່າຈະເວົ້າເຖິງບົດນິພົນທີ່ໜາຕັ້ງຫລາຍຮ້ອຍ ໜ້າບົດນິພົນໃຫຍ່ທີ່ພວກເຮົາເວົ້ານັ້ນແມ່ນຈະຕ້ອງມີເນື້ອໃນອັນເລິກເຊິ່ງສັງເຂບໄດ້ຢ່າງກວ້າງຂວາງ ແລະມີລັກສະນະສິລະປະການແຕ່ງສູງ

# ຫົວເລື່ອງທີ່ເວົ້າເຖິງບັນດາຊົນຊາດ

ໃນເລ້ກົນແຊກແຊງແລະຮຸກຮານປະເທດລາວເຮົາ. ເພື່ອຫວັງຍຶດເອົາປະເທດຊາດອັນແສນຮັກ ຂອງພວກເຮົາໃຫ້ກາຍເປັນຫົວເມືອງຂຶ້ນແບບໃຫມ່, ຈັກກະພັດອາເມລິກາ, ດ້ານໜຶ່ງພວກມັນໄດ້ອອກແຮງຊຸກຍູ້ສົງຄາມຮຸກຮານເຂົ້າລາວ; ໃຊ້ຄົນລາວຂ້າຄົນລາວ, ອີກ ດ້ານໜຶ່ງ, ພວກມັນສວຍໂອກາດອີງໃສ່ລັກສະນະສັບສົນຂອງບັນດາ ຊົນຊາດຢູ່ລາວເພື່ອປະຕິບັດກົນອຸບາຍອັນເກົ່າແກ່"ແບ່ງແຍກເພື່ອ ປົກຄອງ". ພວກຈັກກະພັດຂຸ້ນຂ້ຽວແບ່ງແຍກບັນດາຊົນຊາດ ຢູ່ປະ ເທດລາວເຮົາ; ກໍ່ຄວາມອາຄາດບາດໝາງພາຍໃນບັນດາຊົນຊາດ. ພິເສດແມ່ນໃນໄລຍະນັ້ນຢູ່ພາກເໜືອລາວພວກມັນໄດ້ໃຊ້ອັນທີ່ ເອີ້ນວ່າ: "ຄົນແມ້ວປົກຄອງແມ້ວ" ແລະ"ເຈົ້າຊີວິດແມ້ວ" ແລະຢູ່ພາກ ໃຕ້ພວກມັນໄດ້ປັ້ນຂຶ້ນອັນທີ່ເອີ້ນວ່າ"ເຈົ້າຊີວິດຊົນຊາດຂ້າ"; ດ້ວຍ ເລ່ກົນດັ່ງກ່າວພວກມັນໄດ້ປັ່ນປ່ວນ, ສ້າງແນວຄິດຊົນຊາດຄັບແຄບ ແລະໃຊ້ພວກຕີນມືຊັ້ນຈຳເພື່ອຈັດຕັ້ງ"ກຳລັງພິເສດ"ຄືພວກກອງປາບກອງປຸ້ນ, ມັກກີຈຳພວກ"ກຳລັງພິເສດ"ນັ້ນແມ່ນຢູ່ໃຕ້ການບັນຊາໂດຍ ກົງຂອງຈັກກະພັດອາເມລິກາ ໄດ້ໃຊ້ກຳລັງພິເສດນັ້ນເພື່ອດຳເນີນ" ສົງຄາມພິເສດ"ຂອງພວກມັນ, ຄຽງຄູ່ກັນນັ້ນພວກມັນຍັງໄດ້ຈັດຕັ້ງ" ບ້ານສາມັກຄີ""ເຂດລົບໄພ". "ບ້ານຍຸດທະສາດ", ເຊິ່ງເປັນຄຸກ ຄຸມຂັງ

ປອມແປງ ຂອງພວກມັນ, ນອກນັ້ນ, ພວກມັນຍັງສວຍໃຊ້ອິດທິພົນຂອງພວກເຈົ້າກົກເຈົ້າເຫລົ່າ, ເຈົ້າໂຄດ, ເພື່ອຂົ່ມຂູ່ຂູດຣີດປະຊາຊົນ ບັນດາຊົນຊາດ, ຄຽງຄູ່ກັນນັ້ນ, ພວກຈັກກະພັດອາເມລິກາຍັງໄດ້ໃຊ້ ເລ່ລ່ຽມທາງດ້ານການເມືອງ ແລະຊື້ຈ້າງດ້ວຍວັດຖຸເງິນຄຳ, ສິ່ງ ຂອງເບື່ອສະໝອງດ້ວຍແບບແຜນດຳລົງຊີວິດອັນເປື່ອຍເນົ່າ, ແບບ ໂລກເສລີ". ໝູນໃຊ້ສາດສະໜາຜີສາງມານຮ້າຍຫລືຮີດຄອງປະເພ ນີຂອງບັນດາຊົນຊາດຕື່ມອີກຕໍ່ກັບເລ່ກົນອັນເລິກແລບ, ສໍ້ກົງຂອງ ພວກຈັກກະພັດອາເມລິກາ, ໃນເບື້ອງຕົ້ນປະຊາຊົນບັນດາຊົນຊາດຈຳນວນໜຶ່ງ ໄດ້ຫລົງເຊື່ອແລະຖືກເລ່ກົນຂອງພວກມັນ; ຈຸດໜັກແມ່ນພີ່ ນ້ອງຊົນຊາດລາວສູງໃນເລື່ອງ "ຝິນປ່າ", ນັກຂຽນໄດ້ເລົ່າສູ່ພວກເຮົາຟັງເລື່ອງໃນຄອບຄົວໜຶ່ງຂອງພີ່ນ້ອງລາວສູງທີ່ເປັນໜ້າສົງສານ, ເຈົ້າເຮືອນຂອງຄອບຄົວນັ້ນ ໄດ້ຖືກຫລົງ ໄປເປັນກອງປຸ້ນ, ຮັບຈ້າງໃຫ້ພວກອາເມລິກາ ແລະ ພວກປະຕິການຂາຍຊາດ. ຖ້າເວົ້າໃຫ້ມັນຖືກ ແທ້ເລື່ອງນັ້ນແມ່ນລະຄອນໂສກເລື່ອງໜຶ່ງ ຂອງບຸກຄົນທີ່ຖືກຫລົງທາງໄປນຳພວກຈັກກະພັດອາເມລິກາ ແລະ ກຳປືນກັບຄືນມາຂ້າຟັນ ລົ້ມແທງຍາດພີ່ນ້ອງຂອງຕົນ, ເລື່ອງເກີດຂຶ້ນໃນເດິກດິນຄືນໜຶ່ງ, ລາວວິກຳລັງນອນນຳເມຍຢູ່ເຮືອນ; ທັນໃດລາວວິເລີຍໄດ້ຍິນສຽງປືນຂອງກອງທັບປົດປ່ອຍກຳລັງບຸກໂຈມຕີຄ້າຍຂອງພວກກອງປຸ້ນ. ລາວວິ ຄິດວ່າຈະແລ່ນກັບຄືນເມືອເອົາປືນຢູ່ຄ້າຍແຕ່ບໍ່ທັນ, ເພາະຄ້າຍຂອງພວກມັນຖືກກອງທັບປົດປ່ອຍຢຶດແລ້ວ, ໄຟກຳລັງລຸກ ໄໝ້ແຈ້ງໝົດຂອບຟ້າເມື່ອເຫັນຄືແນວນັ້ນ, ລາວວິເລີຍແກ່ເມຍແລ່ນໜີ, ແຕ່ເມື່ອແລ່ນ ໜີໄປໄດ້ເຄິງທາງ ເມຍຂອງລາວວິເລີຍເຈັບທ້ອງເກີດລູກ, ບໍ່ສາ ມາດ

ຢ່າງ ໄປ ໄດ້ອີກ, ລາວວິຄິດ: ຖ້າປະໃຫ້ເມຍກັບຄືນເມືອບ້ານ, ພັດຢ້ານ ເມຍຈະຕົກຢູ່ໃນກຳມືຂອງກອງທັບປົດປ່ອຍເວົ້າເຖິງກອງທັບປົດປ່ອຍ ຮູບພາບຂອງບຸກຄົນທີ່ "ຮ້າຍກາດໂຫດຫ້ຽມ" ຄືດັ່ງຄວາມໂຄສະນາ ຂອງພວກຈັກກະພັດອາເມລິກາ, ວ່າງປາວພັດປະກົດອອກຢູ່ຕໍ່ ໜ້າ ຂອງລາວວິ, ລາວວິຢ້ານກອງທັບປົດປ່ອຍຈະທຸບຕີທໍລະມານເມຍຍ້ອນ ຮັກແລະທະໜອມເມຍ, ເປັນຫ່ວງໃຍຕໍ່ເມຍຕົ້ນຕໍແມ່ນຖືກຄວາມ ໂຄ ສະນາຂອງພວກຈັກກະພັດອາເມລິກາ ແລະ ວ່າງປາວ; ລາວວິ ຕັດ ສິນໃຈຊອກໃບງ້ວນເບື່ອເມຍຕາຍ. ຈຶ່ງແມ່ນເປັນໜ້າເມດຕາ ສົງ ສານແລະເຈັບແສບທີ່ສຸດຕໍ່ກັບການຫລົງເຊື່ອ, ບໍ່ຮູ້ຈຳແນກຂາວຫລືດຳ ຂອງພວກຄົນທີ່ຫລົງທາງ. ພາຍຫລັງເບື່ອເມຍຕາຍແລ້ວ. ລາວວິຍ່າງ ໄປໃນຄວາມມືດມົວ ແລະ ງຽບສະຫງັດຄືກັນກັບຊີວິດຂອງລາວວິກໍ ລົງຫລົ້ມຈົມລົງໃນຄວາມມືດມົວ.

ລາວວິໄປຊອກຫາພວກປຸ້ນ ແລະ ດຳລົງຊີວິດນຳພວກປຸ້ນຢ່າງ ບໍ່ ມີອຸດົມຄະຕິ, ບໍ່ມີຄວາມໝາຍ, ບໍ່ມີຈຸດປະສົງ ຫຍັງໝົດ, ວັນເວ ລາ ໄດ້ຜ່ານພົ້ນໄປ, ແຕ່ເຫດການທີ່ເມຍຖືກເບື່ອຕາຍຍັງປົ່ນປ່ວນ ແລະ ເຮັດໃຫ້ຈິດໃຈລາວວິເຈັບປວດແລະຖືກທໍລະມານແຮງ, ຕໍ່ມາລາວ ວິ ຈຶ່ງຄ່ອຍເຫັນແຈ້ງວ່າ, ແມ່ນກຳມືຂອງຕົນເອງ ທີ່ໄດ້ຂ້າຟັນລົ້ມ ແທງ ຍາດຕິພີ່ນ້ອງປະຊາຊົນ, ຊົນຊາດລາວສູງ; ແມ່ນກຳມືຂອງຕົນນັ້ນເອງ ທີ່ໄດ້ຂ້າເມຍແລະລູກນ້ອຍຕາຍ. ລາວວິເຈັບແສບແລະຄຽດແຄ້ນຕໍ່ ຊີ ວິດການເປັນຢູ່ທີ່ຕົນກຳລັງດຳລົງ; ແຕ່ລາວວິບໍ່ຫານອອກມາຢູ່ນຳ ພີ່ ນ້ອງຊາວບ້ານ. ລາວວິໝົດຫວັງບໍ່ຮູ້ເສັ້ນທາງຈະເດີນຕໍ່ໄປອີກ, ມີແຕ່ ຫລັບຕາໄປນຳພວກປຸ້ນ, ຈັບປືນສືບຕໍ່ຂ້າຟັນລົ້ມແທງພໍ່ແມ່ປະຊາຊົນ, ມ້

ໜຶ່ງລາວວິ ໄດ້ຍິນພວກໝູ່ກອງປຸ້ນນຳກັນເວົ້າໃຫ້ຮູ້ວ່າ: ເຮືອນ ຊານບ້ານຊ່ອງຂອງລາວວິບໍ່ຖືກຈູດເຜົາ, ເມຍຂອງລາວກໍ່ບໍ່ຖືກຕາຍ ແລະເກີດລູກຊາຍຄົນໜຶ່ງອີກ, ຂ່າວອັນນີ້ໄດ້ເຮັດໃຫ້ລາວວິຕື່ນສະດຸ້ງ ໃຈລາວວິຕົກສະເງີ້, ລາວວິຊື່ນໃຈຈົນວ່າປາກບໍ່ອອກແລະຢືນຕາກຝົນ ດືກັນກັບຄືນເສຍຂວັນ. ໃນຄ່ຳຄືນນັ້ນ, ລາວວິ ໄດ້ພາຍປີນລອດພູລອດປ່າກັບຄືນມາຢາມເມຍແລະລູກ. ແຕ່ລາວວິບໍ່ຫານເຂົ້າເຮືອນລາວວິ ນຶ່ງຮຳຝົນຢູ່ນອກສວນຄ່ອຍຈອບເບິ່ງ ແລະ ຟັງສຽງເໜັງຕິງຂອງເມຍແລະລູກ, ຈົນເຖິງຂ້ອນແຈ້ງ, ລາວວິກໍ່ຍັງບໍ່ຫານເຂົ້າເຮືອນ, ສຸດທ້າຍຍ້ອນສຽງຮ້ອງຂອງລູກນ້ອຍສົ່ງອອກມາແຕ່ໃນເຮືອນຄືດັ່ງມີກຳລັງອັນແຮງກ້າມາດູດດຶງເອົາລາວວິ, ລາວວິບໍ່ສາມາດອົດກັ້ນໄວ້ ໄດ້ອີກລາວວິເຕະປະຕູແລ່ນເຂົ້າໃນເຮືອນກອດເອົາເມຍແລະລູກນ້ອຍ, ຫລັງຈາກທີ່ໄດ້ຍິນເມຍເລົ່າສະພາບການໃນໄລຍະຜ່ານມາໃຫ້ຟັງ, ລາວວິໄດ້ເຫັນແຈ້ງຕໍ່ເສັ້ນທາງທີ່ຜິດພາດຂອງຕົນ ແລະເຂົ້າໃຈໄດ້ດີຕໍ່ກັບທາດແທ້ອັນດີງາມຂອງກອງທັບປົດປ່ອຍ. ສຸດທ້າຍລາວວິ ໄດ້ຕັດສິນໃຈປະປ່ອຍເສັ້ນທາງເກົ່າ; ກັບຄືນມາຫາຄອບຄົວ, ຄືນມາຢູ່ນຳພໍ່ແມ່ ປະຊາຊົນໃນ ບ້ານ. ໃນເມື່ອແຕ່ງເລື່ອງນີ້, ນັກຂຽນໄດ້ພະຍາຍາມ ພັນລະນາເຂົ້າເລິກທາງດ້ານຈິດໃຈຂອງຕົວລະຄອນ, ການຫັນປ່ຽນຂອງດ້ານຈິດໃຈແລະ ໄປເຖິງການກະທຳຂອງລາວວິແມ່ນຖືກຕ້ອງຕາມກົດເກນເຄື່ອນໄຫວຕັກຄະສາດພາຍໃນຕົວລະຄອນ, ລັກສະນະຊົນ ຊາດຢູ່ໃນລາວວິແມ່ນແຈ້ງພໍຄວນ, ນັ້ນຄືລັກສະນະຂອງຊົນຊາດລາວສູງຊຶ່ງເປັນຊົນຊາດໜຶ່ງທີ່ມີຄວາມສັດຊື່ບໍລິສຸດ, ເດັດດ່ຽວ, ບໍ່ຄົດລ້ຽວ ແລະມີສະຕິຕໍ່ຄວາມຮັກ ແລະ ຄວາມຊັງ ຢ່າງຈະແຈ້ງ, ຖ້າໄດ້ຮັກກໍ່ ຮັກ

ຢ່າງຈິງໃຈ ແລະ ຖ້າຄຽດຊັງກໍ່ຊັງຈົນເບິ່ງບໍ່ໄດ້. ຍ້ອນລັກສະ ນະ ທາດແທ້ຂອງຊົນຊາດ; ດັ່ງນັ້ນ, ເມື່ອຖືກຫລົງເຊື່ອຄວາມໂຄສະ ນາ ຂອງຈັກກະພັດອາເມລິກາ-ວ່າງປາວ, ລາວວິ ເດັດດ່ຽວ ໄປນຳ ສັດ ຕູແລະເຮັດທຸກສິ່ງ ທຸກຢ່າງ ຈົນກະທັ້ງເຖິງຂ້າລູກຂ້າເມຍ ເພື່ອ ຄ້ວາມເປັນທຳ" ແບບອາເມລິກາ. ແຕ່ກົງກັນຂ້າມ, ໃນເມື່ອພວກເຂົາ ຕື່ນຕົວ ເຫັນແຈ້ງຕໍ່ຄວາມຜິດຂອງຕົນ ແລະຊອກເຫັນເສັ້ນທາງທີ່ຖືກ ຕ້ອງ, ເຂົາໄດ້ຕັດສິນໃຈເດັດດ່ຽວ ໄປນຳການປະຕິວັດຈົນສຸດກົກ ສຸດ ປາຍ.

ບໍ່ແມ່ນພຽງແຕ່ພີ່ນ້ອງລາວສູງເທົ່ານັ້ນທີ່ຖືກຫລົງເຊື່ອຕໍ່ເລ້ກົນຂອງ ຈັກກະພັດອາເມລິກາ, ຕໍ່ກັບພີ່ນ້ອງ ຊົນຊາດລາວເທິງກໍ່ເຊັ່ນດຽວ ; ພວກມັນສວຍໃຊ້ ຄວາມບໍ່ຖືກຕ້ອງປອງດອງກັນ ໃນບັນດາຊົນ ເຜົ່າ ຊົນຊາດ ລາວເທິງ, ເພື່ອແບ່ງແຍກ. ກໍ່ຄວາມອາຄາດບາດໝາງຊຶ່ງ ກັນແລະກັນ, ສຸດທ້າຍຈົນໄປເຖິງຍ່ອນຂ້າຟັນລັນແທງກັນ. ແຕ່ທຸກ ເລ່ ກົນອັນໂຫດຮ້າຍຫວັງແບ່ງແຍກບັນດາຊົນຊາດ, ຊົນເຜົ່າຢູ່ລາວ ຂອງ ຈັກກະພັດອາເມລິກາລ້ວນແລ້ວແຕ່ຖືກປາລາໄຊລົງຢ່າງອັບອາຍຂາຍ ໜ້າ. ບັນດາຊົນຊາດ. ຊົນເຜົ່າລາວເວົ້າລວມ; ສະເພາະແມ່ນ ຊົນ ຊາດລາວສູງ, ລາວເທິງ, ແຕ່ໃດມາເຄີຍມີມູນເຊື້ອຕໍ່ສູ້ອັນພິລະ ອາດ ຫານ. ເປັນຕົ້ນຄື: ຂະບວນການຕໍ່ສູ້ຂອງພໍ່ກະດອດ, ອົງແກ້ວ, ອົງ ກົມ ມະດຳ, ເຈົ້າຟ້າປັດໄຈແລະອື່ນໆ... ນັບແຕ່ປີ 1945ມາເຖິງປະ ຈຸ ບັນ, ຊົນຊາດລາວສູງ, ລາວເທິງແລະບັນດາຊົນເຜົ່າຕ່າງໆຍັງໄດ້ປະ ກອບສ່ວນອັນໃຫຍ່ຫລວງເຂົ້າໃນພາລະກິດກູ້ຊາດແລະໄດ້ເກີດມີ ບັນ ດານັກວິລະຊົນແຫ່ງຊາດຄື: ທ່ານຕູ້, ຜູ້ບັງຄັບບັນຊາທະຫານທີ ເກັ່ງ

ກ້າ. ເຄີຍໄດ້ບັນຊາກອງພັນທີສອງຂອງປະເທດລາວທັບມ້າງວົງປິດລ້ອມຂອງສັດຕູຢູ່ທົ່ງໄຫຫີນ ຫລືນັກຮົບແຂ່ງຂັນທ້າວເນົາແລະບັນດານັກວິລະຊົນ, ນັກຮົບແຂ່ງຂັນບັນດາຊາວໜຸ່ມຊົນຊາດ, ຊົນເຜົ່າທີ່ກຳລັງເດີນຕາມສຽງເພງຂອງກອງທັບປົດປ່ອຍປະຊາຊົນລາວອອກໄປສູ່ສະໜາມຮົບແນວໜ້າ. ພິເສດແມ່ນກອງພັນ705ແລະກອງພັນ "ປົດໄຈ" ຫລຊ. ເຄີຍໄດ້ສ້າງພົນງານອັນສະຫງ່າຜ່າເຜີຍໃນການສູ້ຮົບ ແລະ ໄດ້ເຄີຍເຮັດໃຫ້ສັດຕູພຽງແຕ່ໄດ້ຍິນຊື່ກໍ່ເສຍຂວັນແລ້ວ.

ການປະຕິວັດໄດ້ກູ້ເອົາຊີວິດອັນທຸກຈົນຂອງບັນດາຊົນຊາດແລະໄດ້ນຳເອົາຄວາມສຸກສຳລານມາສູ່ເຂົາເຈົ້າໃນເລື່ອງ "ຄວນບອກ ໃຫ້ນາງຮູ້" ຫລືເລື່ອງ "ດອກໄມ້ປ່າ" ນັກຂຽນທັງສອງໄດ້ເວົ້າເຖິງບຸນຄຸນຂອງການປະຕິວັດທີ່ມີຕໍ່ເດັກຍິງລາວສູງສອງຄົນ. ເຂົາເປັນເດັກກຳພ້າ, ຊີວິດຂອງເຂົາບໍ່ຕ່າງຫຍັງກັບແປວໄຟນ້ອຍທີ່ຖືກລົມພັດໃກ້ຈະມອດ. ແຕ່ການປະຕິວັດໄດ້ມາເຖິງ, ການປະຕິວັດໄດ້ກູ້ເອົາຊີວິດຂອງເຈົ້າແລະສຸດທ້າຍເດັກຍິງທັງສອງໄດ້ກາຍເປັນພະນັກງານທີ່ດີຂອງຊາດໃນເລື່ອງ "ບົນເສັ້ນທາງປົດປ່ອຍ" ຜ່ານການເລົ່າເລື່ອງຂອງສະຫາຍທອງພັນນັກຂຽນຢາກເວົ້າເຖິງບຸນຄຸນຂອງການປະຕິວັດທີ່ມີຕໍ່ຊົນຊາດລາວເທິງ. ການປະຕິວັດໄດ້ເປີດຊ່ອງທາງອັນແຈ້ງສະຫວ່າງໃຫ້ແກ່ຊົນຊາດລາວເທິງເວົ້າສະເພາະ ແລະ ໃຫ້ແກ່ບັນດາຊົນຊາດ ຢູ່ລາວເວົ້າລວມກ້າວຂຶ້ນສູ່ເສັ້ນທາງສີວິໄລແລະກ້າວໜ້າ. ໃນປະຈຸບັນບໍ່ວ່າຊົນຊາດໃດທີ່ຢູ່ເຂດປົດປ່ອຍຂອງແນວລາວຮັກຊາດລ້ວນແລ້ວ ມີສິດສເລີພາບປະຊາທິປະໄຕເທົ່າທຽມກັນ ແລະ ກຳລັງໄດ້ດຳເນີນຊີວິດແບບໃໝ່ໃນສັງຄົມໃໝ່. ໃນເລື່ອງ "ຊີວິດໃໝ່" ສະຫາຍຄຳພາຍ

ພິລາວົງ ໄດ້ສະເໜີໃຫ້ພວກເຮົາ ເຫັນການປ່ຽນແປງໃໝ່ຂອງ ຊົນຊາດລາວສູງ. ໃນເລື່ອງນັກຂຽນຍັງ ໄດ້ເວົ້າເຖິງຄວາມສາມັກຄີຊ່ວຍເຫຼືອຊຶ່ງກັນ ແລະ ກັນລະຫວ່າງຊົນຊາດລາວລຸ່ມກັບຊົນຊາດ ລາວສູງອີກ. ບັນດາຊົນຊາດ ທີ່ຢູ່ເຂດປົດປ່ອຍຂອງແນວລາວຮັກຊາດ ໄດ້ຊ່ວຍເຫຼືອຊຶ່ງກັນແລະກັນ. ສາມັກຄີຄຽງບ່າຄຽງ ໄຫລ່ກັນສູ້ຮົບ ແລະເພີ່ມພູນພະລຶດພົນຄືດັ່ງອ້າຍນ້ອງໃນຄອບຄົວອັນມະຫາສານ. ຖົມແຖວພະນັກງານວິທະຍາສາດ, ບັນດານາງແພດຊັ້ນກາງ, ຊັ້ນສູງ, ນັກວິຊາວະກອນຂອງຫລາຍພະແນກການບັນດາຄູສອນມັດທະຍົມ, ອຸດົມ, ວິທະຍາໄລ, ນັກຂຽນ, ນັກສິລະປິນທີ່ເປັນຄົນ ຊົນຊາດລາວສູງ, ລາວເທິງກໍ່ນັບມື້ນັບຫລາຍ, ມັນຄື ດັ່ງນ້ຳຫ້ວຍຫລາຍລຳພ້ອມພາກັນໄຫລ ເຂົ້າສູ່ແມ່ນ້ຳຂອງ, ເຂົາໄດ້ພ້ອມພາກັນສູ້ຮົບ, ປົກປັກຮັກສາແລະສ້າງ ສາເຂດປົດປ່ອຍໃຫ້ນັບມື້ນັບປ່ຽນແປງ, ນັບມື້ນັບເຂັ້ມແຂງ ແລະ ຈະເລີນກ້າວໜ້າ. ຄືດັ່ງສະເດັດປະທານເຈົ້າສຸພານຸວົງ, ຜູ້ນຳອັນແສນ ຮັກຂອງປະຊາຊົນລາວເຮົາເຄີຍໄດ້ເວົ້າວ່າ: "ປະເທດລາວຂອງ ພວກເຮົາມີຫລາຍຊົນຊາດ, ແຕ່ຖ້າຮູ້ສາມັກຄີກັນເຂົ້າຈະງາມເໝືອນ ດັ່ງດອກໄມ້ຫລາຍສີເກີດຢູ່ໃນຕົ້ນດຽວ..." ຮູບພາບຂອງທ່ານສີທົນ ກົມມະດຳ (ຕາງໜ້າໃຫ້ຊົນຊາດລາວເທິງ); ທ່ານໄຟດ່າງ (ຕາງ ໜ້າໃຫ້ຊົນຊາດລາວສູງ) ຢືນຄຽງຂ້າງກັບຮູບພາບຂອງສະເດັດປະ ທານເຈົ້າສຸພານຸວົງ, ທ່ານໄກສອນ ພົມວິຫານ (ຕາງໜ້າໃຫ້ແກ່ຊົນ ຊາດລາວລຸ່ມ) ໄດ້ກາຍເປັນພາບດອກໄມ້ທີ່ງົດງາມ, ສົດໃສແລະຫອມກວ່າໝູ່ໃນສວນອຸດທິຍານຂອງຊາດທີ່ກຳລັງບານ.

# ຊີວິດໃຫມ່ແລະຄົນແບບໃຫມ່ຢູ່ເຂດປົດປ່ອຍ

ເພື່ອປະກອບສ່ວນດັດແປງສັງຄົມໃຫ້ນັບມື້ນັບກ້າວຫນ້າ, ບົດ ບາດແລະຫນ້າທີ່ຂອງວັນນະຄະດີປະຕິວັດຂອງພວກເຮົາໃນປະຈຸບັນ ແມ່ນຕ້ອງສ່ອງແສງຊີວິດໃຫມ່, ກໍ່ສ້າງຄົນແບບໃຫມ່, ຄົນປະຕິວັດຢ່າງ ແທ້ຈິງ.

ນອກຈາກຫົວເລື່ອງທີ່ພວກເຮົາໄດ້ຍົກຂຶ້ນຢູ່ເບື້ອງເທິງນັ້ນແລ້ວ, ບັນດາ "ນັກວິຊາວະກອນທາງດ້ານແຫ່ງຈິດ" ຍັງໄດ້ທ້ອນໂຮມແຕ່ລະ ຮູບພາບທີ່ເດັ່ນ, ດີງາມຂອງຊາດຂອງປະຊາຊົນລາວເຮົາໃນສະໄຫມປະຈຸບັນ, ສັງຄົມໃຫມ່ ແລະຄົນແບບໃຫມ່ທີ່ພວກເຮົາຈະເວົ້າເຖິງນັ້ນແມ່ນຄົນທີ່ມີສະຕິ ແລະເປັນເຈົ້າຂອງຕໍ່ຕົນເອງ, ຕໍ່ສາຕາກໍາຂອງ ຊາດດ້ວຍຫົວແຮງ ແຮງງານຂອງຕົນ, ເຂົາເຮັດວຽກຢ່າງບໍ່ຮູ້ອິດ ຮູ້ເມື່ອຍເພື່ອສ້າງສາສັງຄົມ ໃຫມ່ຊຶ່ງປະຊາຊົນລາວທັງຊາດກໍາລັງ ລໍຖ້າ ແລະປາຖະຫນາ.

ບັນຫາຄົນແບບໃຫມ່ທີ່ກໍາລັງສ້າງສັງຄົມໃຫມ່ແມ່ນບັນຫາໃຈ ກາງຂອງວັນນະຄະດີປະຕິວັດ. ເພື່ອຢາກເຮັດລ້ອນຫນ້າທີ່ຊາດແລະ ການປະຕິວັດມອບຫມາຍໃຫ້, ບັນດານັກຂຽນທັງຫລາຍແມ່ນຈະຕ້ອງ ສ່ອງແສງໃຫ້ໄດ້ຄົນແບບໃຫມ່ແລະສັງຄົມໃຫມ່ຢູ່ເຂດປົດປ່ອຍ, ກໍ່ສ້າງ ຄົນແບບໃຫມ່ ແລະຊີວິດໃຫມ່ບໍ່ຫມາຍຄວາມວ່າ "ແບບຄົນວິເສດ" ຫລືແບບຄົນອຸດົມຄະຕິ" ຄົນແບບໃຫມ່ ທີ່ພວກເຮົາເວົ້າເຖິງນັ້ນແມ່ນບັນດາຄົນທໍາມະດາທີ່ກໍາລັງບີນຕົວຂຶ້ນ ໃນທ່າມກາງກະແສຟອງຂອງ ການ

ປະຕິວັດ. ໃນບົດເລື່ອງ "ນາງມາແມ່ຍິງສາມເກົ້າ" ຂອງສຸນ ໜອນ ໝາກຫົວໃຈຂອງຜູ້ຢູ່ແນວຫລັງ" ຂອງວຽງເຣືອງ; "ຊີວິດໃໝ່" ຂອງ ຄຳພາຍພິລາວົງ; ຕາມສາຍເໝືອງໝະລາງ" ຂອງກ. ສຸກຂະພົນແລະ ອື່ນໆ... ລ້ວນແລ້ວ ໄດ້ເວົ້າເຖິງບັນຫາດຽວແລະປະກອບກັນ ເຂົ້າ ເປັນຮູບພາບອັນສວຍງາມທີ່ມີຫລາຍສິ່ງຫລາຍຮູບຕ່າງກັນ. ແຕ່ລະບົດ ເລື່ອງຂອງເຂົາເຈົ້າ ໄດ້ສ່ອງແສງຄວາມຈິງແຕ່ລະດ້ານຕ່າງກັນແລະ ມີຄວາມໝາຍອັນສຳຄັນຕໍ່ກັບການປະຕິວັດ ບັນດານັກຂຽນ ຂອງ ພວກເຮົາທີ່ມີໂລກະທັດແລະຊີວະທັດກ້າວໜ້າ. ມີບ່ອນຢືນຂອງສັງ ຄົມໃໝ່ແລະມີກຳລັງປະຕິວັດຂອງໝູ່ມະຫາຊົນສະໜັບສະ ໜູນ ພວກເຂົາເຈົ້າກຳລັງກ້າວເຂົ້າສູ່ສັງຄົມໃໝ່, ບໍ່ຄອຍຖ້າຮັບ ເອົາ ເລື່ອງລາຍອັນໃໝ່, ເລື່ອງດີເດັ່ນ, ເພື່ອຍ້ອງຍໍສັນລະເສີນແລະ ຟື້ນ ຟູໃຫ້ນັບມື້ນັບຂະຫຍາຍກ້າວໜ້າ.

ໃນເລື່ອງ" ສຽງເພງເຂດພູດອຍ". ນັກຂຽນໄດ້ເວົ້າເຖິງ ການ ລົບລ້າງຄວາມກືກໜັງສືຢູ່ເຂດພີ່ນ້ອງ ລາວສູງ ແຫ່ງໜຶ່ງ ປົດປ່ອຍ ປະຊາຊົນ ເປັນຕົ້ນແມ່ນພວກນ້ອງເຍົາວະຊົນເຂດພູດອຍຫລຸດ ພົ້ນ ອອກຈາກຄວາມມືດມົວ, ບໍ່ຮູ້ໜັງສື, ອອກຈາກໂສ້ເຫລັກຂອງ ຄວາມ ໂງ່ຈ້າ, ຫລ້າຫລັງ. ຊຶ່ງໃນສັງຄົມເກົ່າເຄິ່ງຫົວເມືອງຂຶ້ນ, ເຄິ່ງສັກ ດີ ນາ ຄາວກ່ອນປະໄວ້. ຢູ່ໃນສັງຄົມເກົ່າ, ຍ້ອນນະໂຍບາຍປະຕິ ການ ຂອງພວກປົກຄອງທີ່ຫວັງເຮັດໃຫ້ປະຊາຊົນໂງ່ຈ້າຫລ້າຫລັງ; ດັ່ງ ນັ້ນ ປະຊາຊົນລາວເຮົາ, ເປັນຕົ້ນແມ່ນພີ່ນ້ອງບັນດາຊົນຊາດສ່ວນ ໜ້ອຍ ເກືອບເກົ້າສິບແປດ ສ່ວນຮ້ອຍ (໙໘%) ແມ່ນກືກໜັງສື. ພາຍຫລັງ ທີ່ ໄດ້ຮັບການປົດປ່ອຍ ສູນກາງແນວລາວຮັກຊາດ ໄດ້ວາງໜ້າທີ່ອັນສຳ

ຄົນຢູ່ເຂດປົດປ່ອຍແມ່ນຕ້ອງລຶບລ້າງຄວາມບໍ່ຮູ້ໜັງສື, ເພື່ອຍົກສູງລະດັບຕົນຕົວແລະຟື້ນຟູຊີວິດການເປັນຢູ່ຂອງປະຊາຊົນ, ຫລືໃນ ເລື່ອງ ນາງມາແມ່ຍິງສາມເກັ່ງ", ດ້ວຍວິທີແຕ່ງເລື່ອງຈາກຄົນແທ້, ນັກ ຂຽນ ໄດ້ເລົ່າສູ່ພວກເຮົາຟັງ ຂະບວນວິວັດຂຶ້ນຕົວຂອງນາງມາ. ນາງ ມາ ເປັນແມ່ເຮືອນທີ່ມີລູກສີ່ຄົນຜົວຂອງນາງມາໄປຮັບໃຊ້ຢູ່ແນວໜ້າ, ຍັງແຕ່ນາງຄົນດຽວຢູ່ເຮືອນເພີ່ມພູນພະລິດພົນເພື່ອລ້ຽງແມ່ແລະລູກສີ່ຄົນ ຜ່ານເສັ້ນທາງແຫ່ງຊີວິດ ອັນລຳບາກຍາກແຄ້ນ ແລະມີການຫັນປ່ຽນ ດ້ານແນວຄິດ, ຈິດໃຈ, ດັ່ງນັ້ນໃນເບື້ອງຕົ້ນນາງມາແບກຫາບ ການເຮັດໄຮ່, ເຮັດນາເພື່ອລ້ຽງຄອບຄົວ, ກ້າວຂຶ້ນຂັ້ນໜຶ່ງນາງປຸກເຮືອນ ເອົາເອງ ແລະເຮັດໄຮ່ອອກເຂົ້າຊ່ວຍຊາດ. ເບິ່ງຕາມວຽກ ງານ ຂອງນາງມາເຮັດໄດ້ພຽງຂັ້ນນີ້, ພວກເຮົາກໍ່ເຫັນວ່າເກັ່ງທີ່ສຸດ. ແຕ່ຕໍ່ ກັບນາງມາ, ນາງຍັງບໍ່ທັນພໍໃຈແລະນາງໄດ້ຄິດວ່າ ຖ້າຫາກເຮັດໄດ້ ພຽງແຕ່ເທົ່ານັ້ນ ກໍ່ໝາຍຄວາມວ່າຕົນເອງຫາກໍ່ເຮັດລ້ອນໜ້າທີ່ຂອງ ເມຍຄົນໜຶ່ງທີ່ຢູ່ແນວຫລັງເທົ່ານັ້ນ, ຍັງໜ້າທີ່ຂອງພົນລະເມືອງ ຜູ້ ໜຶ່ງຕໍ່ກັບປະເທດຊາດ. ຕໍ່ກັບການປະຕິວັດ. ນາງຍັງບໍ່ທັນເຮັດໄດ້ ດີ ເທື່ອ. ຈິດໃຈຮັກຜົວ, ຖະໜອມລູກແລະຮູ້ບຸນຄຸນຕໍ່ກັບພໍ່ແມ່ຂອງ ນາງ ໄດ້ຄ່ອຍກາຍເປັນນ້ຳໃຈຮັກບ້ານເກີດເມືອງນອນ, ຮັກປະເທດ ຊາດ ຮັກການປະຕິວັດແລະຍ້ອນນ້ຳໃຈຮັກຊາດນັ້ນເອງ ໄດ້ຊຸກຍູ້ໃຫ້ ນາງ ຂຶ້ນຕົວຂົນຕົນ, ເປັນຕົ້ນແມ່ນຜ່ານຈົດໝາຍຂອງຜົວທີ່ສົ່ງມາຈາກແນວ ໜ້າ: "ນ້ອງຕ້ອງພະຍາຍາມເຂົ້າຮ່ວມການເຄື່ອນໄຫວວຽກ ງານ ຂອງສັງຄົມ", ໄດ້ປຸກລະດົມນາງ. ແຕ່ຢາກເຂົ້າຮ່ວມວຽກງານ ການ ເຄື່ອນໄຫວຂອງສັງຄົມ, ກ່ອນອື່ນໝົດນາງຕ້ອງຮູ້ອ່ານແລະຂຽນໜັງ

ສື ເພື່ອອ່ານເອກະສານ ແລະຄຳສັ່ງຂອງຂັ້ນເທິງສົ່ງມາ ນາງ ໄດ້ໄປຊອກຊື້ເຈ້ຍແລະສິນາຣຽນໜັງສືໃຫ້ຈົບຊັ້ນປະຖົມ. ນອກນັ້ນ ນາງຍັງໄດ້ຂົນຂວາຍຊາວບ້ານອອກແຮງເພີ່ມພູນຜະລິດຜົນແລະຮຽນໜັງສື. ຍ້ອນນາງສ້າງໄດ້ຜົນງານເຫລົ່ານັ້ນ, ຊາວບ້ານຈິ່ງເຊື່ອຖືແລະຄັດເລືອກໃຫ້ເປັນຫົວໜ້າສາມະຄົມຍິງຂອງຕາແສງແລະໄດ້ຮັບເປັນແມ່ຍິງສາມເກັ່ງທົ່ວເຂດ.

ຜ່ານຮູບພາບຂອງ ນາງມາ, ພວກເຮົາ ເຫັນວ່າຮູບພາບຂອງຄົນແບບໃໝ່ໄດ້ສະແດງອອກ ຢ່າງລວມສູນ. ທຸກຄົນແບບໃໝ່ນີ້ ເວລາໃດກໍ່ພະຍາຍາມບຶນຕົວ ເພື່ອຊອກຫາຄວາມສຸກອັນແທ້ຈິງ. ຜ່ານ ຮູບພາບຂອງນາງມາ ໄດ້ສ່ອງແສງເຖິງທາດແທ້ອັນດີງາມ, ນ້ຳໃຈ ດຸໝັ່ນມານະອົດທົນຂອງປະຊາຊົນລາວເຮົາ. ນາງມາເປັນຄົນ ແບບໃໝ່, ນາງມີຄວາມງາມຂອງຄົນທີ່ມີອຸດົມຄະຕິ, ຮູ້ຈັກຍົກສິດຜົນ ປະໂຫຍດຂອງຊາດສູງກວ່າສິດຜົນປະໂຫຍດສ່ວນຕົວ ຄວາມງາມນີ້ ຖ້າຢູ່ໃນສັງຄົມເກົ່າແມ່ນບໍ່ມີຈັກເທື່ອ, ກົງກັນຂ້າມຢູ່ເຂດປົດປ່ອຍ ຂອງພວກເຮົາໃນປະຈຸບັນ, ພວກເຮົາສາມາດພົບພໍ້ຫລາຍຄົນຄືນາງ ມາເຊັ່ນ: ນາງວິລາ (ນັກຮົບແຂ່ງຂັນສາທາລະນະສຸກຫລືແມ່ຍິງຊຳເໜືອໃນເລື່ອງ (ໝາກຫົວໃຈຂອງຜູ້ຢູ່ແນວຫລັງ) ໄດ້ພ້ອມກັນແບກໄຖແບກຄາດໄປເຮັດນາແລະລຳລຽງສະບຽງອາຫານອອກໄປແນວໜ້າແລະຍັງອີກບົດເລື່ອງຫລາຍບົດຊຶ່ງພວກເຮົາບໍ່ສາມາດຈະນຳອອກມາ ຈຳແນກຢູ່ໃນນີ້ໃຫ້ໝົດໄດ້ ຊຶ່ງແມ່ນເປັນໜ້າອັດສະຈັນຕໍ່ກັບກຳລັງແຮງຂອງການປະຕິວັດແລະການບຶນຕົວຂອງຄົນທີ່ໄດ້ຮັບການປົດປ່ອຍ ຄົນເຮົາຖ້າໄດ້ຮັບການປົດປ່ອຍຢ່າງສົມບູນແລ້ວ, ເຂົາຈະມີກຳລັງ ອັນ

ແຮງກ້າ ສາມາດເຮັດໄດ້ທຸກສິ່ງທຸກຢ່າງທີ່ຍິ່ງໃຫ່ຍ.

ຖ້າພວກເຮົາທວນຄືນ ປະຫວັດສາດແຫ່ງການຕໍ່ສູ້ຂອງຊາດກ່ອນນັ້ນ ສິບກ່ວາປີ; ເຂດເຕົ້າໂຮມຂອງຝ່າຍປະເທດລາວເຖິງປະຈຸບັນ, ເຂດປົດປ່ອຍໄດ້ເປີດກ້ວາງຢ່າງໃຫ່ຍຫລວງ, ເກືອບເທົ່າສາມສ່ວນສີ່ (3/4) ດິນແດນ ທົ່ວປະເທດ ແລະຫນຶ່ງສ່ວນສອງ (1/2) ຈຳນວນ ພົນລະເມືອງລາວ. ຖ້າວ່າຢູ່ສອງແຂວງຄາວກ່ອນເປັນເຂດເຕົ້າ ໂຮມຂອງຝ່າຍປະເທດລາວເທົ່ານັ້ນ, ມາເຖິງປະຈຸບັນເຂດປົດປ່ອຍກຳລັງໄດ້ຮັບການສ້າງສາໃນທຸກດ້ານໃຫ້ຄືກັນກັບລັດຫນຶ່ງທີ່ເອກກະລາດ ທາງດ້ານເສດຖະກິດ, ຢູ່ເຂດປົດປ່ອຍໄດ້ເລີ່ມຕົ້ນກໍ່ສ້າງບັນດາ ໂຮງຈັກໂຮງງານເຊັ່ນ: ໂຮງງານປຸຍຢາ, ໂຮງງານແປງລົດ, ໂຮງ ງານຕຳແຜ່ນ, ໂຮງງານຕີເຫລັກ, ໂຮງພິມ, ໂຮງເລື່ອຍ, ໂຮງສີເຂົ້າໂຮງ ງານໄຟຟ້ານ້ຳຕົກແລະອື່ນໆ...ຖັນແຖວກຳມະກອນ ແລະພະນັກງານເຕັກນິກຊັ້ນກາງ ແລະຊັ້ນສູງນັບມື້ນັບຫລາຍ. ດ້ານກະສິກຳກໍ່ໄດ້ ຟື້ນຟູ ແລະ ຂະຫຍາຍໃນປະຈຸບັນ, ຢູ່ເຂດປົດປ່ອຍມີຫລາຍບ່ອນ ໃນປີຫນຶ່ງສາມາດເຮັດນາໄດ້ສອງລະດູ, ພິເສດແມ່ນດ້ານສາທາລະນະສຸກແລະສຶກສາໄດ້ຂະຫຍາຍຢ່າງໄວວາ. ໂຮງຮຽນສ້າງຄູຊັ້ນມັດທະຍົມ, ໂຮງຮຽນອຸດົມ, ໂຮງຮຽນຊັ້ນມັດທະຍົມກໍ່ໄດ້ສ້າງຂຶ້ນ ແລະ ນັບມື້ນັບຫລາຍ; ເວລານັ້ນ ຢູ່ເຂດປົດປ່ອຍ, ຍັງພວມກຳລັງກຽມ ສ້າງໂຮງຮຽນມະຫາວິທະຍາໄລສອນດ້ວຍພາສາລາວ. ນີ້ມັນເປັນບັນຫາທີ່ຍິ່ງໃຫ່ຍຊຶ່ງປະບັນດາປະເທດຊາດນິຍົມຫລາຍປະເທດຍັງບໍ່ທັນ ມີຄວາມສາມາດເຮັດໄດ້. ໃນບົດບັນທຶກ "ຕາມສາຍເຫນືອງເຕະ ລາວ" ດ້ວຍຮູບພາບປຽບທຽບລະຫວ່າງສອງສັງຄົມ, ນັກຂຽນໄດ້ເລົ່າສູ່ພວກ

ເຮົາຟັງ, ໄດ້ຊີ້ໃຫ້ພວກເຮົາເຫັນການປ່ຽນແປງໃໝ່ຢູ່ເຂດປົດ ປ່ອຍ ເປັນຕົ້ນແມ່ນຢູ່ເຂດເຊລາງ ແລະ ມາຮອດພວກເຮົາຂໍເອົາ ຄຳເວົ້າຂອງຄຳດີໃນເລື່ອງ "ພາສາແມ່" ມາຢັ້ງຢືນ"...ນັ້ນ ໃບໜ້າຂອງປະເທດລາວໃໝ່, ປະເທດລາວໜຸ່ມນ້ອຍ ກຳລັງໄດ້ ກຳເນີດແລະເຕີບໃຫຍ່ເຂດປົດປ່ອຍແຜ່ອອກທົ່ວປະເທດ, ບໍ່ແມ່ນແຜ່ອອກແຕ່ວຽງຈັນ..."(ຄັດຈາກພາສາແມ່; ໜ້າ11)ຄຳເວົ້ານີ້ແມ່ນ ຖືກຕ້ອງ ແລະ ສັດຈະທຳທີ່ສຸດ ແລະ ຕົວຈິງການຫັນປ່ຽນໃໝ່ຢູ່ ເຂດປົດປ່ອຍໄດ້ສັນລະສຸດໃຫ້ເຫັນ.

ດ້ວຍຄວາມຈິງທີ່ເຕັມ ໄປດ້ວຍຄວາມໝາຍຄຶງພວກເຮົາ ໄດ້ ຈຳແນກມາ, ຜ່ານການຊອກຮູ້ນຳບົດເລື່ອງ, ບົດບັນທຶກ, ບົດນາວະນິຍາຍຕ່າງໆ, ພວກເຮົາເຫັນວ່າບັນດານັກແຕ່ງ ໄດ້ບໍລິສຸດຕໍ່ຄວາມຈິງໃນເວລາທີ່ເຂົາເຈົ້າ ສ່ອງແສງຄວາມຈິງເຂົ້າໃນບົດເລື່ອງຂອງຕົນ, ບັນດານັກແຕ່ງ ໄດ້ສັນລະສຸດເຖິງທາດແທ້ອັນດີງາມຂອງສັງຄົມໃໝ່, ຄົນແບບໃໝ່ຢູ່ເຂດປົດປ່ອຍ.

ແຕ່ຖ້າພວກເຮົາຕີລາຄາຢ່າງເຄັ່ງຄັດກ່ວານີ້; ພວກເຮົາເຫັນ ວ່າບັນດາເລື່ອງທີ່ເວົ້າຜ່ານມາຍັງມີຈຸດອ່ອນບາງອັນຄື: ຄວາມສາ ມາດລວບລວມຂອງນັກແຕ່ງຍັງບໍ່ທັນສູງ; ຂອບເຂດສ່ອງແສງຍັງບໍ່ ທັນກ້ວາງ, ຍັງບໍ່ທັນສ່ອງແສງບັນຍາກາດອັນຟົດຟື້ນຢູ່ເຂດປົດປ່ອຍ ໄດ້ຢ່າງຄົບຖ້ວນ, ທາງດ້ານສິລະປະ, ມີບາງບົດນັກແຕ່ງຍັງຕ້ອງເອົາໃຈໃສ່ຕື່ມອີກ. ບົດເລື່ອງຂອງພວກເຮົາສ່ວນຫລາຍແມ່ນແຕ່ງແບບ ເລົ່າເລື່ອງຈິງຄົນແທ້, ຖ້າເວົ້າເຖິງປະເພດເລື່ອງຈິງຄົນແທ້ມີຈຸດດີຢູ່ບ່ອນມັນສ່ອງແສງ ໄດ້ທັນກັບຄວາມຮຽກຮ້ອງຕ້ອງການຂອງສະພາບ ການ

ເຮັດໃຫ້ຜູ້ອ່ານຕາຍໃຈຍ້ອນວ່າເລືອງນັ້ນມີຈິງຢູ່ໃນສັງຄົມຂອງ ພວກເຮົາ ແລະ ພວກເຮົາຫມົດທຸກຄົນ ກໍ່ສາມາດເຮັດໄດ້ຄືກັນ. ແຕ່ຕາມພວກເຮົາຄິດບັນຫາຕົ້ນຕໍຂອງວັນນະຄະດີ ແມ່ນຈະຕ້ອງເປີດ ກ້ວາງທາງດ້ານແນວຄິດຈິດໃຈຂອງຕົວລະຄອນ, ເມືອພັນລະນາຕົວລະຄອນພວກເຮົາບໍ່ພຽງແຕ່ພັນລະນາຕົວລະຄອນນັ້ນ ເຮັດວຽກຫຍັງ, ຍັງຈະຕ້ອງພັນລະນາວິທີເຮັດວຽກຂອງຕົວລະຄອນນັ້ນຄືແນວໃດ. ຕົວ ຢ່າງເລືອງ "ນາງມາແມຍິງສາມເກົ້າ" ນັກຂຽນພໍແຕ່ເລົ່າເລືອງ ນາງມາເທົ່ານັ້ນ, ສ່ວນແນວຄິດຈິດໃຈແລະຄວາມຮັກນັກຂອງນາງຄື ແນວໃດ, ນັກຂຽນຍັງບໍ່ທັນເວົ້າເຖິງ, ສະນັ້ນເຮັດໃຫ້ຕົວລະຄອນມີຊີວິດ ຊີວາບໍ່ຄືບຫ້ອນປານໃດ. ດັ່ງນັ້ນໃນການແຕ່ງເລືອງ, ຮຽກຮ້ອງໃຫ້ ນັກແຕ່ງຂອງພວກເຮົາຕ້ອງຮູ້ຈັກຄັດເລືອກເອົາເລືອງ, ຄັດເລືອກ ເອົາຂໍ້ປີກຍ່ອຍຂອງເລືອງ ແລະ ຈະຕ້ອງຮູ້ຈັກສືບຊ້ອນເລືອງ, ຮູ້ຈັກເລົ່າຄືນສາຍເຫດຂອງເລືອງນັ້ນຄືແນວໃດ. ຄວນຫລີກເວັ້ນການ ເລົ່າເລືອງຍືດຍາວ. ຈືດຈາງ, ເຮັດໃຫ້ຜູ້ອ່ານນຶກວ່າຕົນອ່ານບົດສະ ຫລຸບພົນງານ ຫລືອ່ານບົດລາຍງານ ການເມືອງ ບົດເລືອງຕ່າງໆ ຕ້ອງນຳຄວາມດູດດືມໃຈ, ຄວາມອອນຊອນມາໃຫ້ແກຜູ້ອ່ານ, ເຫມືອນ ດັ່ງເຂົາເຈົ້າໄດ້ດື່ມນ້ຳຫວານຈອກຫນຶ່ງ ແລະ ເຂົາເຈົ້າຮັບຮູ້ໄດ້ຕື່ມ ບັນຫາຫນຶ່ງ. ເພືອຢາກເຮັດໄດ້ຄືແນວນັ້ນ, ນັກຂຽນທັງຫລາຍຂອງ ພວກເຮົາຕ້ອງຍົກສູງ ດ້ານສິລະປະການແຕ່ງຕື່ມອີກ.

# ຕົວລະຄອນເອກໃນວັນນະຄະດີປະຕິວັດ

ບໍ່ວ່າຢູ່ໃນຍຸກສະໄໝໃດ, ຕາມການຂະຫຍາຍຂອງວັນນະຄະ ດີ ແມ່ນຕ້ອງມີຕົວລະຄອນເອກ (ໝາຍເຖິງແບບຄົນ ທີ່ດີເດັ່ນໃນຍຸກສະໄໝນັ້ນ). ບັນດານັກແຕ່ງໄດ້ ພ້ອມກັນສຸມໃສ່ພົນລະນາປະເພດ ຄົນເຫຼົ່ານັ້ນ ແລະ ນຳມາເປັນຕົວລະຄອນເອກໃນບົດປະພັນຂອງ ຕົນ ຕົວຢ່າງໃນສະໄໝສັກດີນາ, ຕົວລະຄອນເອກໃນວັນນະຄະດີຂອງຊົນຊັ້ນສັກດີນາສ່ວນຫລວງຫລາຍແມ່ນພວກເຈົ້າຂຸນມູນນາຍ...ມາ ໃນສະໄໝທຶນນິຍົມ, ຕົວລະຄອນເອກໃນວັນນະຄະດີທຶນນິຍົມສ່ວນຫລາຍພັດແມ່ນຮູບຄົນແບບນາຍທຶນ, ນາຍທຶນນ້ອຍ, ແບບຄົນທີ່ຫລິ້ນກິນ ແບບຄົນທີ່ມີແນວຄິດກົດຂີ່ຂູດຮີດໃໝ່ແລະອື່ນໆ...ມາໃນສະໄໝປະຕິວັດ ຕົວລະຄອນເອກ ໃນວັນນະຄະດີປະຕິວັດແມ່ນຈຳພວກທີ່ຮັກຊາດຄຽດແຄ້ນສັດຕູນັ້ນຄືບັນດາກຳມະກອນຢູ່ໃນໂຮງຈັກໂຮງງານຕ່າງໆ. ບັນດາຊາວນາທີ່ທຸກຈົນ ແລະລຸ້ນໄວໜຸ່ມທີ່ກຳລັງສູ້ຣົບຢູ່ແນວໜ້າ, ກຳລັງອອກເຫື່ອເທແຮງສ້າງສາເຂດປົດປ່ອຍ. ເພື່ອຢາກໃຫ້ມັນລະອຽດກວ່າ, ພວກເຮົາຂໍຍົກບາງບຸກຄົນ ຊຶ່ງວັນນະຄະດີ ປະຕິວັດ ລາວ ເຄີຍສ່ອງແສງດັ່ງລຸ່ມນີ້:

# ຕົວລະຄອນໄວໜຸ່ມໃນວັນນະຄະດີປະຕິວັດ

ບໍ່ວ່າໃນຍຸກສະໄໝໃດ, ໄວໜຸ່ມເປັນລຸ່ນຄົນທີຫລາຍກ່ວາລຸ່ນ ຄົນອື່ນແລະມີບົດບາດສຳຄັນຕໍ່ສັງຄົມ, ອາດຈະເວົ້າໄດ້ວ່າ ໄວໜຸ່ມ ເປັນກະດູກສັນຫລັງຂອງປະເທດຊາດ. ປະເທດຊາດຈະເລີນຮຸ່ງເຮືອງຫລືຊຸດໂຊມລົງສ່ວນຫລາຍແມ່ນໄວໜຸ່ມເປັນຜູ້ຕັດສິນ.

ໃນການຕໍ່ສູ້ກູ້ຊາດຂອງປະຊາຊົນລາວເຮົາ, ໄວໜຸ່ມລາວເຮົາໄດ້ມີການປະກອບສ່ວນອັນສຳຄັນ, ມັນສະແດງອອກໃນມະຕິໃໝ່ຂອງສູນກາງຕໍ່ກັບຂະບວນຂອງຊາວໜຸ່ມ. ອີກດ້ານໜຶ່ງ ໄວໜຸ່ມລາວເຮົາ ກໍ່ໄດ້ເຕີບໃຫຍ່ໃນທ່າມກາງແປວໄຟແຫ່ງການປະຕິວັດແລະໄດ້ ກາຍເປັນຕົວແທນ ໃຫ້ແກ່ຈຳພວກຄົນທີ່ກ້າວໜ້າແລະມີໜ້າຢູ່ທຸກແຫ່ງຫົນທຸກສະໜາມຮົບ. ດັ່ງນັ້ນ ໄວໜຸ່ມຈຶ່ງກາຍເປັນລຸ່ນຄົນຊຶ່ງບັນດາ ນັກຂຽນໄດ້ເອົາໃຈໃສ່ກ່ວາໝູ່ແລະໄດ້ສຸມພັນລະນາໃຫ້ເປັນຕົວລະຄອນເອກໃນວັນນະຄະດີປະຕິວັດ.

ຕົວລະຄອນໄວໜຸ່ມທີ່ບັນດານັກຂຽນໄດ້ພັນລະນາໃນບົດ ເລື່ອງຕ່າງໆມີລັກສະນະຊາດຢ່າງຈະແຈ້ງ, ພ້ອມທັງມີລັກສະນະຂອງແຕ່ລະຊົນຊາດ, ຊົນເຜົ່າຄື: ລັກສະນະລາວລຸ່ມ, ລາວສູງ, ລາວເທິງທີ່ ຊ່ວຍໃຫ້ຜູ້ອ່ານຈຳແນກໄດ້ຢ່າງງ່າຍດາຍ. ຄົນລາວເຮົາມີລັກສະນະໃຈ ດີຊື່ສັດ ແລະ ພິລະອາດຫານ; ສ່ວນຊົນຊາດລາວລຸ່ມມີລັກສະນະ ລອບຄອບ, ໃຈດີທຸ່ນທ່ຽງສະຫລາດຫລັກແຫລມ; ລາວສູງມີລັກສະນະສັດ ຊື່

ໃຈດຽວ, ລາວ ເທິງມີລັກສະນະ ເດັດດ່ຽວ, ແຂງກ້າ. ພວກ ໄວ ຫນຸ່ມ ເຫລົ່ານັ້ນເປັນຄົນທີ່ຫ້າວຫັນຕໍ່ວຽກງານ, ທານຄິດ ແລະ ທານກະທຳ ເຂົາຮັບຮູ້ໄດ້ໄວ ໃນເມືອເຂົາຕິດແທດກັບວິທະຍາສາດທຳມະ ຊາດ ແລະວິທະຍາສາດສັງຄົມ, ຄຽງຄູ່ກັນນັ້ນເຂົາຍັງເປັນຄົນມີນ້ຳໃຈ ອົດ ທົນ, ພາກພຽນແລະອາດຫານຜ່ານຜ່າທຸກຄວາມຫຍຸ້ງຍາກອຸປະ ສັກ ເຂົາແມ່ນບັນດານັກຮົບໃນກອງທັບປົດປ່ອຍປະຊາຊົນລາວທີ່ກຳລັງ ສູ້ ຮົບຢູ່ແນວຫນ້າ; ເປັນກຳມະກອນຢູ່ໃນໂຮງງານຕ່າງໆ; ເປັນຊາວນາ ທີ່ກຳລັງອອກແຮງເພີ່ມພູນພະລິດຜົນ, ອອກເຂົ້າຊ່ວຍຊາດລ້ຽງ ກອງ ທັບປົດປ່ອຍ, ຊາວຫນຸ່ມເປັນພະນັກງານ ການເມືອງ, ພະນັກງານ ວິ ທະຍາສາດ, ນັກວິສາວະກອນ, ນາຍຄູ, ນາຍແພດ, ນັກຮຽນຮູ້ ແລະ ອື່ນໆ...ບັນດານັກຂຽນນັກພັນລະນາ ໄວຫນຸ່ມເປັນຕົວລະຄອນ ແຫ່ງ ອຸດົມຄະຕິຊຶ່ງມີຄວາມຫມາຍເວົ້າເຖິງເສັ້ນທາງເດີນຂອງສັງຄົມໃຫມ່ ຂອງລາວເຮົາທີ່ກຳລັງກ້າວ ໄປສູ່ເສັ້ນທາງແຫ່ງຊີວິດໃນອະນາຄົດອັນ ດີງາມຢ່າງແທ້ຈິງ.

ໃນວັນນະຄະດີປະຕິວັດລາວເຮົາເບື້ອງລວມ ສ່ວນຫລາຍ ແມ່ນ ເລື່ອງສູ້ຮົບ, ສະນັ້ນ ໄວຫນຸ່ມລາວທີ່ກຳລັງຈັບປືນສູ້ຮົບຢູ່ແນວຫນ້າ ໄດ້ ປະກົດຢູ່ໃນວັນນະຄະດີ ປະຕິວັດແມ່ນຫລາຍກວ່າຫມູ່, ບັນດາຕົວ ລະ ຄອນ ເຫລົ່ານັ້ນ ເຖິງວ່າຈະແມ່ນຊາຍຫລືຍິງຫນຸ່ມ. ເຂົາລ້ວນ ແລ້ວ ເປັນຄົນທີ່ມີແນວຄິດອັນດີງາມ, ເຫລື້ອມໃສ; ພິເສດແມ່ນນ້ຳໃຈສູ້ ຮົບ ອັນພິລະອາດຫານ, ຍອມເສຍສະຫລະ ເພື່ອພາລະກິດຂອງຊາດ, ເພື່ອ ອຸດົມຄະຕິປະຕິວັດອັນສູງສົ່ງ. ຜ່ານບົດເລື່ອງທີ່ດູດດື່ມໃຈຂອງບັນ ດາ ນັກຂຽນຫລາຍບົດ; ພວກເຮົາເຫັນແຈ້ງຮູບພາບຂອງບັນດານັກຮົບ ທີ່

ໜຸ່ມນ້ອຍ, ນາງສາວກອງຫລອນທີ່ສວຍງາມ. ເຂົາເຈົ້າມີອາຍຸ ຕ່າງກັນ; ເກີດຢູ່ແຕ່ລະເຂດແຂວງທ້ອງຖິ່ນໃນທົ່ວປະເທດ, ສະພາບ ກຳເນີດ ແລະສະພາບສູ້ຮົບບໍ່ຄືກັນ; ຮູບຮ່າງ ແລະ ລັກສະນະ ນິດໄສໃຈຄໍຂອງແຕ່ລະຄົນບໍ່ຄືກັນ. ແຕ່ເຂົາເຈົ້າລ້ວນແຕ່ມີຈຸດໜຶ່ງທີ່ດີເດັ່ນກວ່າໝູ່ແລະກໍ່ເປັນຈຸດທີ່ສວຍງາມກວ່າໝູ່ນັ້ນແມ່ນ ລັດທິວິລະຊົນ, ນ້ຳໃຈຫ້າວຫັນ, ເດັດດ່ຽວສູ້ຮົບ, ຄວາມຕັດສິນໃຈຕີເອົາຊະນະສັດຕູ ແລະ ຄວາມເຊື່ອໝັ້ນຕໍ່ໄຊຊະນະຂອງການປະຕິວັດ. ແນວຄິດຈິດໃຈ ແລະ ຄວາມຕັດສິນໃຈເຫລົ່ານັ້ນມັນໄດ້ສະແດງອອກ ໃນການກະທຳ ອັນພິລະອາດຫານຂອງເຂົາເຈົ້າ.

ໃນເລື່ອງ "ເຂົ້າຕົ້ມຈົ່ເອົາປືນ" ຂອງສະຫາຍຄຳມາພົມກອງ ໄດ້ສະເໜີນຳພວກເຮົາ, ນ້ຳໃຈອັນພິລະອາດຫານ, ຄວາມສະຫລາດ ຫລັກແຫລມຂອງນັກຮົບປະເທດລາວ. ຫລັງຈາກເຂົາລວມລາວປີ 1957 ບັນດານັກຮົບຝ່າຍປະເທດລາວ ໄດ້ກັບຄືນເມືອທຳມາຫາກິນຢູ່ ບ້ານເກີດເມືອງນອນຂອງໃຜລາວ. ແຕ່ໃນເມື່ອການປະຕິວັດ ໄດ້ຫັນທິດສົງຄາມກາງເມືອງ ໄດ້ເກີດຂຶ້ນ; ບັນດານັກຮົບ ປະເທດລາວດ້ວຍນ້ຳໃຈອັນພິລະອາດຫານແລະຄວາມພິກໄຫວ, ຄວາມສະຫລາດຫລັກ ແຫລມຂອງຕົນ; ເຂົາເຈົ້າທີ່ໄດ້ໃຊ້ເຂົ້າຕົ້ມໂຄມໜຶ່ງ ປະຊາຊົນຕໍ່ໃຫ້ ເພື່ອຈົ່ເອົາອາວຸດຂອງສັດຕູ, ປະກອບອາວຸດເອົາເອງແລະປະກອບອາວຸດໃຫ້ກອງຮ້ອຍໜຶ່ງ ໄດ້ພຽງພໍ ແລະ ຢູ້ປັ້ນເຫລັ້ມນເອງ, ເລື່ອງ "ຟອງແມ່ນ້ຳຂອງ" ນັກແຕ່ງ ໄດ້ເວົ້າເຖິງຄວາມອົດທົນຜ່ານຜ່າຄວາມ ຫຍຸ້ງຍາກອຸປະສັກ ເພື່ອເຮັດສຳເລັດໜ້າທີ່. ເລື່ອງ "ຟອງແມ່ນ້ຳຂອງ " ອາດເວົ້າໄດ້ວ່າ ເປັນເລື່ອງທີ່ພັນລະນາ ຫາດແຫ້ຂອງນັກຮົບ ກອງ

ທັນປົດປ່ອຍໄດ້ຄືບໜ້ອນພໍຄວນ. ຮູບພາບຂອງບັນດານັກຮົບກອງ ທັບປົດປ່ອຍໄປປະຕິບັດໜ້າທີ່ໃນເວລາເດິກດື່ນທ່ຽງຄືນຫລືວ່ານັ່ງ ກິນເຂົ້າກັບເກືອແກມນ້ຳຝົນຫລືຂ້າມນ້ຳຂອງດ້ວຍໄມ້ໄຜ່ຄົນລະລຳ ໃນຍາມນ້ຳນອງ ແລະ ຍັງມີຄວາມຫຍຸ້ງຍາກ ອຸປະສັກອີກຫລາຍ ປະການ, ເຊັ່ນ: ຕໍ່ສູ້ກັບຟອງນ້ຳ, ກັບເຮືອຮົບຂອງສັດຕູ ແລະສັດຮ້າຍໃນພື້ນນ້ຳອີກ. ທຸກຮູບພາບເຫລົ່ານັ້ນ ມັນໄດ້ເວົ້າເຖິງທາດແທ້ອັນດີງາມຂອງກອງທັບປົດປ່ອຍຊຶ່ງເປັນກອງທັບທີ່ອອກມາຈາກປະຊາຊົນ ແລະ ຕໍ່ສູ້ເພື່ອຮັບໃຊ້ປະຊາຊົນ.

ການຕໍ່ສູ້ກູ້ຊາດ, ຕ້ານຈັກກະພັດອາເມລິກາ ໄດ້ກາຍເປັນປັດ ໄຈອັນຍິ່ງໃຫຍ່ໃນຊີວິດຂອງປະຊາຊົນລາວທົ່ວປະເທດພິເສດແມ່ນຕໍ່ ກັບໄວໜຸ່ມ. ເພາະສະນັ້ນ, ເມື່ອແສງສະຫວ່າງຂອງການປະຕິວັດ ໄດ້ສ່ອງແສງມາເຖິງເຂົາເຈົ້າ; ເຂົາເຈົ້າພ້ອມກັນມ່ວນຊື່ນເບີກບານເຂ ລຸມບອນເຂົ້າເປັນນັກຮົບກອງທັບປົດປ່ອຍ"...ຊາຍໜຸ່ມບາງ ບ້ານຂໍໄປໝົດ ຈຳເປັນຕ້ອງໄດ້ອະທິບາຍໃຫ້ຈຳນວນໜຶ່ງຢູ່ເພີ່ມພູນ ຜະລິດຜົນ. ຈຳພວກທີ່ບໍ່ໄດ້ໄປກໍ່ສະແດງທ່າທີ່ຫງ່ອມເຫງົາທີ່ສຸດ...(ຂັດຈາກປຶ້ມ: ນັກຮົບລາວ; ໜ້າ 58) ມັນເປັນໜ້າຮັກ, ໜ້າສະ ເທືອນໃຈແລະສວຍສົດງົດງາມແທ້. ຄວາມສວຍສົດງົດງາມຂອງຄົນທີ່ ເຊື່ອໝັ້ນຕໍ່ໄຊຊະນະຂອງການປະຕິວັດ. ບັນດາຊາວໜຸ່ມເຫລົ່ານັ້ນ ໄດ້ເຕີບໃຫຍ່ຂຶ້ນໃນເວລາສູ້ຮົບ ແລະທັນໃດເຂົາໄດ້ກາຍເປັນນັກວິ ລະຊົນ, ນັກຮົບແຂ່ງຂັນຂອງສະໄໝປະຕິວັດ, ຖ້າເວົ້າເຖິງພວກທະຫານໜຸ່ມ, ໃນເວລາຍ່າງເຂົ້າສະໜາມຮົບ, ຢູ່ຕໍ່ໜ້າຂອງພວກມັນ ເຫັນແຕ່ເງິນໂດລາຂອງຈັກກະພັດອາເມລິກາແລະທາງຫລັງຂອງ ພວກ

ມັນມີແຕ່ປາຍກະບອກປືນບັງຄັບຂອງພວກນາຍພັນຊາ, ກົງກັນ ຂ້າມ ຕໍ່ກັບນັກຮົບຂອງພວກເຮົາ, ເຂົາຮັບຮູ້ຢ່າງຈະແຈ້ງວ່າ: ເຂົາ ອອກ ມາຈາກໃສ, ເຂົາສູ້ຮົບເພື່ອໃຜແລະອານາຄົດຂອງເຂົາຈະນຳ ເຂົາ ໄປເຖິງບ່ອນໃດ. ເຂົາເປັນຄົນທີ່ມີອຸດົມຄະຕິ ແລະ ຮັບຮູ້ເສັ້ນ ທາງ ເດີນແຫ່ງຊີວິດຢ່າງຈະແຈ້ງ, ໃນຖັນແຖວກອງທັບປົດປ່ອຍມີບັນດານັກ ຮົບຄືທ້າວທິດ "ໃນເລືອງຊຸບໃນແປວໄຟ" ທ້າວທິດເຂົ້າທະຫານ ແຕ່ ຄາວຍັງຫນຸ່ມນ້ອຍ, ນທຳອິດເຂົ້າເປັນທະຫານແມ່ນຍ້ອນ. "ລູກຈະໄປ ຊອກຂ້າສັດຕູ, ແກ້ແຄ້ນໃຫ້ອາຈົນແລະລຸງລາວ..." ແລະຜ່ານການສູ້ ຮົບຫນ້າຕໍ່ຫນ້າກັບສັດຕູຫລາຍສິບຄັ້ງ, ທ່ານທາງຄວາມເຕີບໃຫຍ່ຂອງ ການປະຕິວັດ, ທ້າວທິດນັບມື້ນັບເຕີບໃຫຍ່ທາງດ້ານຮ່າງກາຍແລະຈິດ ໃຈ, ມີບາງບັ້ນຮົບຢູ່ໃນຈຸຂອງທ້າວທິດມີພຽງສາມຄົນກໍ່ຍັງຕີເອົາ ໄຊ ຊະນະສັດຕູ; ຊ້ຳບໍ່ຫນຳ, ມີບາງຄັ້ງ, ມີແຕ່ທິດຜູ້ດຽວດ້ວຍປືນກາກ ບິນ ຫນຶ່ງບອກ ແລະ ຫມາກແຕກຫນ່ວຍຫນຶ່ງຍັງສາມາດທັບມ້າງ ການ ກວາດລ້າງຂອງສັດຕູບັ້ນຫນຶ່ງແລະຫລັງຈາກຂ້າສັດຕູແລ້ວ, ທິດ ໄດ້ ແປງຄືນເຮືອສວນຂອງປະຊາຊົນທີ່ຖືກຫມາກແຕກຂອງລາວມ້າງ ເພ ການກະທຳຂອງທິດໄດ້ສະແດງໃຫ້ເຫັນທາດແທ້ອັນດີງາມຂອງ ກອງ ທັບປົດປ່ອຍແມ່ນອອກມາຈາກປະຊາຊົນແລະສູ້ຮົບເພື່ອສິດຜົນ ປະ ໂຫຍດຂອງປະຊາຊົນ.

ນ້ຳໃຈສູ້ຮົບອັນພິລະອາດຫານ ຂອງບັນດານັກຮົບປົດປ່ອຍ ພຽງ ແຕ່ໄດ້ສະແດງອອກຢູ່ໃນບັ້ນຮົບຕ່າງໆທີ່ເຕັມໄປດ້ວຍທ່າລູກປືນຄື ທ່າ ຝົນຂອງສັດຕູຫລືທ່າມກາງສຽງດັງສະຫນັ່ນຫວັ່ນໄຫວຂອງເຮືອບິນອາ ເມລິກາ. ໃນສະຫນາມຮົບທີ່ບໍ່ມີສຽງປືນ, ໃນຊີວິດປະຈຳວັນ. ທາດແທ້

ອັນດີງາມຂອງນັກຮົບປົດປ່ອຍຍັງໄດ້ປະກົດອອກຢ່າງຈະແຈ້ງ. ຕົວຢ່າງສະຫາຍຊອງໃນເລື່ອງ "ຊີວິດຂອງເພື່ອນສະຫາຍ", ນັກຂຽນໄດ້ເວົ້າເຖິງນ້ຳໃຈຮັກແພງໝູ່ເພື່ອນ, ນ້ຳໃຈເສຍສະຫລະອັນພິລະອາດຫານຂອງສະຫາຍຊອງທີ່ໄດ້ເອົາເລົາຄີງຂອງຕົນນອນເຕັງ ໝາກແຕກເພື່ອຊ່ວຍກູ້ເອົາຊີວິດຂອງໝູ່ເພື່ອນ. ການເສຍສະຫລະ ຂອງສະຫາຍຊອງໄດ້ຍົກທາດແທ້ອັນດີງາມຂອງນັກຮົບປົດປ່ອຍຂຶ້ນອີກກ້າວໜຶ່ງ. ມັນສະແດງເຖິງລັດທິວິລະຊົນ, ທັດສະນະປະຕິວັດແລະຄຸນຄະຕິອັນສູງສົ່ງຂອງນັກຮົບປົດປ່ອຍໄດ້ຢ່າງລວມສູນ. ໃນກໍລະນີທີ່ເສຍສະຫລະຕ່າງກັນ. ສະຫາຍໜຶ່ງຖືກເສຍສະຫລະຢູ່ສະໜາມຮົບທີ່ເຕັມແຕ່ທ່າລູກປືນຂອງສັດຕູ. ສ່ວນສະຫາຍໜຶ່ງ ເສຍສະຫລະຢູ່ໃນສະໜາມຮົບທີ່ມິດງຽບ, ພວກເຮົາບໍ່ສາມາດຈຳແນກໄດ້ວ່າແມ່ນໃຜອາດ ຫານກ່ວາໃຜ? ແມ່ນໃຜສະຫງ່າອົງອາດກ່ວາໃຜ? ແລະພວກເຮົາມີແຕ່ຮູ້ວ່າພວກເຂົາລ້ວນແຕ່ແມ່ນນັກວິລະຊົນຂອງຊາດ.

ເວົ້າເຖິງນັກຮົບກອງທັບປົດປ່ອຍປະຊາຊົນລາວ, ພວກເຮົາ ຍັງຕ້ອງເວົ້າເຖິງປະຊາຊົນ. ທາດແທ້ຂອງກອງທັບປົດປ່ອຍແມ່ນ ອອກຈາກປະຊາຊົນ ແລະ ຕໍ່ສູ້ເພື່ອສິດພົນປະໂຫຍດຂອງປະຊາຊົນເພາະສະນັ້ນຕໍ່ກັບບັນດານັກຮົບປົດປ່ອຍຄວາມຮັກແພງທີ່ສູງສົ່ງ. ງົດ ງາມກ່ວາໝູ່ນັ້ນແມ່ນຄວາມຮັກຕໍ່ປະຊາຊົນ. ຍ້ອນມີຄວາມຮັກແພງ ລະຫວ່າງກອງທັບແລະປະຊາຊົນ, ມັນເປັນບໍ່ເກີດແຫ່ງກຳລັງ ສູ້ຮົບ ອັນມະຫາສານ ແລະອາດຈະແມ່ນຍ້ອນເຫດການນີ້ເອງທີ່ເຮັດໃຫ້ ກອງທັບແລະປະຊາຊົນລາວເຮົາຕໍ່ສູ້ຕ້ານສັດຕູ ໃນຊາວກ່ວາປີທີ່ຜ່ານ ມາຢ່າງບໍ່ຮູ້ອິດເມື່ອຍແລະຍັງຈະຕໍ່ສູ້ໄດ້ຕະຫລອດໄປຈົນກ່ວາເວລາ ໃດ

ປະເທດຊາດ ໄດ້ຮັບການປົດປ່ອຍ. ໃນບົດເລືອງ "ນ້ອງວັນຄຳ" ນັກ
ຂຽນສົມບູນ ທະວີໄຊ ໄດ້ສ່ອງແສງເຖິງຄວາມຮັກແພງ, ຊ່ວຍ
ເຫລືອຊຶ່ງກັນແລະກັນລະຫວ່າງກອງທັບແລະປະຊາຊົນເລືອງເກີດຂຶ້ນ
ໃນສະໄໝບັ້ນຮົບ "ກູ້ກຽດ" ເວົ້າເຖິງບັ້ນຮົບ "ກູ້ກຽດ" ໝົດທຸກ ຄົນ
ພວກເຮົາ, ເປັນຕົ້ນແມ່ນກອງທັບແລະປະຊາຊົນເຂດຊຽງຂວາງ ທົ່ງ
ໄຫຫີນຄົງຈະຈື່ບໍ່ມີວັນລືມໄດ້ ຄວາມຫຍຸ້ງຍາກ, ທຸກຈົນ ແລະໂຫດກຳ
ຂອງສັດຕູທີ່ໄດ້ກໍ່ຂຶ້ນໃນເຂດແດນດິນແຫ່ງນີ້. ເລືອງ "ນ້ອງວັນຄຳ"
ເຖິງວ່າຫາກໍ່ສ່ອງແສງໄດ້ພຽງປີກໜຶ່ງ ຂອງສະພາບການ. ໃນ
ເລືອງ ໄດ້ເວົ້າເຖິງນັກຮົບປົດປ່ອຍສະຫາຍໄດ້ຮັບໜ້າທີ່ໄປ ຊອກ
ເຂົ້າກິນ, ເຂົາເຈົ້າໄດ້ໄປຫາເຮືອນ ແມ່ຈັນ, ນັກຮົບປົດປ່ອຍ໓ ສະ
ຫາຍໄດ້ອີງໃສ່ແມ່ຈັນ ແລະ ນາງວັນຄຳ ເພືອຊອກຫາສາງ ເຂົ້າ
ແລະເມືອມີນັກຮົບ ຄົນໜຶ່ງຖືກເຈັບ, ເຂົາເຈົ້າກໍ່ໄດ້ຮັບຄວາມ ເອົາ
ໃຈໃສ່ເບິ່ງແຍງ. ຊ່ວຍເຫລືອ ແລະ ປິ່ນປົວ ບົວລະບັດ ຈາກ ຄອບ
ຄົວ ແມ່ຈັນ. ລວມຄວາມວ່າ ນັກຮົບປົດປ່ອຍພວກເຮົາໄດ້ອີງໃສ່ ປະ
ຊາຊົນເພືອປະຕິບັດໜ້າທີ່ມາໃນເລືອງ "ສຽງກອງລຳວົງ" ນັກ ຂຽນ
ພັດ ໄດ້ເວົ້າເຖິງຄວາມຊ່ວຍເຫລືອຂອງກອງທັບປົດປ່ອຍປະຊາ ຊົນ.

ຄຽງຄູ່ກັບຮູບພາບຂອງບັນດາໄວໜຸ່ມລາວ ຕະລຸມບອນສະ ໝັກ
ເຂົ້າເປັນນັກຮົບປົດປ່ອຍແລະກຳລັງອອກເດີນທາງໄປສູ້ຮົບຢູ່ ແນວ
ໜ້າ. ໃນວັນນະຄະດີປະຕິວັດລາວ, ພວກເຮົາຍັງເຫັນຮູບພາບ ຂອງ
ບັນດາໄວໜຸ່ມລາວທີ່ກຳລັງສ້າງສາເຂດປົດປ່ອຍທັງວັນແລະຄືນ, ມັນ
ໄດ້ສະແດງອອກໃນບົດເລືອງຕ່າງໆທີ່ເວົ້າເຖິງດ້ານກະສິກຳ, ສາທາ
ລະນະສຸກ, ສຶກສາແລະອື່ນໆ... ໃນເມືອເວົ້າເຖິງກຳລັງໄວໜຸ່ມບັນ

ດານັກຂຽນຂອງພວກເຮົານັກພັນລະນາເຂົາເຈົ້າເປັນຄົນໜົ່ມແນວຄິດ ກ້າວໜ້າ,ມີຫົວຄິດປະດິດສ້າງຊອກຫາສິ່ງໃໝ່,ບັນດານັກແຕ່ງ ນັກຍິກ ໄວໜຸ່ມ ຕົກຢູ່ໃນກໍລະນີ ທີ່ຫຍຸ້ງຍາກ ສັບສົນແລະ ພາເຂົາເຈົ້າປະລອງກັບເຫດການທີ່ຫຍຸ້ງຍາກອັດຕະຄັດແລະເມື່ອຜ່ານຜ່າ ເຫດການເຫລົ່ານັ້ນໄດ້ແລ້ວ ຈະເຮັດໃຫ້ທັດສະນະຂອງເຂົາດີເດັ່ນ ຂຶ້ນແລະວຽກງານທີ່ເຂົາເຈົ້າເຮັດມານັ້ນ ຈຶ່ງມີການກະທົບເທືອນ ເຖິງຜູ້ອ່ານ.ຕົວຢ່າງໃນບົດເລື່ອງ "ຄົນໜຶ່ງໃນແນວໜ້າ",ພວກເຮົາເຫັນວ່ານັກຂຽນໄດ້ວາງຕົວລະຄອນ ຕົກຢູ່ໃນກໍລະນີທີ່ຫຍຸ້ງຍາກສັບ ສົນການກະທຳຂອງນາງຄຳແດງ (ຕົວລະຄອນໃນເລື່ອງຄົນໜຶ່ງໃນແນວໜ້າ) ໄດ້ຕໍ່ສູ້ກັບແນວຄິດ ຈະຢູ່ສະໜາມຮົບ ຫລືກັບບ້ານ,ຢູ່ ເພື່ອເອົາຄົນເຈັບກັບເມື່ອແນວຫລັງຫລືວ່າກັບບ້ານພົບຄູ່ຮັກ ຊຶ່ງເຂົາ ທັງສອງ ໄດ້ພັດພາກຈາກກັນເປັນເວລາຫລາຍປີແລ້ວ.ບັນຫາຕັ້ງ ຂຶ້ນເພື່ອໃຫ້ໄວໜຸ່ມພວກເຮົາຄົ້ນຄິດ;ໃນລະຫວ່າງວຽກງານສ່ວນ ລວມແລະວຽກສ່ວນຕົວ;ລະຫວ່າງຄວາມຮັກສ່ວນຕົວແລະຄວາມຮັກຕໍ່ການປະຕິວັດ,ໃນໄລຍະສັ້ນໆນີ້ ປະກົດວ່າມັນມີການຄັດແຍ້ງກັນ, ແຕ່ເມື່ອພວກເຮົາຄິດໃຫ້ມັນຖີ່ຖ້ວນແລ້ວ,ຄວາມຈິງມັນບໍ່ມີຫຍັງທີ່ຈະ ຂັດແຍ້ງກັນ;ເພາະວ່າຄວາມສຸກສ່ວນຕົວຈະຮັບປະກັນໄດ້ກໍ່ເມື່ອມີ ການປະຕິວັດ.ຖ້າບໍ່ມີການປະຕິວັດ,ບໍ່ມີການຕໍ່ສູ້ເພື່ອປົດປ່ອຍຊາດແລ້ວບໍ່ມີຜູ້ໃດຈະມີຄວາມສຸກຢ່າງແທ້ຈິງ ໄດ້ຄວາມສຸກສ່ວນຕົວເວລາໃດກໍ່ຕ້ອງນອນຢູ່ໃນຄວາມສຸກ ສ່ວນລວມຂອງປວງຊົນທັງຊາດ,ຍ້ອນນາງ ຄຳແດງມີແນວຄິດດີແນວນັ້ນ,ຄຳແດງຈຶ່ງ ໄດ້ສະໝັກເອົາຄົນເຈັບກັບຄືນແນວຫລັງ,ຫລັງຈາກເຮັດຫລ້ອນໜ້າທີ່ແລ້ວ;ບົນເສັ້ນທາງກັບ ຄືນ

ເມືອບ້ານຄຳແດງ ໄດ້ພົບກັບຄູຮັກຂອງຕົນ, ເຂົາທັງສອງລ້ວນແລ້ວ ມີຄວາມດີໃຈເພາະເຂົາຮູ້ຈັກເສຍສະຫລະສິດພົນປະໂຫຍດສ່ວນ ຕົວເພືອການປະຕິວັດ. ໃນເລືອງ "ແປວໄຟແຫ່ງໄວໜຸ່ມ" "ຄວາມຮັກ ຄືຄວາມສຸກ" ແລະ "ຄວາມສຸກ" ກໍ່ເຊັ່ນດຽວ, ນັກຂຽນທັງສາມ ໄດ້ຕັ້ງບັນຫາກ່ຽວກັບ "ຄວາມຮັກ" ໃຫ້ໄວໜຸ່ມພວກເຮົາຄົ້ນຄິດ. ຄວນສ້າງຄວາມຮັກຄືແນວໃດໃຫ້ຖືກຕ້ອງແລະເໝາະສົມກັບສະພາບ ການຄວາມຮັກສ່ວນຕົວຕ້ອງນອນຢູ່ໃນຄວາມຮັກອັນຍິ່ງໃຫ່ຍຂອງການປະຕິວັດ ແລະຈະຕ້ອງສ້າງຄວາມຮັກແບບປະຕິວັດຢ່າງແທ້ຈິງ.

ພວກເຮົາ ຢາກຂໍສະຫລຸບພາກນີ້ດ້ວຍເລືອງ "ຜູ້ສືບທອດ" ຜ່ານເລືອງນີ້ ນັກຂຽນໄດ້ຢັ້ງຢືນ ຕໍ່ກັບບົດບາດຂອງຊາວໜຸ່ມ, ຊາວໜຸ່ມລາວເຮົາໃນປະຈຸບັນ ທັງເປັນຜູ້ສືບທອດແລະສືບທອດພາລະກິດຂອງການປະຕິວັດເຂົາເຈົ້າບໍ່ພຽງແຕ່ເປັນຜູ້ກຳປືນຕໍ່ສູ້ໃນປະຈຸບັນ, ຍັງເປັນຜູ້ທີ່ຈະສ້າງສາປະເທດຊາດ, ບ້ານເມືອງໃຫ້ຮຸ່ງເຮືອງວໍວິ ໄລກ້າວໜ້າ. ສ້າງສາປະເທດລາວໃຫ້ກາຍເປັນທໍພະສາດລາດສະ ມູນທຽນທີ່ສວຍສົດງົດງາມ.

# ບາງປະກົດການກ່ຽວກັບຕົວລະຄອນແມ່ຍິງ ໃນວັນນະຄະດີ ປະຕິວັດລາວ

ໃນການຕໍ່ສູ້ກູ້ຊາດຕ້ານການຮຸກຮານ ຂອງຈັກກະພັດອາເມລິ ກາ ຂອງປະຊາຊົນລາວເຮົາ, ພາຍໃຕ້ການນຳພາຂອງສູນກາງແນວລາວຮັກຊາດ. ສົງຄາມປະຊາຊົນຢູ່ລາວ ໄດ້ຍົກຂຶ້ນສູ່ບາດກ້າວໃໝ່ ຢ່າງໜ້າອັດສະຈັນ ແລະ ໃນສົງຄາມເທື່ອນເອື້ອຍນ້ອງເພດຍິງໄດ້ເຂົ້າ ປະກອບສ່ວນຄືດັ່ງ "ທະຫານປະເພດໜຶ່ງ" ແລະໃນການຕໍ່ສູ້, ເຂົາເຈົ້າໄດ້ສ້າງຜົນງານຢ່າງສະຫງ່າອົງອາດ.

ໃນວັນນະຄະດີປະຕິວັດ, ບັນດານັກຂຽນນອກຈາກສ່ອງແສງ ຮູບພາບຂອງໄວໜຸ່ມລາວແລ້ວ, ພວກເຮົາຍັງເຫັນຮູບພາບຂອງແມ່ ຍິງລາວທີ່ "ນົມນວນ", ດຸໝັ່ນ, ອາດຫານ" ຕື່ມອີກ. ນັ້ນແມ່ນຮູບພາບຂອງພວກແມ່, ເອື້ອຍ, ນ້ອງ, ນາງສາວທີ່ນົມນວນ, ໃຈດີ, ແຕ່ເດັດດ່ຽວຕໍ່ສູ້ ເຂົາເຈົ້າຮັກຜົວ, ຖະໜອມລູກ, ບໍລິສຸດຕໍ່ຄວາມຮັກແລະຮັກບ້ານເກີດເມືອງນອນ; ແຕ່ກໍ່ຄຽດແຄ້ນ ສັດຕູຢ່າງເລິກເຊິ່ງ, ເຂົາມີຄວາມ ທຸກທໍລະມານໃຈໃນຊີວິດສ່ວນຕົວຂອງເຂົາເຈົ້າ, ແຕ່ເຂົາເຈົ້າໄດ້ພະຍາຍາມອົດທົນແລະກ້າຫານຜ່ານຜ່າ, ເຂົາເຈົ້າບໍ່ຍອມຫລົ້ມຈົມລົງ ໃນຄວາມທຸກທໍລະມານໃຈຕໍ່ຊີວິດສ່ວນຕົວຂອງເຂົາເຈົ້າ. ບໍ່ວ່າຢູ່ໃນ ສະພາບການໃດ, ຕົກຢູ່ໃນກໍລະນີທີ່ຫຍຸ້ງຍາກຄືແນວໃດກໍ່ຕາມ, ເວລາໃດ ເຂົາກໍ່ໄດ້ພະຍາຍາມຕໍ່ສູ້ກັບແນວຄິດຂອງຕົນ, ເພື່ອຄິດເຖິງວຽກງານ

ສ່ວນລວມ, ເພື່ອຄິດເຖິງຄວາມສຸກຂອງຄົນອື່ນ ແລະເພື່ອໄດ້ ເຂົ້າຮ່ວມການປະຕິວັດແລະສຸດທ້າຍເຂົາເຈົ້າລ້ວນແລ້ວກາຍເປັນແມ່ ຍິງໃນສະໄໝໃໝ່ແມ່ຍິງກ້າວໜ້າ, ນັ້ນຄື: ແມ່ເຖົ້າຊອງ (ໃນ ເລື່ອງບາດກ້າວໃໝ່ຂອງແມ່ຍິງລາວສູງ), ແມ່ເຖົ້ານີ (ໃນເລື່ອງຜ່ານ ຜ່າພາຍຸໄຟ), ແມ່ສິງ (ໃນເລື່ອງກອງ97), ເອື້ອຍຈີ (ໃນເລື່ອງທົ່ງເປັນເພື່ອນສູ້ຮົບ). ນາງນາ (ໃນເລື່ອງນາງນາແມ່ຍິງສາມເກົ້າ) ນາງຄຳໃບ (ໃນເລື່ອງໃບເລກທີ 15 ); ນາງສາວກອງຫລອນເລົາງານແມ່ຍິງຊຽງຂວາງແລະອື່ນໆ...

ການປະຕິວັດໄດ້ປົດປ່ອຍແມ່ຍິງ, ເຮັດໃຫ້ເອື້ອຍນ້ອງມີເງື່ອນ ໄຂເຂົ້າຮ່ວມທຸກການເຄື່ອນໄຫວ ຂອງການປະຕິວັດອ່ານເລື່ອງ" ບາດກ້າວໃໝ່ຂອງແມ່ຍິງລາວສູງ", ພວກເຮົາພົບແມ່ເຖົ້າຊອງ, ແມ່ເຖົ້າຊອງ ມີລູກສິບສອງຄົນ, ຢູ່ໃນສັງຄົມເກົ່າ, ແມ່ຕ້ອງໄດ້ທົນທານ ຕໍ່ຄວາມທຸກຍາກອັບຈົນຫລາຍສິ່ງຫລາຍຢ່າງ; ເວລາເກີດລູກບໍ່ມີເຂົ້າກິນພໍເມັດ, ປານນັ້ນແມ່ຍັງຕ້ອງໄປຊອກຢາຟືນ ສອງກິໂລ ເສຍພາສີໃຫ້ພວກອາດຍາເຈົ້ານາຍພາຍຫລັງໄດ້ຮັບການປົດປ່ອຍການປະຕິວັດໄດ້ສຶກສອນແລະສ້າງເງື່ອນໄຂໃຫ້ແມ່ເຂົ້າຮ່ວມການເຄື່ອນໄຫວຂອງສັງຄົມ ແມ່ເຖົ້າຊອງແຕ່ຄາວກ່ອນ ເປັນແມ່ຍິງຄົນໜຶ່ງທີ່ຮູ້ແຕ່ ລ້ຽງລູກ, ເຮັດວຽກເຮືອນການຊານແລະຫລົ້ມຈົມລົງໃນຄວາມທຸກທໍ ລະມານໃຈ, ແຕ່ມາເຖິງປະຈຸບັນ ເພິ່ນຮູ້ຈັກອ່ານຮູ້ຂຽນໜັງສືແລະ ໄດ້ຮັບເລືອກຕັ້ງເປັນສະມາຄົມ ເພດຍິງຂອງເມືອງຫລີແມ່ເຖົ້າສິງ (ໃນເລື່ອງກອງ 97). ເມື່ອຮູ້ວ່າລູກຊາຍຂອງແມ່ໄປຫລົງທາງ, ເປັນທະຫານໃຫ້ສັດຕູ, ຈັບປືນຕ້ານຄືນການປະຕິວັດ, ແມ່ຮູ້ສຶກເຈັບແຄ້ນໃຈ ທີ່

ສຸດ. ແຕ່ແມ່ເຖົ້າຮັບຮູ້ໄດ້ສິ່ງໜຶ່ງ. ທີ່ຖືກຕ້ອງທີ່ສຸດນັ້ນຄື: "... ການປະຕິວັດແມ່ນຢູ່ໃນດວງໃຈຂອງແມ່..." ແມ່ນການປະຕິວັດຢູ່ໃນດວງໃຈຂອງແມ່, ໃນດວງໃຈຂອງປວງຊົນທັງຊາດແລະໃນເນື້ອແປວ ໄຟແຫ່ງການປະຕິວັດໄດ້ລຸກຂຶ້ນໃນດວງໃຈຂອງໝົດທຸກຄົນແລ້ວ, ຈະບໍ່ມີກຳລັງປະຕິການໃດທີ່ຈະມາມອດໄດ້.

ການປະກອບສ່ວນເຂົ້າຮ່ວມການເຄື່ອນໄຫວສັງຄົມຂອງພວກ ແມ່ພວກເອື້ອຍ, ພວກນ້ອງເຖິງຈະໜ້ອຍຫລືຫລາຍປານໃດກໍ່ຕາມ, ພວກເຮົາຕ້ອງເຂົ້າໃຈວ່າບັນຫານັ້ນ ມັນບໍ່ແມ່ນຈະໄດ້ມາຢ່າງງ່າຍ ດາຍເພາະເຂົາເຈົ້າຕ້ອງຜ່ານຜ່າຄວາມຫຍຸ້ງຍາກຫລາຍສິ່ງຫລາຍ ຢ່າງຈຶ່ງຈະເຮັດໄດ້, ພວກແມ່, ພວກເອື້ອຍນ້ອງນອກຈາກເຮັດວຽກ ສ່ວນລວມແລ້ວ, ຍັງມີໜ້າທີ່ອັນໜັກໜ່ວງຂອງຜູ້ເປັນແມ່, ເປັນເມຍເປັນເອື້ອຍ, ຕໍ່ກັບຄອບຄົວເຮືອນຊານ ແລະ ກໍ່ຍ້ອນເຫດການນ້ອງທີ່ໜັກ ຂັດຂວາງຄວາມກ້າວໜ້າຂອງພວກແມ່ ແລະ ພວກ ເອື້ອຍນ້ອງໃນເລື່ອງ "ນາງແພດ" ຂອງສະຫາຍສຸວັນທອນ, ພວກເຮົາ ເຫັນນາງຄຳຜິວ (ແພດປະຈຳກອງ) ຕ້ອງຜ່ານຜ່າຄວາມຫຍຸ້ງຍາກ ຫລາຍສິ່ງຫລາຍຢ່າງ ເພື່ອເຮັດຫລ້ອນໜ້າທີ່ເປັນແພດ. ຜົວຂອງນາງ ຄຳຜິວເປັນພະນັກງານຢູ່ແນວໜ້າ, ນາງຄຳຜິວທັງລ້ຽງລູກສາມຄົນ ທັງເຮັດວຽກງານໃນເວລານັ້ນ, ເຮືອບິນຂອງຈັກກະພັດອາເມລິກາ ພັດຍິງທຳລາຍແຮງຢູ່ຂອບເຂດຂອງສຳນັກ, ແຕ່ເຊົ້າໆນາງຄຳຜິວ ຕ້ອງແຕ່ງເຂົ້າໃຫ້ພວກລູກກິນແລ້ວສົ່ງເຂົ້າໄປໂຮງຮຽນ, ຫລັງຈາກ ນັ້ນລາວພັດຈ່ຍລູກນ້ອຍ, ຖືໝໍ້ຕົ້ມເຂັມ, ພາຍຖົງຢາ ໄປປະຕິບັດ ໜ້າທີ່ນາງເຮັດວຽກທັງວັນແລະຄືນ, ບາງເທື່ອລູກກຳລັງໄຂ້, ແຕ່ມື້ຄືນມາ

ບອກ ໄປເບິ່ງຄົນເຈັບກ່ອນ, ນາງກໍ່ຈຳຕ້ອງຝາກລູກໃຫ້ຄົນອື່ນ ເບິ່ງ ຊ່ວຍສ່ວນຕົນເອງ ພາຍຫຼັງຢ່າ ໄປເບິ່ງຄົນເຈັບ, ຫລືໃນເລືອງ "ນາງສາວຜູ້ນ້ອຍໃນໂຮງງານຕໍ່າແຜ່ນ 12ຕຸລາ", ສະຫາຍຄຳໄປ້ໂພທິ ສັກ ໄດ້ເວົ້າເຖິງບັນຫາກ່ຽວກັບ ກຳມະກອນ, ນາງ ໄຊ (ຕົວລະຄອນ ໃນເລືອງ) ເປັນຄົນຊົນຊາດຜູ້ນ້ອຍ, ນາງບໍ່ເຄີຍເຮັດວຽກຕໍ່າຫູກ ເຂັນຝ້າຍແຕ່ເມື່ອນາງ ໄຊເຂົ້າມາຮ່ວມຊີວິດ ໃນຫັນແຖວປະຕິວັດ ນາງໄດ້ສ້າງຄວາມກ້າວໜ້າຢ່າງວ່ອງໄວ. ເບື້ອງຕົ້ນນາງ ໄຊຖືກຈັດເຂົ້າໜ່ວຍປັ່ນຫລອດໃຫຍ່, ແລ້ວເຂົ້າຢູ່ໜ່ວຍຕໍ່າແຜ່ນກີກະຕຸກ. ເມື່ອໂຮງງານ ໄດ້ເພີ້ມເຄື່ອງຈັກອັດຕະໂນມັດທັນສະໄໝ, ແລ້ວດ້ວຍກຳ ລັງໄຟຟ້າ; ນາງ ໄຊເປັນຜູ້ທຳອິດທີ່ຖືກຈັດເຂົ້າຢູ່ໜ່ວຍເຄື່ອງຈັກອັດ ຕະໂນມັດ ແລະມາໃນປະຈຸບັນ, ນາງ ໄຊສາມາດບັນຊາເຄື່ອງຈັກອັດຕະໂນມັດ ໄດ້ສອງເຖິງສີ່ເຄື່ອງ. ຄວາມກ້າວໜ້າຢ່າງວ່ອງໄວຂອງນາງຄຳຜົວ, ນາງ ໄຊແລະຂອງບັນດານາງສາວອື່ນໆ...ແມ່ນຮູບ ພາບຂອງຄົນແບບໃໝ່, ບຸກຄົນທີ່ໄດ້ເປັນເຈົ້າຂອງຕົນເອງ. ໄດ້ຮັບ ການປົດປ່ອຍຢ່າງສົມບູນ ແລະ ທຸກເວລາເຂົາເຈົ້າຊອກຫາເສັ້ນ ທາງເດີນໄປສູ່ອຸດົມຄະຕິອັນສູງສົ່ງ.

ຜ່ານບາງເລື່ອງທີ່ພວກເຮົາ ໄດ້ນຳມາຈຳແນກ, ພວກເຮົາເຫັນວ່າບັນຫາຊຶ່ງບັນດານັກຂຽນຕັ້ງຂຶ້ນແລະແກ້ໄຂແມ່ນຖືກຕ້ອງທີ່ສຸດ ແລະເໝາະສົມທີ່ສຸດ, ມັນເວົ້າເຖິງຄວາມຈິງກ່ຽວກັບແມ່ຍິງລາວຢູ່ ເຂດປົດປ່ອຍແລະສ້າງຮູບພາບແມ່ຍິງແບບໃໝ່, ບັນດາບົດເລື່ອງທີ່ ພວກເຮົາ ໄດ້ເວົ້າຜ່ານມາຍັງມີຄຸນປະໂຫຍດເປັນແບບຢ່າງໃຫ້ແກ່ ເອື້ອຍນ້ອງທົ່ວໄປ, ຕັດສິນໃຈບີນຕົວຂຶ້ນຕົນ, ແບກຫາບວຽກງານຢູ່ແນວຫລັງ

ເພື່ອໃຫ້ຜົວແລະລູກ ·ອຸ່ນອຽນໃຈອອກໄປສູ້ຣົບຢູ່ແນວໜ້າ.

ເກີດຂຶ້ນໃນທ່າມກາງທີ່ປະຊາຊົນທັງຊາດກຳລັງດຳເນີນການ ຕໍ່ສູ້ຕ້ານຢັນກັບສັດຕູໂຕຮ້າຍກາດຂອງຊາດ.ແມ່ຍິງລາວເວົ້າລວມໂດຍສະເພາະແມ່ນບັນດານາງສາວລາວທີ່ໜຸ່ມນ້ອຍ.ບັນດາເພດລືມ"ຕົນນ້ອຍແອ"ຄາວກ່ອນ.ໝົດມື້ມແຕ່ຮູ້ຈັກເຮັດແຕ່ວຽກເຮືອນການຊານວຽກໄຮ່ການນາ,ຕະຫລອດປີບໍ່ອອກຈາກບ້ານພໍບາດກ້າວໜຶ່ງ ມາເຖິງປະຈຸບັນເຂົາໄດ້ຮັບຮູ້ຢ່າງຈະແຈ້ງວ່າຄອບຄົວໃຫ້ຄວາມ ຮັກຂອງເຂົາໄວ້ໄດ້ໝັ້ນຄົງ,ຄວາມສຸກໃນຄອບຄົວໄດ້ຮັບປະກັນ, ກ່ອນອື່ນໝົດແມ່ນຕ້ອງກຳອາວຸດ,ແມ່ນຕ້ອງຕໍ່ສູ້ຢ່າງບໍ່ທໍ້ຖອຍເພື່ອປົດປ່ອຍຕົນເອງ,ປົດປ່ອຍບ້ານເກີດເມືອງນອນ. ເພາະສະນັ້ນໃນວັນນະຄະດີບໍ່ພຽງແຕ່ສ່ອງແສງຮູບພາບຂອງແມ່ຍິງລາວແບບໃໝ່ຢູ່ແນວ ຫລັງເທົ່ານັ້ນຢູ່ແນວໜ້າ ຢູ່ສະໜາມຣົບທີ່ດຸເດືອດພວກເຮົາຍັງແນມເຫັນເໝືອນກັນ.ແມ່ຍິງລາວສະໝັກເຂົ້າເປັນນັກຣົບປົດປ່ອຍສູ້ຣົບ ຄຽງບ່າຄຽງໄຫລ່ກັບລູກຜົວ,ອ້າຍນ້ອງ.ສະໝັກເຂົ້າກອງລຳລຽງ, ລຳລຽງອາວຸດອອກໄປແນວໜ້າ,ຕົວຢ່າງຄືເລື່ອງ:"ນາງສາວ ກອງຫລອນເລົ່າງານ"."ນາງສາວທົ່ງສາ".ແມ່ຍິງຊຽງຂວາງອາດຫານແລະອື່ນໆແລະເປັນຕົ້ນແມ່ນກອງລຳລຽງ3.68 ແລະກອງກຳລັງໄຟ 7.69 ຢູ່ເຂດຊຽງຂວາງ-ທົ່ງໄຫຫີນ,ດ້ວຍລູກກະສຸນປືນທີ່ຄຽດແຄ້ນເຂົາໄດ້ທັບມ້າງບັ້ນກວາດລ້າງຕ່າງໆຂອງສັດຕູ;ໃຊ້ຍຸດທະວິທີຈັບສັດຕູ;ຍິ່ງກ່ວານັ້ນເຂົາຍັງຍິງເຮືອບິນທັນສະໄໝຂອງຈັກກະພັດອາເມລິກາ.ດັ່ງນັ້ນພວກເຮົາອາດຈະເວົ້າໃຫ້ກວ້າງກ່ວານອກ,ບໍ່ວ່າຢູ່ ສະໜາມຣົບໃດທີ່ຕ້ານຈັກກະພັດອາເມລິກາ,ພວກເຮົາກໍ່ອາດຈະພົບບັນ

ດາຜູ້ເປັນແມ່, ເປັນເອື້ອຍບັນດານາງສາວທີ່ຫ້າວຫັນກຳລັງເດີນທາງ ອອກໄປສູ່ແນວຫນ້າ.

## ຈຸດດີເດັ່ນແລະບາງບັນຫາທີ່ຍັງຄ້າງຄາໃນ ວັນນະຄະດີປະຕິ ວັດ

ຜ່ານຊາວກ່ວາປີທີໄດ້ກຳເນີດແລະເຕີບໃຫຍ່ວັນນະຄະດີ ປະຕິວັດລາວແມ່ນບໍ່ສາມາດແຍກອອກຈາກແນວທາງຕໍ່ສູ້ປະຕິວັດແລະ ແນວທາງສິລະປະວັນນະຄະດີອັນຖືກຕ້ອງຂອງສູນກາງແນວລາວຮັກ ຊາດ ກົງກັນຂ້າມ, ມັນໄດ້ຢັ້ງຢືນໃຫ້ເຫັນວ່າແນວທາງການເມືອງຂອງ ສູນກາງແນວລາວຮັກຊາດແມ່ນຖືກຕ້ອງທີ່ສຸດ. ສອດຄ່ອງກັບຕົວຈິງ ການຕໍ່ສູ້ຂອງປະຊາຊົນລາວ.

ວັນນະຄະດີປະຕິວັດລາວເຖິງວ່າຫາກໍ່ກຳເນີດ, ໃຫ່ມທີ່ສຸດ, ແຕ່ໄດ້ ຮັບຜົນສຳເລັດອັນດີງາມ, ສຳຄັນກ່ວາໝູ່ແມ່ນມັນໄດ້ຢັ້ງຢືນວ່າຢູ່ ປະເທດລາວເຮົາໄດ້ມີວັນນະຄະດີແບບໃຫ່ມ, ວັນນະຄະດີປະຕິວັດທີ່ມີລັກສະນະຊາດ, ລັກສະນະສູ້ຮົບແລະລັກສະນະປະຊາຊົນແລະລັກສະນະວິທະຍາສາດຄືດັ່ງວັນນະຄະດີປະຕິວັດຂອງບັນດາປະເທດຊາດທີ່ກຳລັງດຳເນີນການຕໍ່ສູ້ປົດປ່ອຍຊາດ.

ວັນນະຄະດີປະຕິວັດລາວເຮົາເວລາໃດກໍ່ສ່ອງແສງຄວາມຈິງຂອງ ການຕໍ່ສູ້ ແລະ ການເພີ້ມພູນພະລິດຜົນຂອງກອງທັບ ແລະ ປະຊາຊົນ ລາວເຮົາທົ່ວປະເທດ. ເພື່ອສົ່ງເສີມນ້ຳໃຈກິຕິຄຸນແຫ່ງຊາດ, ເພາະ ສະນັ້ນທາງດ້ານເນື້ອໃນ, ຖ້າເບິ່ງລວມພວກເຮົາເຫັນວ່າວັນນະຄະດີ ປະຕິວັດໄດ້ຢັ້ງຢືນແລະທັງໄດ້ປະກອບສ່ວນເຂົ້າພາລະກິດຕໍ່ສູ້ກູ້ ຊາດ

ຂອງປະຊາຊົນທົ່ວຊາດແລະ ໄດ້ປະກອບສ່ວນເຂົ້າໃນການສ້າງ ສາ ລະບອບໃໝ່, ສັງຄົມໃໝ່, ຄົນແບບໃໝ່ຢູ່ເຂດປົດປ່ອຍ.

ຊີວິດການຕໍ່ສູ້ຂອງປະຊາຊົນລາວເຮົາ ໄດ້ສ່ອງແສງເຂົ້າໃນວັນນະ ຄະດີປະຕິວັດແມ່ນອຸດົມສົມບູນທີ່ສຸດ; ລວມມີຫລາຍດ້ານ, ຫລາຍ ພາກ ສ່ວນ ພ້ອມກັນນັ້ນກໍ່ ໄດ້ສຸມໃສ່ສ່ອງແສງບັນຫາຕົ້ນຕໍຄືການຕໍ່ສູ້ກູ້ ຊາດ ຕ້ານຈັກກະພັດອາເມລິກາຂອງປະຊາຊົນລາວເຮົາແລະການກໍ່ ສ້າງ ເຂດປົດປ່ອຍ.

ທາງດ້ານສິລະປະການແຕ່ງ, ວັນນະຄະດີປະຕິວັດລາວເຮົາກໍ່ ໄດ້ ຮັບພົນດີພໍຄວນໂດຍສືບທອດມູນເຊື້ອວັນນະຄະດີປະຊາສາມັນ, ວັນນະ ຄະດີສະໄໝຕໍ່ຕ້ານພວກລ່າເມືອງຂຶ້ນຝະລັ່ງ; ໃນວັນນະຄະດີປະຕິວັດ ຂອງພວກເຮົາໃນປະຈຸບັນ ໄດ້ມີຄົນແບບໃໝ່ປະກົດຂຶ້ນ, ຄົນແບບໃໝ່ ນັ້ນແມ່ນຄືພວກຊາວໜຸ່ມທີ່ອົກຫັກ, ເສຍຫວັງ ໃນວັນນະຄະດີບູຮານ ຫລືວ່າຄືພວກຊາວໜຸ່ມຈຳນວນໜຶ່ງທີ່ຂີ້ເຫລົ້າ, ເມົາຢາ, ຫລືຫລິ້ນໄພ້ ດຳລົງຊີວິດອັນຕໍ່າຕ້ອຍ ຢູ່ວຽງຈັນ ໃນເວລານັ້ນບັນດາບຸກຄົນຄື: ສີ ທອງ, ທ່ານຕູ້, ແມ່ເຖົ້າຊອງ, ນາງມາແລະອື່ນໆ ບັນດານັກຮົບຢູ່ກອງ ພັນທີ່ສອງວິລະຊົນ, ບັນດານັກຮົບທີ່ກຳລັງສູ້ຮົບຢູ່ແນວໜ້າຫລື ວ່າ ໜ່ວຍກອງຫລອນແມ່ຍິງ ຍິງຍິນຢູ່ຊຽງຂວາງແລະອື່ນໆເຂົາ ເຈົ້າ ລ້ວນແລ້ວເປັນຄົນທີ່ດຸໝັ່ນ, ພາກພຽນມີຈິດໃຈເບີກບານມ່ວນຊື່ນ, ສັດ ຊື່ບໍລິສຸດຕໍ່ຊາດ, ອາດຫານສູ້ຮົບຕ້ານສັດຕູທີ່ເຂົ້າມາຮຸກຮານປະ ເທດ ຊາດພວກເຂົາແມ່ນລູກຮັກຫລານແພງຂອງພໍ່ແມ່ປະຊາຊົນຢ່າງແທ້ຈິງ.

ແຕ່ວ່າຖ້າພວກເຮົາເອົາແຕ່ລະເລື່ອງມາ ໄຈ້ແຍກ, ຈຳແນກ, ພວກ ເຮົາຈະເຫັນມີດ້ານແຂງແລະດ້ານອ່ອນຕ່າງກັນ. ດ້ານອ່ອນກ່ວາ ໝູ່

ນັ້ນແມ່ນການພັນລະນາສ້າງຕົວລະຄອນເດັ່ນ. ຕົວລະຄອນໃນ ບົດເລື່ອງຕ່າງໆທີ່ເວົ້າຜ່ານມາ. ສ່ວນຫລາຍຍັງເປັນຕົວລະຄອນຊືໆ, ຍັງບໍ່ທັນມີຊີວິດຊີວາ, ຍັງບໍ່ທັນເວົ້າໄດ້ຈຸດພິເສດຂອງແຕ່ລະຕົວລະ ຄອນເຊັ່ນ: ຄວາມຮັກ, ຄວາມຄຽດຊັງ ແລະວາດຊົງຂອງເຂົາເຈົ້າ, ຄືດັ່ງອົງແກນໄດ້ເວົ້າວ່າ: "ຄົນຜູ້ນັ້ນ" ນອກນັ້ນຕົວລະຄອນໃນບົດເລື່ອງຍັງຕ້ອງມີ ລັກສະນະ ລວມຕື່ມອີກ. ລັກສະນະລວມຂອງທຸກຄົນໃນສັງຄົມຄືດັ່ງເບລິນສະກີໄດ້ວາງອອກ: "ຄົນຜູ້ໜຶ່ງແປກໜ້າ, ແຕ່ຊິນ ເຄີຍ" ພວກເຮົາຄວນພັນລະນາທາງດ້ານແນວຄິດ, ຈິດໃຈຂອງຕົວລະ ຄອນຕື່ມອີກ; ເຮັດໃຫ້ຕົວລະຄອນມີຊີວິດຊີວາກວ່າເກົ່າ.

ເວົ້າເຖິງປະເພດວັນນະຄະດີ; ໃນວັນນະຄະດີປະຕິວັດຂອງ ພວກເຮົາສ່ວນຫລາຍແມ່ນແຕ່ງຕາມແບບເລົ່າເລື່ອງຈິງຄົນແທ້. ຂາດ ບົດເລື່ອງສັ້ນ, ນະວະນິຍາຍທີ່ມີລັກສະນະປັ້ນແຕ່ງ, ດັ່ງນັ້ນເຮັດໃຫ້ ບົດເລື່ອງບໍ່ມີຊີວິດຊີວາປານໃດ.

ຕໍ່ກັບຫົວເລື່ອງກໍ່ເຊັ່ນດຽວ, ຍັງບໍ່ທັນສ່ອງແສງໄດ້ທຸກດ້ານ, ຍັງ ບໍ່ທັນເປີດກວ້າງຫົວເລື່ອງ. ສ່ວນຫລວງຫລາຍພວກເຮົາມັກແຕ່ງເລື່ອງສູ້ຮົບ, ເລື່ອງຈັບນັກສືບສອດແນມ, ພວກປຸ້ນ, ຄວາມຈິງ. ໃນສະ ພາບເວລານັ້ນຫົວເລື່ອງສູ້ຮົບເປັນຈຸດສຳຄັນທີ່ພວກເຮົາຄວນເອົາໃຈ ໃສ່ກ່ວາໝູ່, ແຕ່ໃນດ້ານອື່ນເຊັ່ນ: ດ້ານກະສິກຳ, ເສດຖະກິດ, ດ້ານ ສາທາລະນະສຸກ, ດ້ານສຶກສາ, ການກໍ່ສ້າງສັງຄົມໃຫມ່ຢູ່ເຂດປົດ ປ່ອຍແລະດ້ານອື່ນໆ... ທີ່ຢູ່ແນວຫລັງ, ຮັບໃຊ້ໃຫ້ແກ່ການສູ້ຮົບຢູ່ແນວໜ້າກໍ່ເປັນບັນຫາທີ່ສຳຄັນ ແລະ ນັກແຕ່ງທັງຫລາຍຄວນເອົາໃຈໃສ່ ຕື່ມອີກ. ສະເພາະໜ້າທີ່ຂອງວັນນະຄະດີປະຕິວັດແມ່ນຕ້ອງສ່ອງແສງໃຫ້

ໃໝ່, ວຽກງານໃໝ່ທີ່ປະກົດຂຶ້ນໃນສັງຄົມໃໝ່.

ດ້ານສິລະປະການແຕ່ງ, ພວກເຮົາເຫັນວ່າເວົ້າລວມຍັງຕ່ຳ, ເປັນຕົ້ນແມ່ນການສ້າງໂຄງຮ່າງຂອງເລື່ອງ ຍັງບໍ່ທັນແໜ້ນດີ, ຕົວ ລະຄອນຍັງບໍ່ທັນມີຊີວິດຊີວາ, ການພັນລະນາພາບຍັງບໍ່ທັນມ່ວນ, ຍັງບໍ່ທັນໝູນໃຊ້ການພັນລະນາແບບເພື່ອຮັບໃຊ້ຕົວເລື່ອງ, ພາສາຄຳເວົ້າໃນບົດເລື່ອງຍັງບໍ່ທັນມ່ວນ, ບໍ່ທັນດູດດື່ມໃຈຂອງຜູ້ອ່ານ.

ເຫດຜົນ ທີ່ພາໃຫ້ມີຈຸດອ່ອນເຫລົ່ານີ້ກໍຍ້ອນວ່າ ນັກຂຽນຂອງພວກເຮົາສ່ວນຫລາຍຍັງບໍ່ທັນ ມີຄວາມຊິນເຄີຍໃນການແຕ່ງ; ບາງ ເທື່ອພວກເຮົາແຕ່ງແລ້ວ, ແຕ່ບໍ່ທັນ ໄດ້ເອົາໃຈໃສ່ດັດແປງໃຫ້ມັນມີສິລະປະຫລືບາງເທື່ອພວກເຮົາຍັງແລ່ນຕາມປະລິມານ, ຍັງບໍ່ທັນໄດ້ເອົາ ໃຈໃສ່ຕໍ່ຄຸນນະພາບຂອງເລື່ອງ, ແຕ່ເຖິງຢ່າງໃດກໍ່ຕາມ, ຈຸດອ່ອນທີ່ພວກເຮົາເວົ້າມາເທິງນີ້, ມັນເປັນຈຸດສຳລອງເທົ່ານັ້ນ, ຕໍ່ກັບວັນນະຄະດີທີ່ຫາກໍ່ສ້າງຂຶ້ນໃໝ່ແມ່ນບໍ່ອາດຈະຫລີກເວັ້ນໄດ້ຈຸດອ່ອນ ເຫລົ່າ ນັ້ນ ແລະພວກເຮົາກໍ່ເຊື່ອໝັ້ນວ່າໃນຕໍ່ໜ້ານີ້, ນັກຂຽນທັງຫລາຍ ຂອງ ພວກເຮົາຈະມີຄວາມສາມາດດັດແປງໄດ້ຈຸດອ່ອນ ດັ່ງກ່າວ ແລະຈະນຳອອກມາສະເໜີນຳຜູ້ອ່ານທັງຫລາຍໆບົດເລື່ອງທີ່ດີເດັ່ນ ມີ ເນື້ອໃນດີແລະມີສິລະປະສູງ.

## -ສະຫລຸບ

ທ່າມກາງຂະບວນການຕໍ່ສູ້ປົດປ່ອຍຊາດ, ຕ້ານການຮຸກຮານ ຂອງຈັກກະພັດອາເມລິກາ ແລະ ພວກລູກມືຂາຍຊາດທີ່ກຳລັງມືດ ເດືອດທົ່ວປະເທດ, ບັນດານັກຮົບວັນນະຄະດີຂອງພວກເຮົາ ໄດ້ນຳເອົາ ບົດເລື່ອງຕ່າງໆທີ່ຍັງເຕັມ ໄປດ້ວຍກິ່ນຄວັນສູ້ຮົບມາໃຫ້ພວກເຮົາອ່ານບົດເລື່ອງເຫລົ່ານີ້ ໄດ້ຢັ້ງຢືນໃຫ້ພວກເຮົາເຫັນວ່າວັນນະຄະດີຂອງ ພວກເຮົາ ໄດ້ແຜ່ຂະຫຍາຍຖືກຕາມກົດເກນຂະຫຍາຍຂອງສັງຄົມ, ຊີວິດໃນສັງຄົມສູງກວ່າວັນນະຄະດີແລະວັນນະຄະດີຈະເຕີບໃຫຍ່ໄດ້ກໍ່ຕໍ່ ເມື່ອມັນສ່ອງແສງ ໄດ້ຊີວິດອັນສູງສົ່ງຂອງສັງຄົມ.

ຄຽງຂ້າງກັບວັນນະຄະດີປະຊາສາມັນທີ່ອຸດົມສົມບູນວັນນະຄະດີສາສະໜາ ແລະ ວັນນະຄະດີປະຕິກິລິຍາຊອດກະຈາຂອງພວກ ຫຸ່ນວຽງຈັນ ແລະເຂດທີ່ພວກສັດຕູຄອບຄຸມຊົ່ວຄາວ, ຢູ່ປະເທດລາວເຮົາໄດ້ມີວັນນະຄະດີປະຕິວັດທີ່ຂຽນດ້ວຍພາສາລາວ, ວັນນະຄະດີປະຕິວັດຂອງພວກເຮົາມັນແຕກຕ່າງກັບວັນນະຄະດີສາສະໜາຫລືວັນນະຄະດີຂອງພວກຫຸ່ນວຽງຈັນ, ວັນນະຄະດີປະຕິວັດ ໄດ້ນຳເອົາບັນຍາກາດໃໝ່, ສ່ອງແສງແຈ້ງສະຫວ່າງເຂົ້າໃນປະຫວັດສາດຂອງວັນນະຄະດີແຫ່ງຊາດ. ຖ້າເມື່ອໃດພວກເຮົາອ່ານບົດເລື່ອງຕ່າງໆທີ່ຂຽນດ້ວຍພາສາຝະລັ່ງ, ອັງກິດຫລືພາສາໄທທີ່ຂາຍຊາດຂອງພວກຫຸ່ນວຽງຈັນ ໃນສະໄໝກ່ອນພວກເຮົາຈຶ່ງສາມາດເຫັນໄດ້ຄຸນປະໂຫຍດຂອງ ບົດເລື່ອງວັນນະຄະດີປະຕິວັດຂອງພວກເຮົາ

## - ເອກະສານໃຊ້ໃນການຄົ້ນຄວາ

1. ມາກ-ອັງແກນ-ເລນິນ ແລະ ສິລະປະວັນນະກຳ.

2. ສູນທອນວິດທະຍາ (4 ເຫລັ້ມ)

3. ທິດສະດີວັນນະຄະດີ (4 ເຫລັ້ມ)

4. ໂຄງການການເມືອງຂອງແນວລາວຮັກຊາດ.

5. ຫນຶ່ງສ່ວນສີຂອງວັດຕະວັດແຫ່ງການຕໍ່ສູ້ຢ່າງເດັດດ່ຽວຫນຽວແຫນ້ນ ແລະມີໄຊ, ໂດຍ ທ່ານ ໄກສອນພົມວິຫານ.

6. "ທິດສະດີນິກເຊິນ" ພວກລົ້ມທະລາຍຢ່າງຫນັກຫນ່ວງຢູ່ ລາວ ໂດຍສະເດັດເຈົ້າສຸພານຸວົງ.

7. ບົດໂອ້ລົມຂອງທ່ານ ໄກສອນພົມວິຫານຕໍ່ຊາວຫນຸ່ມໃນວັນ ທີ 15-3-1971.

8. ປະເທດລາວແລະການຕໍ່ສູ້ມີໄຊຂອງປະຊາຊົນລາວຕ້ານ ລັດທິລ່າເມືອງຂຶ້ນແບບໃຫ່ມຂອງຈັກກະພັດອາເມລິກາ ໂດຍ ທ່ານພູ ມີ ວົງວິຈິດ.

9. ແນວລາວຮັກຊາດແລະເສັ້ນທາງສັນຕິພາບຂອງປະເທດລາວ

10. ຈັກກະພັດອາເມລິກາແຊກແຊງ ແລະ ຮຸກຮານປະເທດລາວ ໃນ 12 ປີຜ່ານມາ.

# ສາລະບານ


ພາກ I — ໜ້າ.

1. ກ່າວສັງເຂບກ່ຽວກັບປະເທດລາວ 1

ກ) ບາງຈຸດກ່ຽວກັບພູມີສາດ

ຂ) ປະຫວັດການຕໍ່ສູ້ຂອງປະຊາຊົນລາວ

ຄ) ກ່າວໂດຍສັງເຂບກ່ຽວກັບປະຫວັດວັນນະຄະດີລາວ

ພາກ II

1. ເນື້ອໃນປະກົດການເປັນຈິງໃນວັນນະຄະດີປະຕິວັດ 29

1. ຫົວເລື່ອງທີ່ເວົ້າເຖິງ "ໄປຊອກຫາແສງສະຫວ່າງຂອງການປະຕິວັດ 30

2. ຫົວເລື່ອງຕໍ່ສູ້ 48

3. ຫົວເລື່ອງທີ່ເວົ້າເຖິງບັນດາຊົນຊາດ 68

4. ຊີວິດໃໝ່ແລະຄົນແບບໃໝ່ຢູ່ເຂດປົດປ່ອຍ 75

2. ຕົວລະຄອນເອກໃນວັນນະຄະດີປະຕິວັດ 82

1. ຕົວລະຄອນໄວໜຸ່ມ ໃນວັນນະຄະດີປະຕິວັດ 83

2, ບາງປະກົດການກ່ຽວກັບຕົວລະຄອນແມ່ຍິງ ໃນວັນນະຄະດີປະຕິວັດລາວ. 92

3. ຈຸດດີເດັ່ນແລະບາງບັນຫາຄ້າງຄາໃນວັນນະຄະດີປະຕິວັດ 98

ພິມທີ່ ວິສາຫະກິດການພິມຈຳໜ່າຍສຶກສາ